# ບົດສະຫຼຸບ 1999



## ອ.ກ.ລ

ອົງການເກັບກູ້ລະເບີດ ແຫ່ງ ສ ປ ປ ລາວ




ອຸປະກອນສິດສອນກ່ຽວກັບຄວາມຮູ້ເລື່ອງລະເບີດຢູ່ຫ້ອງຮຽນແຂວງຫົວພັນ. ລູກລະເບີດບອມບີທີ່ເຮັດດ້ວຍໄມ້, ໝາກແຕກມື ແລະ ລູກປືນຄົກ ຖືກປະໄວ້ດ້ານຂ້າງຂອງສໍແຕ້ມ ແລະ ລູກຄິດ, ຊ່ວຍໃຫ້ຄູສອນສາມາດສິດຄວາມຮູ້ເພື່ອຫຼຸດຜ່ອນການສ່ຽງໄພຈາກລູກລະເບີດທີ່ບໍ່ທັນແຕກໄດ້. ພາບໜ້າປົກ ແລະ ພາບນີ້ ໂດຍ: ຈິມ ໂຮມ ຢູນິເຊັບ

# ປີແຫ່ງການທົບທວນ

ໃນປີ 1999 ອົງການເກັບກູ້ລະເບີດລາວ (ອກລ) ໄດ້ປະຕິບັດແຜນງານຄົບຊຸດດ້ານເກັບກູ້, ສຶກສາຊຸມຊົນ, ສຳ ຫຼວດ ແລະຝຶກອົບຮົມໃນ 9 ແຂວງດ້ວຍຜົນສຳເລັດລື່ນຄາດໝາຍເປັນສ່ວນໃຫຍ່.

| | | |
|---|---|---|
| ໜ່ວຍເກັບກູ້ເຄື່ອນທີ່ | 542 | 1,666 ບ້ານ |
| ໜ່ວຍເກັບກູ້ພື້ນດິນ | 455 | 578 ເຮັກຕາ |
| ທຳລາຍລູກລະເບີດ | - | 89.093 ລູກ |
| ຄ ສ ຊ | 588 | 742 ບ້ານ |
| ຈຳນວນຄົນຮັບຟັງ | 150.000 | 178.000 |
| ຝຶກອົບຮົມ | 230 | 252 ຜູ້ສຳເລັດ |
| | ແຜນການ | ປະຕິບັດຕົວຈິງ |

ພວກເຮົາໄດ້ສະໜອງຜົນປະໂຫຍດໃຫ້ຫຼາຍຮ້ອຍຊຸມຊົນໃນດ້ານການກຳຈັດຄວາມສ່ຽງພາຍຫຼັງໄດ້ເກັບກູ້ລະເບີດ, ຜົນປະໂຫຍດດ້ານການຫຼຸດຜ່ອນຄວາມສ່ຽງຍ້ອນວຽກສຶກສາຊຸມຊົນ, ແລະສຳຄັນຍິ່ງໄປກວ່ານັ້ນແມ່ນໄດ້ປະກອບສ່ວນເຂົ້າໃນການພັດທະນາ ແລະການສ້າງລາຍຮັບ.

ໜ່ວຍງານຂອງພວກເຮົາໄດ້ເກັບກູ້ລະເບີດອອກຈາກເນື້ອທີ່ເພື່ອການພັດທະນາລວມໃນນັ້ນມີເນື້ອທີ່ສຳລັບວາງທໍ່ນ້ຳສະອາດ, ສຳລັບກໍ່ສ້າງລະບົບຊົນລະປະທານ, ສ້າງສິ່ງອຳນວຍຄວາມສະດວກດ້ານອານາໄມ, ຂະຫຍາຍເດີ່ນໂຮງຮຽນ, ເພື່ອສ້າງໂຮງໝໍ ແລະຕະຫຼາດ. ນອກນັ້ນແລ້ວກໍ່ເກັບກູ້ລະເບີດເພື່ອທັນເອົາເນື້ອທີ່ດິນໄປຜະລິດກະສິກຳເຊັ່ນ ປູກເຂົ້າ ແລະພືດສິນຄ້າເຊັ່ນ ກາເຟ, ໝາກກ້ຽງ ແລະໝາກໄມ້ອື່ນໆ.

ພວກເຮົາໄດ້ປັບປຸງຂັ້ນຕອນການວາງແຜນວຽກແບບປະສົມປະສານໃຫ້ດີກວ່າເກົ່າໃນເວລາວາງແຜນບໍລິຫານຄຸ້ມຄອງ ແລະຕີລາຄາທຸກໆວຽກງານເກັບກູ້, ສຳຫຼວດກໍ່ຄືກິດຈະກຳສຶກສາຊຸມຊົນ. ຂັ້ນຕອນດັ່ງກ່າວນີ້ຖືສຳຄັນການປຶກສາຫາລືຢ່າງກວ້າງຂວາງກັບຊຸມຊົນເພື່ອຊ່ວຍກຳນົດບູລິມະສິດບ່ອນທີ່ຕ້ອງເກັບກູ້ ທັງນີ້ແມ່ນເພື່ອຮັບປະກັນໃຫ້ໄດ້ຜົນປະໂຫຍດສູງສຸດ.

ພວກເຮົາໄດ້ປະສານສົມທົບກັບອົງກອນພັດທະນາຕ່າງໆທີ່ມີຈຸດປະສົງຢາກຊ່ວຍຫຼາຍໆໂຄງການພັດທະນາສັງຄົມ ແລະເສດຖະກິດ. ພວກເຮົາສືບຕໍ່ປະຕິບັດສິດທີ່ໄດ້ຮັບການມອບໝາຍ ນັ້ນຄືການເກັບກູ້ລະເບີດເພື່ອຈຸດປະສົງດ້ານມະນຸດສະທຳ ແລະໄດ້ປ່ອຍໃຫ້ຜູ້ສະໜອງການບໍລິການເຮັດວຽກເກັບກູ້ ເພື່ອຜົນປະໂຫຍດດ້ານການຄ້າ.

ພວກເຮົາປະຕິບັດງານຮ່ວມກັບຄູ່ຮ່ວມງານສາກົນອື່ນໆ ເຊັ່ນອົງການທີ່ປຶກສາດ້ານລະເບີດ (MAG), Gerbera, ອົງການຄົນພິການສາກົນ (HI) ຂອງປະເທດແບນຈ້ຽມ, ອົງການຊ່ວຍເຫຼືອປະຊາຊົນນໍເວ (NPA), ອົງການທີ່ປຶກສາການທະຫານແບນຈ້ຽມ (BMA), ອົງການສຸພານິມິດ ອອສເຕຣເລຍ (World Vision Australia), ອົງການ UNDP, UNICEF ແລະອົງການອາສາສະໝັກສປຊ (UNV).




ໃນຄວາມພະຍາຍາມປັບປຸງການຈັດຕັ້ງ, ໄດ້ມີການນຳໃຊ້ລະບົບຄຸ້ມຄອງການເງິນແບບໃໝ່. ບັນຊີການເງິນຂອງອກລ ໄດ້ມີການກວດກາຢ່າງຄົບຖ້ວນໂດຍຜູ້ກວດກາບັນຊີຂອງບໍລິສັດ PriceWaterhouseCoopers. ແຕ່ລະປີຈະມີການກວດກາບັນຊີຈາກພາຍນອກ, ແລະຈະສືບຕໍ່ປັບປຸງການຈັດຕັ້ງອີກຕໍ່ໆໄປ.

ໃນປີນີ້ພະນັກງານ ອກລ ໄດ້ເຂົ້າຮ່ວມການອົບຮົມ ແລະກອງປະຊຸມລະດັບສາກົນຫຼາຍປະເພດຫຼາຍຄັ້ງ ເພື່ອໃຫ້ທັນກັບສະພາບໃນຂະແໜງເກັບກູ້ລະເບີດ, ພວກເຮົາຍັງໄດ້ເຊີນຄະນະຜູ້ແທນການທູດ, ນັກຂ່າວ ແລະອົງການຈັດຕັ້ງສາກົນເຂົ້າມາຢ້ຽມຢາມໃນນັ້ນກໍ່ລວມທັງຕົວແທນຈາກປະເທດເຢຍລະມັນ, ເດນມາກ, ອັງກິດ, ສະຫະພັນຢູໂຣບ, ນໍເວ, ອອສເຕຣເລຍ, ເບນຢຽມ, ການາດາ, ລັກຊຳເບີກ, ສະຫະລັດອາເມຣິກາ, ນິວຊີແລນ ແລະຍີ່ປຸ່ນ.



ພາລະໜ້າທີ່ຂອງເຮົາແມ່ນຫຼຸດຜ່ອນຈຳນວນການຕາຍ ແລະບາດເຈັບ ແລະບຸກເບີກເນື້ອທີ່ດິນ ເພື່ອການກະສິກຳ ແລະພັດທະນາ ຊຶ່ງໜ້າທີ່ນີ້ກໍ່ຍັງຄົງຍືດໝັ້ນຢູ່ ແລະເປັນວຽກທ້າທາຍອີກຕໍ່ໄປຢູ່ ຍ້ອນວ່າລູກລະເບີດບໍ່ທັນແຕກຕົກຄ້າງຢູ່ໃນປະເທດໃນປັດຈຸບັນຍັງມີຢ່າງຫຼວງຫຼາຍ. ພ້ອມກັນນັ້ນວຽກງານເກັບກູ້ລະເບີດແມ່ນສ່ວນນຶ່ງຂອງຄວາມພະຍາຍາມເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ສະໜອງການບໍລິການດ້ານສັງຄົມໃຫ້ແກ່ຊຸມຊົນພາຍໃນສປປລາວ.

# ຄຳນຳ

ຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງ ທີ່ໄດ້ສະເໜີບົດລາຍງານປະຈຳປີ 1999 ກ່ຽວກັບແຜນງານໂຄງການແຫ່ງຊາດດ້ານການເກັບກູ້ລະເບີດບໍ່ທັນແຕກ ໃນລາວ.

ຂ້າພະເຈົ້າຢາກຖືໂອກາດນີ້ຂອບໃຈຄູ່ຮ່ວມປະຕິບັດງານໃນການປະກອບສ່ວນຂອງເຂົາເຈົ້າ ແລະຂອບໃຈລັດຖະບານ ສປປ ລາວ, ລັດຖະບານປະເທດຕ່າງໆ ກໍຄືອົງການ ສປຊ ເພື່ອການພັດທະນາ (UNDP), ອົງການແມ່ແລະເດັກ (UNICEF) ກໍຄືອົງການຈັດຕັ້ງສາກົນຕ່າງໆ ທີ່ໄດ້ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍແກ່ໂຄງການ ອກລ.

ສະເພາະປີນີ້ ຂ້າພະເຈົ້າຂໍຊົມເຊີຍເປັນພິເສດ ພະນັກງານຂອງພວກເຮົາ ທີ່ໄດ້ຍາດແຍ່ງເອົາຜົນງານໄດ້ລື່ນຄາດໝາຍ: ພະນັກງານເກັບກູ້ໄດ້ເກັບກູ້ລະເບີດໃນເນື້ອທີ່ດິນບູລິມະສິດຫຼາຍກ່ວາ 570 ເຮັກຕາ, ພະນັກງານໂຄສະນາສຶກສາຊຸມຊົນໄດ້ເຜີຍແຜ່ດ້ານຫຼຸດຜ່ອນຄວາມສ່ຽງໃຫ້ຫຼາຍກ່ວາ 170.000 ຄົນໄດ້ຟັງ, ພະນັກງານທີ່ສູນຝຶກອົບຮົມແຫ່ງຊາດ ໄດ້ອົບຮົມຫຼາຍກ່ວາ 250 ຄົນ, ນອກນັ້ນກໍແມ່ນພະນັກງານການເງິນ ສຳພາລະແລະຄຸ້ມຄອງທີ່ໄດ້ປະກອບສ່ວນເຮັດໃຫ້ວຽກງານເດີນແມ່ນແລ່ນສະດວກ.

ພະນັກງານພວກເຮົາຫຼາຍກ່ວາ 95% ເຮັດວຽກພາກສະໜາມຢູ່ 9 ແຂວງ ສ່ວນຫຼາຍແມ່ນຢູ່ເມືອງຫ່າງໄກສອກຫຼີກໄຕ້ເງື່ອນໄຂຫຍຸ້ງຍາກທີ່ສຸດ.ວຽກງານຂອງເຂົາເຈົ້າແມ່ນມີໄພອັນຕະລາຍ ແລະເຂົາເຈົ້າຕ້ອງຈາກຄອບຄົວຫຼາຍໆອາທິດ. ການທີ່ເຂົາເຈົ້າໄດ້ສູ້ຊົນສືບຕໍ່ເລືອກເຮັດວຽກນຳ ອກລ ແມ່ນສິ່ງທີ່ໜ້າປະທັບໃຈ ແລະໃນລາຍງານນີ້ ທ່ານຈະໄດ້ເຫັນບົດສຳພາດພະນັກງານພວກເຮົາ ໃນນັ້ນເຂົາເຈົ້າໄດ້ເລົ່າເຖິງຄວາມພາກພູມໃຈ ທີ່ໄດ້ມີສ່ວນປະກອບເຮັດໃຫ້ປະເທດຊາດມີສະພາບປອດໄພ, ແລະຄວາມຮູ້ສຶກວ່າເຂົາເຈົ້າໄດ້ມີສ່ວນໃນໜ້າວຽກມະນຸດສະທຳອັນສຳຄັນ.

ພ້ອມດຽວກັນ ເຮົາກໍ່ຂໍຮັບຮູ້ຊົມເຊີຍ ການຕັດສິນໃຈສູງແລະຄວາມບຸກບືນຂອງທີ່ປຶກສາວິຊາການສາກົນ ພ້ອມພະນັກງານເຂົາເຈົ້າ ທີ່ໄດ້ຮ່ວມມືກັບໜ່ວຍງານຂອງພວກເຮົາເພື່ອເຮັດໃຫ້ຫຼາຍໆຊຸມຊົນໃນທົ່ວປະເທດມີຄວາມປອດໄພຫຼາຍກ່ວາເກົ່າ ແລະຊ່ວຍເພີ່ມທະວີຄວາມຢູ່ດີກິນດີດ້ານເສດຖະກິດຂອງປະຊາຊົນ.

ຂ້າພະເຈົ້າຂໍລາຍງານຕໍ່ລັດຖະບານຂອງຂ້າພະເຈົ້າແລະອົງການຊ່ວຍເຫຼືອຂອງພວກເຮົາດ້ວຍຄວາມໝັ້ນໃຈວ່າ ການລົງທຶນຜ່ານມານັ້ນແມ່ນໄດ້ໃຊ້ໃນທາງທີ່ດີສຸດ: ບໍ່ພຽງແຕ່ພວກເຮົາໄດ້ກອບກູ້ຊີວິດຄົນ ແຕ່ຍັງໄດ້ປົວແປງຊີວິດການເປັນຢູ່ຂອງປະຊາຊົນທີ່ທຸກຍາກທີ່ສຸດໃນຈຳນວນຄົນທຸກຈົນ.



ກໍລະນີສຶກສາໃນໜ້າ 6 ແລະໜ້າ 7 ຊີ້ໃຫ້ເຫັນເຖິງຜົນປະໂຫຍດບາງຢ່າງ ຊຶ່ງທ່ານຜູ້ອ່ານຈະຮູ້ສຶກປະທັບໃຈ.

ຂັ້ນຕອນຂອງການວາງແຜນວຽກຂອງເຮົາຮັບປະກັນໃຫ້ມີການປຶກສາຫາລືກັບຜູ້ຄົນແລະຊຸມຊົນທີ່ໄດ້ຮັບຜົນກະທົບ ທັງນີ້ກໍເພື່ອຮັບປະກັນໃຫ້ວຽກເກັບກູ້ມີຈຸດສຸມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ທີ່ຖືເປັນບູລິມະສິດສູງທີ່ສຸດ ແລະເປັນບ່ອນທີ່ຈະໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ. ເຖິງແມ່ນວ່າວິທີການດັ່ງກ່າວ ອາດເວົ້າບໍ່ໄດ້ວ່າມັນດີເລີດເທື່ອກໍ່ຕາມ ແຕ່ຂ້າພະເຈົ້າເຊື່ອວ່າມັນຈະນັບມື້ນັບດີ ຍ້ອນຄວາມພະຍາຍາມຂອງພວກເຮົາທີ່ຈະປັບປຸງມັນ.

ພາລະຊອງພວກເຮົາແມ່ນວຽກເກັບກູ້ເພື່ອມະນຸດສະທຳ, ດັ່ງນັ້ນໃນການເກັບກູ້ນັ້ນ ຈະຖືເອົາເນື້ອທີ່ປູກຝັງ, ດິນສ່ວນລວມຂອງຊຸມຊົນເຊັ່ນບ່ອນສ້າງໂຮງຮຽນ, ຕະຫຼາດແລະໂຮງໝໍ ເປັນບູລິມະສິດ. ນອກນັ້ນກໍໄດ້ເກັບກູ້ເພື່ອຊ່ວຍໂຄງການພັດທະນາຕ່າງໆ ເຊັ່ນໂຄງການປູກສ້າງສິ່ງອຳນວຍຄວາມສະດວກດ້ານອານາໄມ, ກໍ່ສ້າງລະບົບສະໜອງນ້ຳສະອາດ, ກໍ່ສ້າງລະບົບຊົນລະປະທານ ແລະໂຄງລ່າງອື່ນໆ. ໂຄງການພັດທະນາຊົນນະບົດສ່ວນຫຼາຍມີອັນພົວພັນເຖິງດິນ, ດັ່ງນັ້ນພວກເຮົາໄດ້ຊ່ວຍເຮັດໃຫ້ດິນ

ໃນຂົງເຂດເຫຼົ່ານັ້ນມີຄວາມປອດໄພ.

ບົດລາຍງານນີ້ມີການສະຫຼຸບການເງິນຂອງປີໄປຮອດວັນທີ 30 ເດືອນ 9, 1999 ແລະຂໍຢໍ້າອີກວ່າຕົວເລກຕ່າງໆນັ້ນໄດ້ຜ່ານການກວດສອບຢ່າງຄົບຖ້ວນໂດຍ UNDP ແລະບໍລິສັດ PriceWaterhouseCoopers ມາແລ້ວ. ແຕ່ລະປີຈະມີການກວດສອບບັນຊີຢ່າງຄົບຖ້ວນ. ພວກເຮົາໄດ້ຂໍໃຫ້ຜູ້ກວດສອບເບິ່ງທັງໃນແງ່ປະຕິບັດແລະໃນດ້ານບໍລິຫານຄຸ້ມຄອງ ຊຶ່ງໄດ້ເຮັດໃຫ້ມີຂໍ້ສະເໜີດີໆຫຼາຍຢ່າງ ເພື່ອເຮົາຈະໄດ້ແກ້ໄຂຈຸດບົກຜ່ອງ ຊຶ່ງບາງອັນພວກເຮົາກໍ່ຮູ້ຢູ່ແລ້ວແລະໄດ້ແກ້ໄຂໄປແລ້ວ ແລະສ່ວນທີ່ຍັງບໍ່ທັນໄດ້ແກ້ໄຂເທື່ອນັ້ນ ແມ່ນຈະໄດ້ສູ້ຊົນອີກຕໍ່ໄປພາຍໃຕ້ແຜນງານປັບປຸງການຈັດຕັ້ງໃນປັດຈຸບັນ.

ຂ້າພະເຈົ້າເຊື່ອວ່າທ່ານຈະສັງເກດເຫັນຫຼາຍຈຸດທີ່ເປັນໜ້າສົນໃຈໃນລາຍງານນີ້ແລະຈະໄດ້ຮຽນຮູ້ຫຼາຍຢ່າງ. ພວກເຮົາໄດ້ສູ້ຊົນໃຫ້ຜູ້ຄົນທີ່ໄດ້ຮັບເຄາະຮ້າຍມີປາກມີສຽງ ແລະວຽກພວກເຮົາໄດ້ເກີດປະໂຫຍດໃຫ້ຜູ້ຄົນທັງຫຼາຍ, ທັງສອງຢ່າງນີ້ແມ່ນເຫດຜົນຂອງການສືບຕໍ່ເຮັດວຽກຂອງ ອກລ ແລະກໍ່ແມ່ນເຫດຜົນທີ່ເຮົາຈຳເປັນຕ້ອງສືບຕໍ່ເຮັດວຽກອີກຕື່ມຫຼາຍໆປີໄປທາງໜ້າ.

ບຸນປອນ ໄຊຍະເສນ<br>
ອຳນວຍການ ອ.ກ.ລ

## ຫຼຽວເບິ່ງໄປຂ້າງໜ້າ

ລາຍງານສະບັບນີ້ບັນລະຍາຍໃຫ້ເຫັນເຖິງຄວາມຄືບໜ້າຂອງໂຄງການໃນທົ່ວຂະແໜງການແລະໃນທຸກແຂວງ. ເນື້ອໃນເອກະສານນີ້ຈະເຮັດໃຫ້ທ່ານຮູ້ສຶກມີຄວາມຫວັງ, ຈະເຫັນໄດ້ເຖິງຜົນງານແລະຄວາມບົ່ມຊ້ອນໃນອານາຄົດກ່ຽວກັບວຽກງານເພື່ອເຮັດແນວໃດຊອກຫາວິທີແກ້ໄຂຜົນກະທົບອັນເກີດຈາກລູກລະເບີດຍັງບໍ່ແຕກທີ່ຕົກຄ້າງຢູ່ປະເທດ. ພວກເຮົາສາມາດລາຍງານໄດ້ວ່າ ໂຄງການນີ້ເຖິງແມ່ນວ່າຈະເປັນໂຄງການປະຕິບັດຜ່ານມາບໍ່ພຽງຈັກປີກໍ່ຕາມ ແຕ່ກໍ່ຍັງມີບົດບາດສຳຄັນໃນການພັດທະນາເສດຖະກິດສັງຄົມ ໃນຂອບເຂດທົ່ວປະເທດ, ມັນເປັນໂຄງການທີ່ຮັບປະກັນທາງດ້ານການເງິນ ແລະມີຄວາມໂປ່ງໃສ ທາງດ້ານການນຳໃຊ້ດິນກໍ່ຄື ດ້ານການກວດສອບບັນຊີ, ອັນໄດ້ເຮັດໃຫ້ສະຖາບັນມີຄວາມຮັບຜິດຊອບ ແລະມີປະສິດທິຜົນ ໃນການຮັບເອົາການຊ່ວຍເຫຼືອຈາກສາກົນ.

ເຖິງຢ່າງໃດກໍ່ຕາມ ຂ້າພະເຈົ້າຂໍຍົກບາງບັນຫາ ກ່ຽວກັບຄວາມເປັນຫ່ວງແລະສະພາບໂຕຈິງຂອງວຽກງານ ໃນໜ້າວຽກອັນຍາວນານຂອງພວກເຮົາວ່າ ມັນຍັງມີບາງປະເດັນ ທີ່ສືບຕໍ່ເປັນອຸປະສັກໃນການບໍລິການຂອງອກລນັ້ນຄືການຮັບປະກັນປະສິດທິຜົນ ແລະຄວາມວ່ອງໄວ.

## ການວາງແຜນທີ່ແທດເໝາະກັບຄວາມເປັນຈິງ

ພາຫະນະຂອງເຮົາເພື່ອຕອບສະໜອງຈຸດປະສົງຕ່າງໆ ຍັງຄົງແມ່ນຂັ້ນຕອນວິທີການວາງແຜນວຽກແບບປະສົມປະສານແລະມີບູລິມະສິດ. ໃນຂັ້ນຕອນຕໍ່ມາ ໃນການປະຕິບັດແຜນງານນັ້ນ ພວກເຮົາກໍ່ມີເຄື່ອງມືອັນແນ່ນອນເພື່ອວັດແທກຄວາມຄືບໜ້າຂອງວຽກງານ ດັ່ງຈະເຫັນໄດ້ໃນລາຍງານທ້າຍປີວ່າ ພວກເຮົາໄດ້ຮັບໝາກຜົນ ເກີນລະດັບຄາດໝາຍທຽບໃສ່ຕອນວາງແຜນ. ແມ່ນຢູ່ວ່າພວກເຮົາໄດ້ມີຜົນງານດີໃນ ປີ 1999, ແຕ່ຖ້າຈະເວົ້າຢ່າງຈິງໃຈແລ້ວ ການວາງແຜນທີ່ໄດ້ກຳນົດຄາດໝາຍຕ່ຳນັ້ນ ໃນກະໂຕຂອງມັນ ຊີ້ໃຫ້ເຫັນວ່າການວາງແຜນຂອງເຮົານັ້ນເຫັນວ່າ ຍັງບໍ່ທັນເໝາະສົມພໍ. ເຖິງຢ່າງໃດກໍ່ຕາມ ປະສົບການຜ່ານມາເຫັນວ່າເປັນບົດຮຽນທີ່ດີ ສຳລັບເຈົ້າໜ້າທີ່ລະດັບເມືອງແລະແຂວງກໍ່ຄື ສຳລັບການຈັດຕັ້ງພາຍໃນ ອ ກ ລ ພວກເຮົາ. ໃນເມື່ອການັເບິ່ງບັນຫາໃນອານາຄົດສຳລັບປີ 2000 ມີຄວາມຫວັງສູງແລະແທດເໝາະກັບຄວາມເປັນຈິງຫລາຍກ່ວາເກົ່າຄືແນວນັ້ນ ເຂົ້າໃຈວ່າຜົນປະໂຫຍດທັງຫລາຍເຫລົ່ານັ້ນ ແທ້ງຈະເຫັນໄດ້ແຈ້ງກ່ວາ ແລະໃນປີຕໍ່ໆມາ ຈະນັບມື້ນັບເພີ່ມທະວີ.

ອ ກ ລ ແມ່ນອົງການລະດັບຊາດທີ່ມີພະນັກງານຫຼາຍທີ່ສຸດທຽບໃສ່ອົງກອນລັດອື່ນໆ ແລະໃຫຍ່ກວ່າກະຊວງແມ່ (ກະຊວງແຮງງານ ແລະສະຫວັດດີການສັງຄົມ) 30% ໃນດ້ານຈຳນວນພະນັກງານ ແລະແມ່ນອົງການທີ່ຮັບເອົາພະນັກງານຊົນເຜົ່າຫຼາຍກວ່າໝູ່ໃນປະເທດ ຍ້ອນວ່າພວກເຮົາມີນະໂຍບາຍຮັບເອົາຄົນທ້ອງຖິ່ນເຂົ້າເຮັດວຽກ. ອັດຕາຄວາມດຸ່ນດ່ຽງ ດ້ານຈຳນວນພະນັກງານເພດຍິງຊາຍ ໃນ ອກລ ເຫັນວ່າດີ ກ່ວາຫຼາຍໆ ອົງການຈັດຕັ້ງອື່ນໆ, ເຖິງຢ່າງໃດກໍ່ດີ ເຮົາກໍ່ຍັງຕ້ອງປັບປຸງສະພາບດຸ່ນດ່ຽງນັ້ນອີກຢູ່ ເພື່ອໃຫ້ເກີດຄວາມສະເໝີພາບດ້ານການຊອກຫາວຽກເຮັດງານທຳໃນໝູ່ຍິງ-ຊາຍ, ຊົນເຜົ່າຕ່າງໆ ກໍ່ຄືບັນດາຄອບຄົວທີ່ໄດ້ຮັບຜົນກະທົບໂດຍກົງຈາກລູກລະເບີດບໍ່ທັນແຕກ.

## ສິ່ງທ້າທາຍດ້ານການບໍລິຫານຄຸ້ມຄອງ

ທັງໃນລະດັບບໍລິຫານຄຸ້ມຄອງ ແລະລະດັບປະຕິບັດວຽກງານຂອງ ອກລ, ເຫັນວ່າແນວຄວາມຄິດກ່ຽວກັບການວາງແຜນທີ່ແທດເໝາະຕົວຈິງ, ບັນຫາພັດທະນາຊັບພະຍາກອນມະນຸດ ແລະການສ້າງ " ຈິດໃຈທີມງານ ", ແລະສະເພາະຢ່າງຍິ່ງການມອບໝາຍໜ້າທີ່ວຽກງານນັ້ນຍັງພົບບັນຫາຢູ່. ທັງໝົດທີ່ເວົ້າມານັ້ນສິ່ງຜົນກະທົບຕໍ່ການປະຕິບັດແຜນງານ, ດັ່ງນັ້ນໃນຄວາມພະຍາຍາມສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ, ພວກເຮົາຈະຕ້ອງສຸມໃສ່ແກ້ໄຂບັນຫາດັ່ງກ່າວ. ແນ່ນອນແລ້ວວ່າການຮັບຮູ້ຄວາມຮັບຜິດຊອບ ແລະການຄິດສະແຫວງຫາວິທີທາງອອກເພື່ອຮັບປະກັນການນຳໃຊ້ຊັບພະຍາກອນດ້ວຍວິທີດີທີ່ສຸດນັ້ນ ອາດເປັນປະສົບການເລື່ອງໃໝ່ ແລະທ້າທາຍສຳລັບພະນັກງານລະດັບອຳນວຍການ ແລະພະນັກງານທົ່ວໄປບາງຄົນ. ສິ່ງນຶ່ງທີ່ສ້າງຄວາມພໍໃຈ ແລະລະດົມໃຈທີ່ສັງເກດເຫັນສະເພາະໃນຂຸມພະນັກງານໜຸ່ມນ້ອຍ, ແມ່ນຂະເຈົ້າມີຄວາມປາດຖະໜາຢາກຮ່ຳຮຽນ ແລະປະກອບສ່ວນເຂົ້າໃນການພັດທະນາຊາດເວົ້າລວມ.

ປີ 1999 ແມ່ນປີທີ່ເຮົາໄດ້ນຳໃຊ້ມາດຕະການວິໃຈຜົນໄດ້ຜົນເສຍໃນວຽກງານເກັບກູ້ ແລະໂຄສະນາສຶກສາຊຸມຊົນ. ໃນການສຶກສາວິໃຈນີ້ ເຮົາກໍ່ໄດ້ຮູ້ຄຳຕອບຕໍ່ຫຼາຍໆບັນຫາ ແຕ່ພ້ອມກັນນັ້ນກໍ່ເຫັນຫຼາຍບັນຫາອີກຕື່ມ ເຊັ່ນບັນຫາໄລ່ລຽງປຽບທຽບຄ່າໃຊ້ຈ່າຍໃນການປະຕິບັດງານລະຫວ່າງແຂວງຕ່າງໆ, ບັນຫາຄຸນຄ່າການນຳໃຊ້ດິນ,ແລະບັນຫາວ່າ " ລາຄາ/ຄ່າໃຊ້ຈ່າຍ" ອັນໃດໃນວຽກການຫຼຸດຜ່ອນຄວາມສ່ຽງທີ່ຖືວ່າ ທີ່ຮັບໄດ້ ".

## ການສະໜັບສະໜູນແບບຍືນຍົງ

ສຳລັບຜູ້ບໍ່ສັນທັດກໍລະນີບໍ່ເຂົ້າໃຈບັນຫາດີ, ຄວາມຄືບໜ້າຂອງພວກເຮົາໃນນຶ່ງປີຜ່ານມາອາດຈະເບິ່ງວ່າບໍ່ມີຫຍັງຫຼາຍ. ແຕ່ຖ້າເບິ່ງໃນຂອບເຂດສີ່ປີນັບແຕ່ໄດ້ເລີ່ມໂຄງການມາ ແລະທຽບໃສ່ປະຕິບັດການໃນຂອບເຂດສາກົນແລ້ວເຫັນວ່າມີຄວາມຄືບໜ້າຫຼາຍກວ່າຄາດ.

ຄວາມຄືບໜ້າຂອງພວກເຮົາຂຶ້ນຢູ່ກັບສອງປັດໃຈຄື (1) ການສືບຕໍ່ໃຫ້ການຊ່ວຍເຫຼືອຈາກຜູ້ສະໜັບສະໜູນໂດຍອີງຕາມຄວາມເຂົ້າໃຈນັບມື້ນັບຫຼາຍຂອງອົງກອນພາຍໃນ ແລະສາກົນວ່າຄຸນຄ່າ ແລະຄວາມຄືບໜ້າທີ່ແທ້ຈິງຂອງ ອກລ ຄວນບໍ່ຄວນເປັນຄືແນວໃດ, ແລະ(2) ຄວາມເປັນເອກະລາດໃນການພັດທະນາການຈັດຕັ້ງດ້ວຍວິທີການສົມເຫດສົມຜົນ, ເກີດໝາກເກີດຜົນ ແລະ "ໂປ່ງໃສ ".

ດັ່ງນັ້ນພາລະຂອງພວກເຮົາແມ່ນເຮັດແນວໃດໃຫ້ເຫັນນຳກັນວ່າຜົນປະໂຫຍດທີ່ຊຸມຊົນໄດ້ມາມີຫຍັງແດ່ຊຶ່ງເຮົາຮູ້ວ່າມີແນ່ນອນ, ແລະນອກນັ້ນແລ້ວຕ້ອງສື່ສານໃຫ້ເຫັນແຈ້ງວ່າຜົນດີມີຫຍັງຈາກການປະຕິບັດໂຄງການ ແລະການຕັດສິນໃຈຂອງລັດຖະບານສປປລາວ ແລະອົງການໃຫ້ການຊ່ວຍເຫຼືອ. ຖ້າຫາກຂາດຄວາມສາມາດຂະຫຍາຍຕົວຕາມທຳມະຊາດຂອງມັນ, ແລະຂາດຄວາມເປັນເອກະລາດຫຼາຍກວ່າເກົ່າໃນການບໍລິຫານຄຸ້ມຄອງ, ແລະຂາດການສະໜັບສະໜູນທາງການເງິນ ແລະຄຸ້ມຄອງບໍລິຫານແລ້ວ, ອກລ ຈະຕົກຢູ່ໃນສະພາບບອບບາງອັນຕະລາຍ. ນອກນັ້ນແລ້ວຄ່າໃຊ້ຈ່າຍທີ່ຫຼາຍສົມຄວນທີ່ໄດ້ລົງທຶນໄປໃນຕອນເລີ່ມຕົ້ນ ມາເຖິງດຽວນີ້ກໍ່ຈະບໍ່ເກີດດອກອອກຜົນຢ່າງສຸດຂີດໄດ້.

ການມີລູກລະເບີດບໍ່ທັນແຕກຕົກຄ້າງນັ້ນແມ່ນດ້ານນຶ່ງຂອງວຽກງານທ້າທາຍໃນການພັດທະນາມັນຍັງເປັນຄວາມຈິງທີ່ຕ້ອງຮັບຮູ້ວ່າເພື່ອໃຫ້ຫຼາຍໆໂຄງການພັດທະນາປະສົບຜົນສຳເລັດ, ກ່ອນອື່ນໝົດຈະຕ້ອງເກັບກູ້ທຳລາຍລູກລະເບີດຈາກເຂດໂຄງການເສຍກ່ອນ.



ລາຍງານສະບັບນີ້ຊີ້ໃຫ້ເຫັນວ່າໂຄງການນີ້ສາມາດບັນລຸໜ້າວຽກຕົນໄດ້, ພວກເຮົາກໍ່ຮູ້ວ່າຄວນບໍ່ຄວນເຮັດຫຍັງ, ແຕ່ພ້ອມດຽວກັບນັ້ນພວກເຮົາຕ້ອງການສະໜັບສະໜູນຂອງທ່ານອີກຕໍ່ໄປ ແລະພວກເຮົາຕ້ອງມີວິທີການເຮັດວຽກແບບທີມງານທີ່ມີປະສິດທິພາບເພື່ອສຳເລັດໜ້າທີ່. ສ່ວນຕົວຂ້າພະເຈົ້າ, ມັນແມ່ນຄວາມພູມໃຈແລະກຽດອັນສູງທີ່ຮ່ວມເຮັດວຽກຢູ່ ອກລ, ແລະຂ້າພະເຈົ້າມີຄວາມຫວັງສູງຕໍ່ອານາຄົດ.

ໃນຄວາມຮັບຮູ້ຜົນງານໜັກໜ່ວງທີ່ຜ່ານມາ ແລະຮັບຮູ້ເຖິງວຽກງານທ້າທາຍໃນອະນາຄົດ, ຂ້າພະເຈົ້າຫວັງວ່າທ່ານຈະໄຊ້ເວລາອ່ານລາຍງານສະບັບນີ້.

ຟີລິບ ບີນ (Philip Bean) ທີ່ວໜ້າທີ່ປຶກສາດ້ານວິຊາການ








ຈາກລຸ່ມສຸດເບື້ອງຂວາອ່ານແບບເຂັມໂມງໝູນ: ເດັກນ້ອຍຢູ່ຫົວພັນໃຊ້ຊີວິດປະຈໍາວັນນໍາເສດເຫຼືອຂອງລູກລະເບີດ. ກອງລູກລະເບີດບ້ອມບີ (BLU 24). ລູກລະເບີດບໍ່ທັນແຕກລໍຖ້າການທໍາລາຍ; ພະນັກງານທໍາລາຍລະເບີດໃນແຂວງສະຫວັນນະເຂດກໍາລັງກຽມຈະທໍາລາຍລະເບີດມີນໍ້າໜັກລວມ 500 ປອນ. ລູກບ້ອມບີນຶ່ງໜ່ວຍໃນປ່າລໍຖ້າເຍື່ອຂອງມັນ.ພາບໂດຍ : Jim Holmes / UNICEF, ພາບນັກທໍາລາຍລະເບີດໂດຍ Tony West / HI.





# ສ້າງ ຜົນປະໂຫຍດ ໃຫ້ຊຸມຊົນ

## ນ້ອງຂ້ອຍຖືກຕາຍຢູ່ບ່ອນນີ້...

ນັບເປັນເວລາຫຼາຍກວ່າ 20 ປີມາແລ້ວທີ່ຊາວນາທ້ອງຖິ່ນຜູ້ນີ້, ທ້າວ ອິນພອນວົງຊຽວຈັນ ໄດ້ໃຊ້ຊີວິດອອກແຮງງານໃນບໍລິເວນທີ່ເຕັມໄປດ້ວຍບັນຫາ. ເຂົາມີອາຍຸ 38ປີ, ມີລູກຄົນນຶ່ງອາຍຸ 5 ປີ. ເຮົາຈະເຫັນສ່ວນປາຍ ຂອງລູກລະເບີດຍາວສອງ ແມດ ໜັກ 500 ປອນ ໄດ້ຖືກຖິ້ມດິ່ງລົງມານັ້ນນຶ່ງໃນປີ 1972 ຈາກເຮືອບິນໄອພົ່ນສະຫະລັດອາເມຣິກາແລ້ວມາປັກຢູ່ທົ່ງນາຂອງເຂົາໃກ້ບ້ານສົກ, ໃນແຂວງອັດຕະປື. ພາກສ່ວນລູກແກັບທາງປາຍຍັງພົ້ນຢູ່ໜ້າດິນເບິ່ງແລ້ວຊໍ້າກັບວ່າເປັນໂຖດອກໄມ້ນ້ອຍປະດັບສະຖານທີ່ນັ້ນ. ໃນລະດູຜະລິດຍາມຝົນມາແຕ່ລະປີ, ລາວກໍ່ນໍາເອົາຄວາຍ—ມາໄຖນາ ແລະມາຮອດບໍລິເວນນີ້ ລາວຕ້ອງບັງຄັບຄວາຍຂອງລາວໄປລອບໆດ້ວຍຄວາມລະມັດລະວັງ ຍ້ອນລາວຮູ້ວ່າຖ້າເລັບຄວາຍຫາກບັງເອີນໄປຕໍາເອົາລູກລະເບີດ ກໍ່ອາດເຮັດໃຫ້ລະເບີດແຕກໄດ້ຈົນເຮັດໃຫ້ເຂົາສິ້ນຊີບ, ສາມາດສ້າງຂຸມເລິກໜ້າຕັດ 8 ແມດ, ແລະມີແປວໄຟກະຈາຍໄປທົ່ວທຸກທິດ. ດັ່ງນັ້ນອິນປອນຮູ້ຄວາມສ່ຽງໄພອັນຕະລາຍນັ້ນດີ. ລາວເອງກໍ່ເຄີຍສູນເສຍນ້ອງຄົນນຶ່ງໄປແລ້ວໃນປີ 1977 ຍ້ອນນ້ອງໄດ້ໄປແຕະຕ້ອງເອົາລູກບ້ອມບີໜ່ວຍນຶ່ງ ທີ່ຫຼົງເຫຼືອຕາມທາງຍ່າງໄປປ່າບ່ອນທີ່ລາວຈະເອົາງົວຄວາຍໄປລ້ຽງ. ລະເບີດໄດ້ແຕກແລະສັງຫານນ້ອງລາວກັບທີ່. ອິນປອນໄດ້ເວົ້າວ່າ: " ນັບແຕ່ນັ້ນມາຂ້ອຍກໍ່ຢ້ານບໍ່ກ້າຂະຫຍາຍເນື້ອທີ່ນາ, ແຕ່ວ່າຢູ່ຈຸດນີ້ຂ້ອຍຕັດສິນໃຈສ່ຽງເບິ່ງ". ຄວາມສ່ຽງດັ່ງກ່າວນັ້ນມາເຖິງຕອນນີ້ໄດ້ຫຼຸດໜ້ອຍຖອຍລົງຍ້ອນໜ່ວຍງານ ອກລ ໂດຍໄດ້ຮັບການຊ່ວຍເຫຼືອຈາກທີ່ປຶກສາວິຊາການຂອງອົງການ NPA ຊຶ່ງໄດ້ພາກັນເອົາລູກລະເບີດໜ່ວຍນັ້ນອອກຈາກດິນນາຂອງອິນພອນໄປແລ້ວ.

ຂຽນໂດຍແມດທິວ ເພັນນິງຕັນ (Matthew Pennington, ກໍລະກົດ 1999)



ປະຊາຊົນລາວໄດ້ໃຊ້ຊີວິດຢູ່ກັບລູກລະເບີດບໍ່ທັນແຕກມາເປັນເວລາຫຼາຍກວ່າ 30 ປີ. ອັດຕາອຸປະຕິເຫດປັດຈຸບັນເຫັນວ່າຕໍ່າຍ້ອນຜູ້ຄົນໄດ້ເຫັນພີ່ນ້ອງເຂົາເຈົ້າຕ້ອງພົບກັບຄວາມຕາຍຈຶ່ງເຫັນບັນຫາຂອງຊຸມຊົນໄດ້ ແລະເຮັດໃຫ້ມີຄວາມລະມັດລະວັງ. ສະພາບດັ່ງກ່າວຈະຕ່າງໄປຈາກບັນດາປະເທດທີ່ກໍາລັງປະສົບກັບສົງຄາມຢູ່ ຫຼືສະພາບຫຼັງຈາກມີສົງຄາມ.

ຍ້ອນຄວາມໜາແໜ້ນຂອງພົນລະເມືອງຕໍ່າ (ຕໍ່າທີ່ສຸດໃນເອເຊຍ) ໝາຍຄວາມວ່າໃນຫຼາຍເຂດ, ຊາວບ້ານທີ່ມີທາງເລືອກໂດຍບໍ່ຕ້ອງໄປໃກ້ບ່ອນທີ່ມີລະເບີດບໍ່ແຕກຕົກຄ້າງຢູ່ກໍ່ພໍໄດ້. ເຖິງຢ່າງໃດກໍ່ຕາມການທີ່ປະເທດລາວມີອັດຕາການເພີ່ມຂອງພົນລະເມືອງສູງ (ສູງທີ່ສຸດໃນເອເຊຍ) ໄດ້ເລີ່ມມີສະພາບສ້າງຄວາມກົດດັນຕໍ່ດິນດອນຕ່ອນຫຍ້າທີ່ບໍ່ໄດ້ຖືກນໍາມາໃຊ້ຮອດປັດຈຸບັນ, ອັນໄດ້ເຮັດໃຫ້ມີແນວໂນ້ມໃໝ່ດ້ານອຸປະຕິເຫດໃນປະເທດ ແລະໄດ້ກະທົບຕໍ່ການພັດທະນາ.

ຜົນກະທົບຂອງລູກລະເບີດບໍ່ທັນແຕກນັບວ່າໜັກໜ່ວງ ຕໍ່ການຜະລິດສະບຽງອາຫານ, ການພັດທະນາໂຄງລ່າງ, ສ້າງສິ່ງອໍານວຍຄວາມສະດວກດ້ານອານາໄມ, ຂະຫຍາຍໂຮງຮຽນ ແລະໂຮງໝໍ.

ອກລໄດ້ເລີ່ມເກັບກໍາຂໍ້ມູນຜົນກະທົບເລົ່ານີ້ໂດຍໄດ້ຊອກຫາກໍລະນີສຶກສາທີ່ຊີ້ໃຫ້ເຫັນເຖິງຜົນປະໂຫຍດທາງສັງຄົມ ແລະເສດຖະກິດໄດ້ມາພາຍຫຼັງມີການເກັບກູ້ທໍາລາຍລະເບີດ ຊຶ່ງຕໍ່ໄປທ່ານຈະເຫັນຕົວຢ່າງບາງອັນ:



## ຢູ່ແຂວງສາລະວັນ

## ທົ່ງໄຮ່ທົ່ງນາ

ສັກດາອາຍຸ 27 ປີ ຢູ່ບ້ານນາດອນກວ້າງທາງພາກໃຕ້ຂອງແຂວງສາລະວັນ.ລາວເປັນຊາວນາທຸກຍາກ ແລະມີລູກສາມຄົນ. ລາຍຮັບຂອງຄອບຄົວລາວແມ່ນມາຈາກການຂາຍເຂົ້າ, ແຕ່ຫາກວ່າຜົນຜະລິດໃນແຕ່ລະປີພັດບໍ່ພໍສໍາລັບລ້ຽງຄອບຄົວຊໍ້າ. ດິນນາລາວມີຫຼາຍຢູ່ ແຕ່ຫາກວ່າລາວບໍ່ສາມາດນໍາໃຊ້ໄດ້ ຍ້ອນມີລະເບີດບໍ່ແຕກເຫຼືອຄ້າງຢູ່ຫຼາຍ.

ສັກດາໄດ້ຍິນຂ່າວວ່າ ອກລ ພວມທໍາການເກັບກູ້ລະເບີດຢູ່ ກໍ່ເລີຍເຂົ້າມາສະເໜີຂໍຄວາມຊ່ວຍເຫຼືອ ຊຶ່ງຕໍ່ມາກໍ່ໄດ້ຮັບການອານຸມັດ. ການເກັບກູ້ໄດ້ມີຂຶ້ນໃນປີ 1999 ໂດຍໄດ້ຮັບການສະໜັບສະໜູນດ້ານເຕັກນິກຈາກອົງການ ແມກ (MAG).

ມາດຽວນີ້ສັກດາໄດ້ຂະຫຍາຍເນື້ອທີ່ນາແລ້ວລາວສາມາດສັບຊ່າວໄຖນາໃໝ່ຂອງລາວໂດຍບໍ່ມີຄວາມຢ້ານກົວວ່າລູກລະເບີດທີ່ຝັງຢູ່ໃຕ້ໜ້າດິນຈະລະເບີດຂຶ້ນ; ຜົນຜະລິດຂອງລາວກໍ່ໄດ້ເພີ່ມຂຶ້ນສອງໂຕນພາຍໃນນຶ່ງປີຫຼັງຈາກການເກັບກູ້ລະເບີດ, ສະພາບການດໍາລົງຊີວິດຂອງຄອບຄົວສັກດາກໍ່ເລີ່ມດີຂຶ້ນ. ສັກດາໄດ້ເນັ້ນວ່າ ອກລ ເປັນອົງການມະນຸດສະທໍານຶ່ງຊຶ່ງບໍ່ຫວັງຜົນປະໂຫຍດຕອບແທນ ຫຼືຜົນກໍາໄລຈາກຊາວບ້ານໃນການໃຫ້ການບໍລິການເກັບກູ້ລະເບີດ. ອີງຕາມປະສົບການຂອງລາວແລ້ວ ອກລ ຊ່ວຍເຫຼືອຄົນທຸກຍາກໃຫ້ອອກຈາກສະພາບຫຍຸ້ງຍາກ ດັ່ງນັ້ນຄອບຄົວຂອງລາວຈຶ່ງຮູ້ສຶກວ່າ ອກລ ມີບຸນຄຸນຕໍ່ເຂົາເຈົ້າຫຼາຍ.

ຂຽນໂດຍ ອາວິຊາກາ, ອາສາສະໝັກສປຊ ປະຈໍາອກລ, ມັງກອນ 2000.

Jim Holmes














24 / VII

## ນ້ຳສະອາດຢູ່ແຂວງເຊກອງ

ບ້ານປາກຫ້ວຍ ຢູ່ເມືອງກະລຶມແຂວງເຊກອງ ດຽວນີ້ມີນ້ຳກ້ອກສະອາດໃຊ້ແລ້ວ. ແມ່ຍິງ ແລະເດັກນ້ອຍບໍ່ຈຳເປັນຕ້ອງໃຊ້ເວລາຫຼາຍໆຊົ່ວໂມງ ແຕ່ລະວັນເພື່ອໄປຫາບເອົານ້ຳມາໃຊ້ຈາກຫ້ວຍຮ່ອງ. ແຫຼ່ງນ້ຳມາຈາກບໍ່ຢູ່ຫ່າງໄປນຶ່ງກິໂລແມັດ, ດັ່ງນັ້ນນ້ຳແມ່ນສະອາດ ແລະປອດໄພ ເພື່ອໃຊ້ດື່ມ ແລະອາບໃຊ້. ສະພາບອານະໄມໄດ້ເລີ່ມຖືກປັບປຸງ.

ການເກັບກູ້ລະເບີດຢູ່ບ່ອນນີ້ໄດ້ຖືກສະເໜີມາຍັງ ອກລ ໂດຍອົງການບໍ່ສັງກັດລັດຖະບານຄື ອົງການປະຕິບັດການຕ້ານຄວາມອຶດຫິວ (Action Contre la Faim) ເພື່ອຈະໄດ້ຊ່ວຍໂຄງການນ້ຳສະອາດ. ບ້ານປາກຫ້ວຍແມ່ນບ້ານຊາວລາວເທິງມີປະຊາຊົນຢູ່ 500 ຄົນ. ຊາວບ້ານເຮັດໄຮ່ເຂົ້າ, ເຂົາເຈົ້າຢູ່ໃນຈຳນວນຄົນທີ່ທຸກຍາກທີ່ສຸດ, ດັ່ງນັ້ນຈຶ່ງຖືວ່າໂຄງການນີ້ສົມຄວນພິຈາລະນາທຳການເກັບກູ້ລະເບີດ.

ອກລ ໄດ້ປະກອບສ່ວນດ້ວຍການຕັດແລວທາງຍ່າງຍາວ 1,1 ກິໂລແມດ ແລະກວ້າງ 1 ແມດ, ວຽກໄດ້ໃຊ້ເວລາ 3 ວັນ. ໃນເວລາສ້າງແລວທາງນີ້ໜ່ວຍງານໄດ້ພົບພໍ້ລູກລະເບີດ 250 ປອນ 1 ລູກ, ລະເບີດ 750 ປອນ 1 ລູກ, ລູກບ້ອມບີ້ 15 ລູກ, ແລະລະເບີດບໍ່ທັນແຕກປະເພດອື່ນໆ ຊຶ່ງໃນນັ້ນສາມາດປິດຊີວິດຫຼາຍໆຄົນໄດ້. ໄດ້ຊ່ວຍໃຫ້ການປຶກສາດ້ານເຕັກນິກຕໍ່ໜ່ວຍງານເກັບກູ້ແມ່ນທີ່ປຶກສາ EOD ຈາກອົງການປະເທດນໍເວ NPA.

ພາຍຫຼັງການເກັບກູ້ແລ້ວ, ຊາວບ້ານກໍ່ໄດ້ພ້ອມພຽງກັນເຮັດສ້າງ, ຕິດຕັ້ງຈັກສູບນ້ຳ, ຂຸດດິນວາງທໍ່ນ້ຳ. ອົງການປະຕິບັດການຕ້ານຄວາມອຶດຢາກ (ACF) ເປັນຜູ້ໃຫ້ອຸປະກອນ ແລະຊ່ວຍເຫຼືອດ້ານເຕັກນິກ.

ໃນປີ 2000 ເຂດດັ່ງກ່າວນີ້ກໍ່ໄດ້ຮັບການຊ່ວຍເຫຼືອດ້ານເກັບກູ້ອີກຕື່ມ: ສ້າງແລວທາງຍ່າງຄວາມຍາວ 32 ກິໂລແມດ ເພື່ອເຮັດໃຫ້ເຂດນີ້ກໍ່ຄືບ້ານອື່ນໆຕິດຕໍ່ກັນໄດ້ກັບເມືອງກະລຶມ ຊຶ່ງມາເຖິງດຽວນີ້ບໍ່ມີເສັ້ນທາງໄປມາຫາສູ່. ອກລ ຈະຊ່ວຍສ້າງແລວທາງກວ້າງ 5 ແມດ ຊຶ່ງຈະຊ່ວຍຍົກລະດັບຊີວິດການເປັນຢູ່ຂອງບ້ານຕ່າງໆໃນເມືອງກະລຶມ.

## ການສຳຫຼວດອຸປະຕິເຫດ

## ຢູ່ຊຽງຂວາງ.

ຈຳນວນອຸບປະຕິເຫດຈາກລູກລະເບີດບໍ່ທັນແຕກໃນໝູ່ເດັກນ້ອຍໃນຊຽງຂວາງໄດ້ເພີ່ມຂຶ້ນໃນປີຫຼັງໆນີ້.

ຜົນການສຳຫຼວດຂອງ MAG ຊີ້ໃຫ້ເຫັນວ່າໄດ້ມີ "ຄວາມແຕກຕ່າງກັນໃນການເບິ່ງບັນຫາລະຫວ່າງລຸ້ນຜູ້ໃຫຍ່ ແລະເດັກນ້ອຍ... ໃຊ້ຊີວິດຊຶ່ງອ້ອມຂ້າງມີແຕ່ສິ່ງເສດເຫຼືອຈາກປາງສົງຄາມ, ເດັກນ້ອຍກາຍເປັນຜູ້ມີທັດສະນະບໍ່ຢ້ານກົວຕໍ່ລູກບ້ອມບີ້ ແລະລູກລະເບີດບໍ່ທັນແຕກອື່ນໆ."

ແຕ່ສຳລັບຜູ້ເປັນພໍ່ແມ່ນັ້ນ ເຂົາເຈົ້າຮູ້ດີເຖິງໄພອັນຕະລາຍຈາກລູກລະເບີດບໍ່ທັນແຕກ. ພໍ່ແມ່ບໍ່ສາມາດຕິດຕາມການເຄື່ອນໄຫວຂອງເດັກນ້ອຍໄດ້ຕະຫຼອດ, ສະເພາະຢ່າງຍິ່ງເດັກນ້ອຍຜູ້ຊາຍ, ຈຶ່ງເຮັດໃຫ້ອັດຕາອຸປະຕິເຫດເພີ່ມຂຶ້ນ.

# ການວາງແຜນວຽກ

ລະດັບການມີລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປລາວມີຫຼວງຫຼາຍ ຊຶ່ງຊັບພະຍາກອນມີຢູ່ປັດຈຸບັນ ພາຍໃນປະເທດ ບໍ່ສາມາດຈະຕອບສະໜອງໄດ້, ດັ່ງນັ້ນການກໍານົດບູລິມະສິດສໍາລັບວຽກງານນີ້ ຈຶ່ງຖືວ່າເປັນການຈໍາເປັນ. ອກລ ໄດ້ນໍາໃຊ້ຂັ້ນຕອນການວາງແຜນວຽກແບບປະສົມປະສານເພື່ອກໍານົດຄວາມຮຽກຮ້ອງຕ້ອງການທີ່ເປັນບູລິມະສິດ, ຈາກນັ້ນກໍ່ວາງແຜນເກັບກູ້ ຊຶ່ງຕ້ອງຕອບສະໜອງຄວາມຮຽກຮ້ອງຕ້ອງການເຫຼົ່ານັ້ນ.

ໃນປີ 1999 ຂັ້ນຕອນວາງແຜນດັ່ງກ່າວ ໄດ້ເປີດໂອກາດຄັ້ງທໍາອິດໃຫ້ແກ່ເຈົ້າໜ້າທີ່ວາງແຜນຂອງແຂວງ ແລະເມືອງສາມາດເຂົ້າຮ່ວມໃນການກໍານົດ ບູລິມະສິດໃນການເກັບກູ້ລະເບີດ. ແຕ່ລະແຂວງກໍ່ໄດ້ສ້າງແຜນປະຈໍາປີ ຊຶ່ງໃນນັ້ນໄດ້ປະກາດຢ່າງແຈ່ມແຈ້ງວ່າໜ່ວຍງານໂຄສະນາສຶກສາຊຸມຊົນ ແລະເກັບກູ້ຈະໄປປະຕິບັດງານຢູ່ໃສແດ່.

ໃນຄວາມເປັນຈິງແລ້ວນີ້ແມ່ນການປະກາດເຈດຈໍານົງຫຼາຍກວ່າຈະແມ່ນພະຍາກອນການວາງແຜນຢ່າງລະອຽດ. ເຮົາໄດ້ບັນລຸທຸກໆຄາດໝາຍທີ່ກໍານົດໄວ້ ແລະສ່ວນໃຫຍ່ໄດ້ບັນລຸເກີນຄາດໝາຍ. ໃນແງ່ປະຕິບັດການເຫັນວ່າບັນດາຄາດໝາຍທີ່ໄດ້ຄາດຄະເນໄວ້ນັ້ນແມ່ນຕໍ່າໂພດຍ້ອນເຫດຜົນຕ່າງໆເຊັ່ນ ຂະບວນການຂັ້ນຕອນຂອງການວາງແຜນນັ້ນຍັງໃໝ່ຢູ່ ນອກ ນັ້ນກໍ່ຍັງຂາດປະສົບການບຸກຄະລາກອນ ແລະຄວາມສາມາດດ້ານສໍາຫຼວດ; ມີບາງຊຸມຊົນໃນເມືອງ ແລະແຂວງກໍ່ຂາດຈິດໃຈຄວາມເປັນເຈົ້າແລະມີຢ່າງດຽວຄື ບໍ່ຢາກເຫັນແຜນການຂອງຕົນເອງປະສົບຄວາມລົ້ມເຫຼວ(ບໍ່ສາມາດປະຕິບັດໄດ້).

ໂດຍໄດ້ນໍາໃຊ້ໂຄງປະຕິບັດການໄດ້ມາດຕະຖານ ຕະຫຼອດທຸກກິດຈະກໍາຂອງໂຄງການເຊັ່ນ ລະບົບລາຍງານໃໝ່ດ້ານການເງິນ ພ້ອມທັງການລາຍງານທີ່ໄດ້ປັບປຸງດ້ານຄວາມຄືບໜ້າປະຈໍາເດືອນ ຈຶ່ງສາມາດວິໃຈຜົນງານໃຫ້ລະອຽດຫຼາຍກວ່າເກົ່າໄດ້. ນອກນັ້ນຫວ່າງມໍ່ໆນີ້ກໍ່ໄດ້ຊອກຫາຂໍ້ມູນຂ່າວສານເພີ່ມເຕີມກ່ຽວກັບຄຸນຄ່າຂອງວຽກງານເຮົາທີ່ມີຕໍ່ຊຸມຊົນນັ້ນກໍ່ຄື *ການວິໃຈຄ່າໃຊ້ຈ່າຍແລະຜົນປະໂຫຍດທີ່ໄດ້ຮັບ* ຊຶ່ງຂໍ້ສະຫຼູບຂອງການວິໃຈນັ້ນທ່ານຈະເຫັນໄດ້ໃນໜ້າເຈ້ຍລາຍງານຕໍ່ໄປນີ້

ການວິໃຈຄັ້ງນີ້ໄດ້ຕອບແລະຍົກຫຼາຍໆຄໍາຖາມ ທີ່ພົວພັນເຖິງການໃຊ້ຈ່າຍ, ປະສິດທິພາບ, ແລະ ຜົນປະໂຫຍດໄດ້ຮັບດ້ານເສດຖະກິດ ແລະສັງຄົມ. ບັນຫານີ້ເປັນບັນຫາສັບສົນ ແລະປະກອບດ້ວຍຫຼາຍໆຂໍ້ມູນ. ລາຍງານ, ແລະການວິໃຈຂອງພວກເຮົາບໍ່ສາມາດເວົ້າໄດ້ວ່າສໍາເລັດຄົບຖ້ວນ ແລະການຕີລາຄາບາງອັນຂອງພວກເຮົາ ກ່ຽວກັບຜູ້ໄດ້ຮັບຜົນປະໂຫຍດ ແລະຄຸນຄ່າດ້ານສັງຄົມອາດຈະເປັນບັນຫາທີ່ຍັງຈະຕ້ອງຖົກຖຽງກັນອີກຕໍ່ໄປ.

ການສຶກສາໄດ້ຊີ້ໃຫ້ເຫັນວ່າສະມັດຕະພາບຂອງໂຄງການນີ້ໄດ້ນັບມື້ນັບເພີ່ມທະວີ ທັງນີ້ແມ່ນໄດ້ວັດແທກຈາກອັດຕາການເກັບກູ້ ກໍ່ຄືການຂະຫຍາຍຕົວຂອງໂຄງການ, ການຍົກລະດັບດ້ານທັກສະຄວາມຊໍານິຊໍານານ ແລະຜົນປະໂຫຍດຕ່າງໆທີ່ໄດ້ສະໜອງໄປ. ພວກເຮົາໄດ້ເລີ່ມເກັບກໍາ ເອກະສານກ່ຽວກັບຜົນປະໂຫຍດຕ່າງໆເຫຼົ່ານັ້ນ ແລະຊີ້ໃຫ້ເຫັນເຖິງຄຸນຄ່າຂອງການລົງທຶນເຂົ້າໃນວຽກງານເກັບກູ້ ແລະການສຶກສາ. ວຽກດັ່ງກ່າວນີ້ບໍ່ແມ່ນເປັນວຽກງ່າຍ ຍ້ອນວ່າ ສປປລາວ ຍັງຂາດຂໍ້ມູນກ່ຽວກັບລາຄາດິນ ເຄື່ອງອຸປະໂພກບໍລິໂພກ ແລະຄ່າການນໍາໃຊ້ດິນ. ການສຶກສາໄດ້ຍົກໃຫ້ເຫັນວ່າລະບົບວາງແຜນວຽກຂອງພວກເຮົາ ເປັນວຽກງານຕໍ່ເນື່ອງ ແລະມີຄວາມກ້າວໜ້າດີ ພ້ອມທັງໄດ້ຊ່ວຍໃຫ້ເຮົາສາມາດກໍານົດບູລິມະສິດໃຫ້ຖືກຕ້ອງເໝາະສົມ ແລະສາມາດເຊື່ອມເຂົ້າຫາຄວາມຮຽກຮ້ອງຕ້ອງການ ຕ່າງໆ ໃນການພັດທະນາທີ່ສໍາຄັນ. ໃນໜ້າເຈ້ຍຕໍ່ໆໄປ ທ່ານຈະເຫັນບາງຕົວຢ່າງກ່ຽວກັບຜົນປະ ໂຫຍດບາງຢ່າງນັ້ນ.

## ມັນແມ່ນທັງໝົດໃນຄອບຄົວ...




ນາງໃຫຍ່ ເຈັດສິບແປດ ແມ່ນພະນັກງານເກັບກູ້ລະເບີດ ລາວມີອາຍຸ 22 ປີ ເຮັດວຽກຢູ່ແຂວງສະຫວັນນະເຂດ ຊຶ່ງເປັນບ້ານເກີດຂອງລາວນັບແຕ່ປີ 1998. ນາງໄດ້ເວົ້າວ່າ: "ຂ້ອຍຢາກເຮັດວຽກນີ້ມາຕັ້ງດົນແລ້ວ ເວລາໄດ້ຍິນວ່າເພິ່ນຮັບເອົາຜູ້ຍິງຂ້ອຍກໍ່ຟ້າວໄປສະໝັກງານໂລດ. ຂ້ອຍໄດ້ເຮັດໃຫ້ຄົນເຫັນວ່າວຽກງານເກັບກູ້ລະເບີດນີ້ ບໍ່ແມ່ນມີແຕ່ຜູ້ຊາຍເຮັດໄດ້ ແລະຂ້ອຍກໍ່ບໍ່ຢ້ານລູກລະເບີດທີ່ຍັງບໍ່ແຕກ"

ເຫດຜົນທີ່ນາງໄປສະໝັກວຽກນີ້ເບິ່ງແລ້ວກໍ່ພໍເຂົ້າໃຈຢູ່: ນາງຈັນທະລາ ຜູ້ເປັນແມ່ຂອງລາວໄດ້ສູນເສຍຂາເບື້ອງນຶ່ງໄປຍ້ອນອຸປະຕິເຫດລູກລະເບີດທີ່ແຕກຢູ່ໃນທົ່ງນາຂອງເຂົາເອງ. ຜູ້ເປັນແມ່ໄດ້ເວົ້າວ່າ: "ມັນແມ່ນລະດູເກັບກ່ຽວ 1993 ຜົວຂອງຂ້ອຍກໍ່ພວມເຮັດວຽກຢູ່ບໍ່ໄກ ນາງໃຫຍ່ພວມຂຸດໜໍ່ໄມ້ ແລະລູກອີກສອງຄົນກໍາລັງເກັບຜັກຢູ່ແຄມນໍ້າ ແລະຂ້ອຍພວມຂຸດດິນຢູ່ ເວລາເອົາສຽມຂຸດລົງເທື່ອທີສອງສຽມກໍ່ໄປຕໍາເອົາລູກລະເບີດ"

ນາງໃຫຍ່ໄດ້ອະທິບາຍຕື່ມວ່າ: "ແມ່ຂ້ອຍເຕັມໄປດ້ວຍເລືອດ ຂ້ອຍໄດ້ຮ້ອງໃສ່ພໍ່ ແລ້ວພ້ອມກັນຟ້າວພາແມ່ໄປໂຮງໝໍ ເຊັ່ນດຽວກັບໂຮງໝໍເມືອງທົ່ວໄປໃນລາວ ອຸປະກອນເຄື່ອງໃຊ້ກໍ່ມີແຕ່ອັນຈໍາເປັນເທົ່ານັ້ນ. ຕໍ່ມາແມ່ຂອງເຂົາກໍ່ຕ້ອງສູນເສຍຂາໄປເບື້ອງນຶ່ງ. ລາວຕ້ອງໃຊ້ເວລາອີກຕື່ມສອງເດືອນຢູ່ໂຮງໝໍເພື່ອປິ່ນປົວບາດເຈັບ ແລະຄ່າປິ່ນປົວກໍ່ສູງສໍາລັບຄອບຄົວໃນເວລານັ້ນ."ນາງ ໃຫຍ່ໄດ້ອະທິບາຍຕື່ມກ່ຽວກັບຜົນກະທົບຈາກອຸປະຕິເຫດນັ້ນວ່າ: "ເພື່ອໃຊ້ຈ່າຍເຂົ້າໃນການປິ່ນປົວ ພວກເຮົາຕ້ອງໄດ້ຂາຍຄວາຍ 12 ຕົວ ແລະມີແຕ່ຄວາຍຕົວດຽວເຫຼືອໄວ້. ມັນເປັນເວລາທີ່ຫຍຸ້ງຍາກສັບສົນອີ່ຫຼີ. ຍ້ອນວ່າຂ້ອຍເປັນລູກກົກ (ອາຍຸ 7 ປີ), ຂ້ອຍຈໍາເປັນຕ້ອງເບິ່ງແຍງຄອບຄົວ. ເວລາອາຍຸໄດ້ພຽງແຕ່ 14 ປີຂ້ອຍກໍ່ຕ້ອງໄດ້ອອກໂຮງຮຽນແລ້ວ). ໃນເວລາທີ່ນາງເວົ້າຢູ່ນັ້ນເຮົາກໍ່ສັງເກດເຫັນໄດ້ຢ່າງຈະແຈ້ງເຖິງຄວາມເຈັບປວດທີ່ປະກົດຢູ່ໃນໜ້າຂອງຍິງທັງສອງ ຍ້ອນປະສົບການຂອງປີຜ່ານໆມາ.ແລ້ວດຽວນີ້ເດ? ຂ້ອຍຮູ້ສຶກດີໃຈທີ່ສຸດທີ່ໂຄງການເກັບກູ້ລະເບີດໄດ້ເລີ່ມຕົ້ນ ແລະຂ້ອຍກໍ່ເປັນສ່ວນນຶ່ງຂອງວຽກງານນີ້. ຂ້ອຍຈະສືບຕໍ່ເຮັດວຽກນີ້ຕໍ່ໆໄປ ຈົນກວ່າຈະເຮັດຫຍັງບໍ່ໄດ້.

# ການຕີລາຄາຄຸນຄ່າ

ຫວ່າງມໍ່ໆມານີ້ ອກລ ໄດ້ມອບໝາຍໃຫ້ທຳການວິໄຈຄ່າໃຊ້ຈ່າຍ ແລະຜົນປະໂຫຍດທີ່ໄດ້ຮັບຈາກຜົນງານທີ່ໄດ້ປະຕິບັດພາຍໃນ 1999 ຊຶ່ງຜົນຂອງມັນມີດັ່ງຕໍ່ໄປນີ້:

❒ ຄ່າໃຊ້ຈ່າຍສຳລັບປະຕິບັດການຕ່າງໆໃນຂອບເຂດທົ່ວປະເທດຂອງ ອກລ ໃນປີ 1999 ຕົກເປັນເງິນ $4,1 ລ້ານ* ແຕ່ນັ້ນກໍ່ບໍ່ໄດ້ລວມເອົາຄ່າໃຊ້ຈ່າຍຕໍ່ສາກົນ ກໍ່ຄືຄ່າສິດສອນ ແລະວຽກງານທີ່ປຶກສາ.

❒ ໂດຍໄດ້ໃຊ້ວິທີການຄິດໄລ່ທີ່ຕໍ່າໄວ້ ເຮົາໄດ້ຕີລາຄາຄຸນຄ່າຂອງດິນທີ່ໄດ້ທຳການເກັບກູ້ ໂດຍໄດ້ອີງໃສ່ຄຸນຄ່າຂອງດິນນາໃນການຄິດໄລ່ລາຄາຂອງດິນທີ່ໄດ້ຖືກເກັບກູ້ທັງໝົດ (ຄ່າດ້ານກາລະໂອກາດ). ດັ່ງນັ້ນຄ່າປະຕິບັດການທັງໝົດໃນປີ 1999 ຕົກເປັນປະມານ $6 ລ້ານ. ເມື່ອຄິດໄລ່ໃສ່ຄ່າໃຊ້ຈ່າຍ $4 ລ້ານແລ້ວ ເຮົາກໍ່ຈະໄດ້ອັດຕຣາການໃຊ້ຈ່າຍຜົນປະໂຫຍດໄດ້ຮັບ ໃນອັດຕາ 1:1,5.

❒ ຄ່າໃຊ້ຈ່າຍສະເລ່ຍໃນການເກັບກູ້ຕົກເປັນ $4.411 ຕໍ່ເຮັກຕາ ຫຼື 44 ເຊັນຕໍ່ແມັດມົນທົນ. ໄດ້ສັງເກດເຫັນວ່າມີຄວາມແຕກຕ່າງກັນໃນຄ່າໃຊ້ຈ່າຍລະຫວ່າງໜ່ວຍງານໃໝ່ ແລະໜ່ວຍງານເກົ່າທີ່ມີປະສົບການຫຼາຍກວ່າ.

❒ ລາຄາສະເລ່ຍໃນການທຳລາຍລູກລະເບີດຕົກເປັນ $11 ຕໍ່ລູກ.

❒ ຄ່າໃຊ້ຈ່າຍສະເລ່ຍເຂົ້າໃນວຽກງານໂຄສະນາສຶກສາຊຸມຊົນຕົກເປັນ $361 ຕໍ່ການຢ້ຽມຢາມບ້ານໃນແຕ່ລະຄັ້ງ ຫຼື $3,67 ຕໍ່ຫົວຄົນ ຜູ້ໄດ້ຮັບຜົນປະໂຫຍດ.

❒ ຄຸນຄ່າຂອງຜົນປະໂຫຍດມີຫຼາຍ ຫຼືໜ້ອຍກໍ່ແລ້ວແຕ່ວິທີການວັດແທກ. ຊຸມຊົນສ່ວນໃຫຍ່ໃຊ້ຊີວິດເປັນຊາວກະສິກອນຫາກິນພຽງແຕ່ກຸ້ມຕົນເອງ, ລາຍຮັບສະເລ່ຍຂອງເຂົາເຈົ້າຖືວ່າຕໍ່າ, ແລະຄຸນຄ່າຂອງດິນໂດຍສະເລ່ຍແມ່ນຕໍ່າ. ໃນ ສປປລາວ ຜະລິດຕະພັນພາຍໃນລວມ (GDP) ຕໍ່ຫົວຄົນຕົກເປັນ $350. ຕໍ່ຕົວເລກດັ່ງກ່າວນີ້ດັດສະນີການພັດທະນາ ສປຊ ໄດ້ກຳນົດຄຸນຄ່າທຽບເທົ່າທາງດ້ານພະລັງຊື້(PPP)ໃຫ້ຕົກເປັນ $1.300 ຊຶ່ງນີ້ກໍ່ໝາຍຄວາມວ່າເງິນໂດລາໃຊ້ຢູ່ໃນ ສປປລາວ ມີຄຸນຄ່າດ້ານພະລັງຊື້ເທົ່າກັບ $4 ເວລາໃຊ້ຈ່າຍໃນແຫ່ງອື່ນໆຂອງໂລກ.

❒ ຕົວຢ່າງນີ້ທີ່ຊີ້ໃຫ້ເຫັນເຖິງຜົນປະໂຫຍດທີ່ໄດ້ລົງທຶນໄປ ແມ່ນວ່າແຕ່ລະເຮັກຕາທີ່ໄດ້ເກັບກູ້ລະເບີດ ສາມາດທຳການຜະລິດເຂົ້າບໍ່ພຽງແຕ່ນຶ່ງປີເທົ່ານັ້ນແຕ່ຈະສາມາດທຳການຜະລິດໃນປີຕໍ່ໆມາໄດ້; ຖ້າເຮົາຫາກສົມມຸດວ່າການເກັບກູ້ລະເບີດຈາກທົ່ງໄຮ່ທົ່ງນາເພື່ອທຳການຜະລິດເຂົ້າເພີ້ມຂຶ້ນ 12,5% ຕໍ່ປີຈົນຮອດປີ 2005 ນັ້ນກໍ່ໝາຍຄວາມວ່າ ອກລ ຈະຕ້ອງເກັບກູ້ລະເບີດໃນເນື້ອທີ່ປະມານ 3.700 ເຮັກຕາ ແລະຈະຜະລິດເຂົ້າໄດ້ຫຼາຍກວ່າ 10.000 ໂຕນ ແລະສາມາດລ້ຽງເກືອຄົນໄດ້ປະມານ 50.000 ຄົນຕໍ່ປີ.

❒ ຕົວແບບເສດຖະກິດຖືວ່າເປັນເຄື່ອງມືທີ່ມີຄຸນຄ່າຫຼາຍ ແຕ່ກໍ່ຕ້ອງຄຳນຶງເຖິງຜົນປະໂຫຍດ ແລະຄ່າສັງຄົມຕ່າງໆ ທີ່ບໍ່ສາມາດກຳນົດໄດ້ຢ່າງຈະແຈ້ງແຕ່ຫາກມີຄວາມສຳຄັນຊ່ຳໆກັນ ໃນນັ້ນກໍ່ລວມມີຄວາມຮູ້ສຶກຮັບປະກັນ, ຄວາມຫວັງໃນອານາຄົດທີ່ດີ ແລະການຢູ່ດີກິນດີຂອງຊຸມຊົນ. ໃນການສຶກສາຄັ້ງນີ້ເຮົາບໍ່ໄດ້ຄິດໄລ່ຄຸນຄ່າທີ່ເວົ້າມານັ້ນໄດ້ ຍ້ອນມີເວລາຈຳກັດ ແຕ່ເຖິງຢ່າງໃດກໍ່ຕາມ ອກລ ກໍ່ໄດ້ສະໜອງຄຸນຄ່າເຫຼົ່ານັ້ນຕື່ມເຂົ້າໃນຜົນປະໂຫຍດທີ່ຊຸມຊົນໄດ້ຮັບມາແລ້ວ.

❒ ການພັດທະນາດ້ານສັງຄົມນັ້ນ ເປັນການຍາກທີ່ຕ້ອງຕີລາຄາໃນແງ່ເສດຖະກິດ. ເຖິງຢ່າງໃດກໍ່ຕາມການເກັບກູ້ລະເບີດສຳລັບກໍ່ສ້າງໂຮງຮຽນ, ຕະຫຼາດ ແລະເພື່ອສະຖານທີ່ຊຸມຊົນອື່ນໆກໍ່ຍັງມີຄວາມສຳຄັນສູງ ແລະຄວາມຈິງແລ້ວສະຖານທີ່ເຫຼົ່ານີ້ ໃນຄວາມເຂົ້າໃຈຂອງຊຸມຊົນເອງ ນັບວ່າເປັນສິ່ງທີ່ມີຄວາມສຳຄັນສູງ ແລະຖືວ່າເປັນບູລິມະສິດ ເພື່ອທຳການເກັບກູ້ລະເບີດ ຊຶ່ງຖ້າຈະເວົ້າແລ້ວກໍ່ແມ່ນພາລະບົດບາດດ້ານມະນຸດສະທຳຂອງ ອກລ.

❒ ການໃຊ້ຈ່າຍດ້ານສາກົນບໍ່ໄດ້ລວມຢູ່ໃນການສຶກສາຄັ້ງນີ້ ຍ້ອນຖືວ່າຄ່າໃຊ້ຈ່າຍໃນຕອນເລີ່ມຕົ້ນໂຄງການເຫຼົ່ານັ້ນນັບມື້ຈະຫຼຸດລົງ, ຈຸດປະສົງໃນນີ້ແມ່ນເພື່ອຊອກຫາຄວາມເຂົ້າໃຈທີ່ດີກວ່າເກົ່າ ກ່ຽວກັບຄວາມຮຽກຮ້ອງຕ້ອງການໄລຍະຍາວ ເພື່ອດຳເນີນໂຄງການລະດັບຊາດ.

## ຄຸນຄ່າດິນສຳລັບ:

| | |
|---|---|
| ປຸກສ້າງເຮືອນຊານ | $22.773/ເຮັກຕາ |
| ສວນ | $ 3.416/ເຮັກຕາ |
| ຕະຫຼາດ | $ 7.584/ເຮັກຕາ |
| ໂຮງຮຽນ ແລະ ສະຖານທີ່ກໍ່ສ້າງສາທາລະນະ | ບໍ່ມີຂໍ້ມູນ |
| ຖະໜົນຫົນທາງ ແລະ ສະຖານທີ່ເປົ່າຫວ່າງ | ບໍ່ມີຂໍ້ມູນ |

ຈຳນວນທັງໝົດຄິດໄລ່ເປັນໂດລາ



# ຢູ່ໃນສະໜາມ

## ບົດສະຫຼຸບຂອງແຕ່ລະແຂວງ

## ເຊກອງ

ໃນຊ່ວງໜຶ່ງປີ ໜ່ວຍເຮັດວຽກ ອກລ ໄດ້ປະຕິບັດກິດຈະກຳເກັບກູ້ແລະໂຄສະນາສຶກສາຢູ່ສອງເມືອງ ຄືເມືອງລະມາມແລະທ່າແຕງ, ພ້ອມ ກັນນັ້ນກໍ່ໄດ້ປະຕິບັດໜ້າທີ່ເກັບກູ້ເຄື່ອນທີ່ຢ່າງບໍ່ຕາຍຕົວເພື່ອໃຫ້ການສະໜັບສະໜູນແກ່ວຽກງານໂຄງການພັດທະນານ້ຳສະອາດຢູ່ກະລຶມແລະດັກຈຶງ. ລວມທັງໝົດໜ່ວຍງານເກັບກູ້ໄດ້ເກັບກູ້ລູກລະເບີດ 2.948 ໜ່ວຍ, ໄດ້ເກັບກູ້ລະເບີດຈາກເນື້ອທີ່ບ້ານ 20 ເຮັກຕາ,ແລະໜ່ວຍໂຄສະນາສຶກສາໄດ້ຢ້ຽມຢາມ 59 ບ້ານ. ຈຳນວນພະນັກງານໄດ້ເພີ່ມຂຶ້ນຈາກ 72 ຄົນໃນເດືອນມັງກອນ ເຖິງ 87 ຄົນໃນເດືອນທັນວາ. ພະນັກງານໄດ້ຮັບການສະໜັບສະໜູນຈາກທີ່ປຶກສາວິຊາການສອງຄົນ.

ເຂດທີ່ໜ່ວຍງານໄປປະຕິບັດການຢູ່ສ່ວນໃຫຍ່ແມ່ນເຂດໂດດດ່ຽວຫ່າງໄກ ຍ້ອນວ່າຫົນທາງຫຼາຍໆເສັ້ນຖືກທຳລາຍດ້ວຍລູກລະເບີດໃນປາງສົງຄາມ. ໄດ້ຄາດຄະເນກັນວ່າດິນຫຼາຍກວ່າ 670 ກິໂລແມດມົນທົນມີລູກລະເບີດຕົກຄ້າງຢູ່, ເຄິ່ງນຶ່ງໃນເນື້ອທີ່ເປັນທົ່ງຫຍ້າ ແລະອີກ 300 ກິໂລແມດມົນທົນທີ່ເຫຼືອແມ່ນຕົກຄ້າງນຳທົ່ງໄຮ່ເຂົ້າເທິງພູໃນແຂວງນີ້ແມ່ນມີລະເບີດບໍ່ທັນແຕກຕົກຄ້າງຢູ່, ດັ່ງນັ້ນຫຼາຍໆກິດຈະກຳພັດທະນາຈະເຮັດໄດ້ກໍ່ຕ້ອງເກັບກູ້ລະເບີດອອກເສຍກ່ອນ.

ອົງການບໍ່ສັງກັດລັດອົງການຊ່ວຍເຫຼືອປະຊາຊົນ ນໍເວ (NPA) ເປັນຜູ້ສະໜອງການປຶກສາວິຊາການ ຊຶ່ງສຸມໃສ່ການພັດທະນາທັກສະ (ຄວາມຊຳນານງານ) ດ້ານເຕັກນິກ ແລະບໍລິຫານຄຸ້ມຄອງໃຫ້ແກ່ຫົວໜ້າໜ່ວຍງານ. ເຊັ່ນດຽວກັບກໍລະນີອັດຕະປື, ເງິນເດືອນ ແລະຄ່າໃຊ້ຈ່າຍພາຍໃນຕ່າງໆແມ່ນມາຈາກການປະກອບສ່ວນຂອງລັດຖະບານ ນໍເວ ໃຫ້ແກ່ກອງທຶນພິເສດ, ແລະຄ່າໃຊ້ຈ່າຍໃຫ້ພາກສ່ວນສາກົນແມ່ນມາຈາກອົງການ NORAD ໂດຍກົງທີ່ໃຫ້ແກ່ອົງການ NPA.

### ຄູ່ຮ່ວມປະຕິບັດງານໃນແຂວງເຊກອງ ແລະ ອັດຕະປື

ອົງການຊ່ວຍເຫຼືອ NPA ຂອງປະເທດ ນໍເວ ແມ່ນອົງການຈັດຕັ້ງບໍ່ສັງກັດລັດສາກົນສຳຄັນນຶ່ງດ້ານເກັບກູ້ທຳລາຍລະເບີດ. ອົງການດັ່ງກ່າວໄດ້ເລີ່ມເຮັດວຽກຢູ່ແຂວງເຊກອງ ນັບແຕ່ທ້າຍປີ 1997, ແລະຢູ່ແຂວງອັດຕະປື ນັບແຕ່ 1998. ໂດຍໄດ້ຮັບເງິນຊ່ວຍເຫຼືອລ້າຈາກອົງກອນ ນໍເວ Norad, NPA ໄດ້ໃຫ້ການບໍລິການເພີ່ມເຕີມດ້ວຍການຈັດຊຸດອົບຮົມຢູ່ກັບບ່ອນເຮັດວຽກໃຫ້ແກ່ພະນັກງານ ອກລ. ຈຸດປະສົງຂອງອົງການ NPA ແມ່ນສືບຕໍ່ພັດທະນາຄວາມສາມາດຂອງພະນັກງານລາວຢູ່ແຂວງ ເພື່ອໃຫ້ເຂົາເຈົ້າສາມາດບໍລິຫານຄຸ້ມຄອງ ແລະເພື່ອສາມາດປະຕິບັດທຸກໆດ້ານຂອງວຽກໂຄງການ

## ອັດຕະປື

ໃນປີ 1999 ວຽກງານດ້ານເກັບກູ້ ແລະໂຄສະນາສຶກສາຊຸມຊົນໄດ້ມີຂຶ້ນຢູ່ເມືອງ ສະໜາມໄຊ, ສາມັກຄີໄຊ, ແລະພູວົງ, ສ່ວນໃຫຍ່ຂອງວຽກງານໄດ້ສຸມໃສ່ເມືອງພູວົງ. ຈຳນວນພະນັກງານປະຕິບັດໜ້າວຽກຢູ່ແຂວງໄດ້ເພີ່ມຂຶ້ນຈາກ 60 ຄົນໃນເດືອນມັງກອນເຖິງ 86 ຄົນໃນທ້າຍເດືອນທັນວາ. ພະນັກງານດັ່ງກ່າວໄດ້ຮັບການສະໜັບສະໜູນໂດຍທີ່ປຶກສາວິຊາການສອງຄົນ.

ໃນປີ 1999 ໜ່ວຍງານໂຄສະນາສຶກສາໄດ້ຢ້ຽມຢາມ 64 ບ້ານ, ແລະໜ່ວຍງານເກັບກູ້ ແລະໜ່ວຍເຄື່ອນທີ່ໄດ້ກູ້ລະເບີດ 2,545 ໜ່ວຍ, ໃນນັ້ນ 118 ໜ່ວຍແມ່ນລະເບີດຂະໜາດໃຫຍ່ຖິ້ມຈາກເຮືອບິນ. ໄດ້ທຳການເກັບກູ້ລະເບີດອອກຈາກດິນຊາວບ້ານ 11 ເຮັກຕາ, ບາງສ່ວນໃນນັ້ນແມ່ນເພື່ອສ້າງສະຖານທີ່ອຳນວຍຄວາມສະດວກດ້ານອະນາໄມ, ໂຄງການຊົນລະປະທານ, ເດີ່ນໂຮງຮຽນ ແລະທົ່ງນາ. ສ່ວນໃຫຍ່ຂອງບ່ອນເຮັດວຽກຂອງ ອກລ ແມ່ນຢູ່ໃນເຂດຊຸມຊົນເຜົ່າສ່ວນໜ້ອຍ ຊຶ່ງມັນສະແດງໃຫ້ເຫັນເຖິງຄວາມຫຼາກຫຼາຍຂອງຊົນເຜົ່າພາຍໃນແຂວງ.

# ຄຳມ່ວນ

ໜ່ວຍງານ ອກລ ໄດ້ເລີ່ມປະຕິບັດການເກັບກູ້ຢູ່ເມືອງມະຫາໄຊໃນເດືອນພຶດສະພາ 1999 ແລະໄດ້ຂະຫຍາຍອອກໄປສູ່ເມືອງທີສອງຄື ຍົມມະລາດ ໃນຕອນທ້າຍຂອງປີ 1999. ວຽກງານເກັບກູ້ຈະໄດ້ຂະຫຍາຍອອກໄປສູ່ເມືອງບົວລະພາໃນປີ 2000.

ໜ່ວຍງານໄດ້ເກັບກູ້ລູກລະເບີດ 4.263 ລູກ,ໄດ້ບຸກເບີກເນື້ອທີ່ດິນບ້ານ ແລະດິນອື່ນໆຈຳນວນ 4 ເຮັກຕາ. ໃນຊ່ວງນີ້ງປີໜ່ວຍງານໂຄສະນາສຶກສາຊຸມຊົນໄດ້ເຄື່ອນໄຫວຢ້ຽມຢາມບ້ານ 56 ຄັ້ງ. ສະໜັບສະໜູນໜ່ວຍງານລາວ ມີທີ່ປຶກສາວິຊາການອົງການສຸພານິມິດອອສເຕຣເລຍ (WVA) ສອງຄົນ.

ຈຸດສຸມໃນຕອນທຳອິດແມ່ນຮັບປະກັນໃຫ້ມີການລິເລີ່ມ, ການຝຶກອົບຮົມ ແລະກິດຈະກຳກະກຽມສິ່ງອຳນວຍຄວາມສະດວກຕ່າງໆ. ຈຳນວນພະນັກງານໃນເດືອນມັງກອນ 1999 ມີ 44 ຄົນ ແລະໄດ້ເພີ່ມຂຶ້ນ 62 ຄົນ ໃນເດືອນທັນວາ. ຄ່າໃຊ້ຈ່າຍໃຫ້ອົງການສູພານິມິດອອສເຕຣເລຍ ມາຈາກລັດຖະບານ ອອສເຕຣເລຍ ແລະການໃຊ້ຈ່າຍພາຍໃນປະເທດປັດຈຸບັນແມ່ນມາຈາກຫ່ວງເງິນທີ່ບໍ່ໄດ້ກຳນົດການໃຊ້ສະເພາະຈາກກອງທຶນພິເສດ.

## ຄູ່ຮ່ວມປະຕິບັດງານຢູ່ແຂວງຄຳມ່ວນ

ອົງການສຸພານິມິດ ອອສເຕຣເລຍ (WVA) ໄດ້ເລີ່ມໃຫ້ການຊ່ວຍເຫຼືອມາແຕ່ປີ 1999 ຊຶ່ງມີເງິນທຶນຊ່ວຍເຫຼືອຈາກອົງການຊ່ວຍເຫຼືອຕ່າງປະເທດຂອງລັດຖະບານ ອົສຕຣາລີ ເອີ້ນວ່າ ອອສເອດ (Aus AID). ອົງການ WVA ກຳລັງໃຫ້ການສະໜັບສະໜູນ ອກລ ໃນດ້ານການປຶກສາວິຊາການໃຫ້ແກ່ວຽກງານເກັບກູ້ລະເບີດ. ນອກນັ້ນແລ້ວກໍ່ສະໜັບສະໜູນດ້ານສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງເພື່ອໃຫ້ສາມາດບໍລິຫານຄຸ້ມຄອງກິດຈະກຳໂຄງການໃນລະດັບແຂວງ ແລະເມືອງ.







## ການຝຶກອົບຮົມຢູ່ກັບບ່ອນເຮັດວຽກ

ນຶ່ງໃນບົດບາດສຳຄັນຂອງຄູ່ຮ່ວມປະຕິບັດງານແມ່ນສືບຕໍ່ຝຶກພະນັກງານທຳລາຍລະເບີດ. ຈຸດສຸມຂອງການຝຶກແມ່ນເພື່ອເພີ່ມທະວີຄວາມສາມາດດ້ານວິຊາການຂອງຫົວໜ້າໜ່ວຍງານເກັບກູ້ ທຳລາຍລະເບີດ, ວາງແຜນ ແລະບໍລິຫານຄຸ້ມຄອງ : ພວກເຂົາເຈົ້າຕ້ອງຜ່ານຫຼາຍໆສະພາບການເພື່ອຍົກລະດັບຄວາມຮູ້ບົດຮຽນອັນຈຳເປັນ ແລະກໍ່ຕ້ອງໝູນວຽນໄປເຮັດວຽກກັບໜ່ວຍງານເຄື່ອນທີ່ ແລະໜ່ວຍເກັບກູ້ລະເບີດທີ່ຝັງຢູ່ໃຕ້ດິນ

# ແຂວງຊຽງຂວາງ

ແຂວງຊຽງຂວາງເປັນແຂວງທີ່ມີການປະຕິບັດງານຫຼາຍທີ່ສຸດ ໂດຍໄດ້ເລີ່ມຕົ້ນແຕ່ປີ 1994. ສະພາບລະເບີດທີ່ບໍ່ແຕກຕົກຄ້າງຢູ່ໃນແຂວງມີຫຼາຍ ແລະໜັກໜ່ວງທີ່ສຸດ, 25% ຂອງດິນແມ່ນມີລູກລະເບີດຕົກຄ້າງຢູ່. ຖ້າຫາກບໍ່ມີສະພາບລະເບີດຄືແນວນັ້ນ 645 ກິໂລແມດມົນທົນ ສາມາດເປັນທົ່ງນາປູກເຂົ້າ, 250 ກິໂລແມດມົນທົນເປັນນາໂຄກ ແລະ 220 ກິໂລແມດມົນທົນເປັນທົ່ງຫຍ້າລ້ຽງສັດ.

ພາຍຫຼັງທີ່ໄດ້ປັບປຸງການນຳໃຊ້ເຄື່ອງມືຊອກຫາລະເບີດປະເພດມີຫ່ວງໃຫຍ່ (large loop detectors) ແລ້ວເຫັນວ່າເນື້ອທີ່ເກັບກູ້ໄດ້ເພີ່ມຂື້ນຢ່າງຫຼວງຫຼາຍ. ສະເພາະເຂດທົ່ງກວ້າງທີ່ບໍ່ມີປ່າປົກຫຸ້ມເຫັນວ່າມີຜົນສຳເລັດຢ່າງຫຼວງຫຼາຍ ພວກເຮົາສາມາດເກັບກູ້ໄດ້ໃນເນື້ອທີ່ທັງໝົດ 194 ເຮັກຕາໃນນຶ່ງປີຜ່ານມາ. ຕົວເລກດັ່ງ ກ່າວ ຊີ້ໃຫ້ເຫັນເຖິງຄວາມຄືບໜ້າຢ່າງຫຼາຍເພາະວ່າຖ້າທຽບໃສ່ປີກ່ອນໜ້ານັ້ນ ເຮົາສາມາດເກັບກູ້ໄດ້ພຽງແຕ່ 25 ເຮັກຕາ. 85% ຂອງເນື້ອທີ່ດິນທຳການເກັບກູ້ແມ່ນເພື່ອວຽກງານກະສິກຳ ແລະ 15% ເປັນດິນເພື່ອຮັບໃຊ້ຊຸມຊົນເຊັ່ນ ໂຮງຮຽນ ແລະຕະຫຼາດ. ໜ່ວຍງານພວກເຮົາໄດ້ເກັບກູ້ລູກລະເບີດທີ່ບໍ່ທັນແຕກ 26.403 ໜ່ວຍ ໃນເວລາປະຕິບັດງານຢູ່ 6 ເມືອງເຊັ່ນຢູ່ເມືອງຄຳ, ຄູນ, ໜອງແຮດ, ແປກ, ພະໄຊ, ແລະພູກູດ. ໜ່ວຍໂຄສະນາສຶກສາຊຸມຊຸມໄດ້ຢ້ຽມຢາມບ້ານຕ່າງໆ 113 ຄັ້ງໃນນຶ່ງປີ.

ທີ່ປຶກສາວິຊາການ ແລະບໍລິຫານຄຸ້ມຄອງໄດ້ແກ່ອົງການບໍ່ສັງກັດລັດອັງກິດ ຄືກຸ່ມທີ່ປຶກສາດ້ານລະເບີດ ແມກ (MAG). ລັດຖະບານແດນມາກ ໄດ້ສະໜອງທຶນຢ່າງຄົບຖ້ວນສຳລັບກິດຈະກຳຕ່າງໆພາຍໃນແຂວງໂດຍຜ່ານກອງທຶນພິເສດແຫ່ງຊາດ ແລະຄ່າໃຊ້ຈ່າຍກັບສາກົນສຳລັບວຽກງານຂອງ ແມກ ແມ່ນມາຈາກການປະກອບສ່ວນເຂົ້າໃນກອງທຶນພິເສດ.

ຈຳນວນພະນັກງານລາວທີ່ໄດ້ຮັບການສະໜັບສະໜູນຈາກທີ່ປຶກສາສອງຄົນໄດ້ເພີ້ມຂື້ນຈາກ 176 ຄົນໃນເດືອນມັງກອນ 1999 ເຖິງ 181 ຄົນໃນເດືອນທັນວາປີດຽວກັນ. ອັດຕາສ່ວນລະຫວ່າງທີ່ປຶກສາວິຊາການຕໍ່ຈຳນວນພະນັກງານເຫັນວ່າຕ່ຳໃນແຂວງນີ້ຍ້ອນວ່າພາຍຫຼັງທີ່ໄດ້ຮັບການຝຶກອົບຮົມເຖິງ 6 ປີແລ້ວ ຫົວໜ້າໜ່ວຍງານລາວ ມາເຖິງປັດຈຸບັນສາມາດປະຕິບັດເກືອບທຸກໆວຽກງານໄດ້ດີ ແລະຈະຂໍຄວາມຊ່ວຍເຫຼືອຈາກທີ່ປຶກສາພຽງແຕ່ໃນກໍລະນີທີ່ພົບເຫັນລູກລະເບີດປະເພດໃໝ່ ແລະສັບສົນເທົ່ານັ້ນ. ໃນປີ 2000 ອກລ ຈະເປັນຜູ້ຮັບຜິດຊອບ—ບໍລິຫານຄຸ້ມຄອງພະນັກງານລາວ.

## ຄູ່ຮ່ວມປະຕິບັດງານໃນແຂວງຊຽງຂວາງ ແລະສາລະວັນ

ອົງການກຸ່ມທີ່ປຶກສາດ້ານລະເບີດ ແມກ ແມ່ນອົງການສາກົນບໍ່ສັງກັດລັດຕັ້ງຢູ່ປະເທດອັງກິດ ທີ່ມີວິຊາການເກັບກູ້ທຳລາຍລະເບີດ. ແມກ ໃນຕອນເລີ່ມຕົ້ນແມ່ນໄດ້ເກັບກູ້ຢູ່ຊຽງຂວາງໃນປີ 1994 ຊຶ່ງວຽກນັ້ນແມ່ນສ່ວນນຶ່ງຂອງໂຄງການສຶກສາຂອງ ອກລ ໂດຍມີອົງການເມນໂນໄນ ເປັນຜູ້ປະຕິບັດ. ໃນຕອນຕົ້ນໄດ້ສຸມວຽກງານໃສ່ສາມເມືອງ ແລະຕໍ່ມາ 1997 ໄດ້ຂະຫຍາຍໄປສູ່ສາມເມືອງຕື່ມອີກ. ອົງການ ແມກ ກຳລັງຊ່ວຍ ອກລ ໃນແຂວງຊຽງຂວາງ ແລະສາລະວັນ ໂດຍໄດ້ສ້າງຄວາມເຂັ້ມແຂງໃຫ້ພະນັກງານລາວເພື່ອຈະສາມາດປະຕິບັດ ແລະບໍລິຫານຄຸ້ມຄອງປະຕິບັດການຂອງແຂວງໄດ້ຢ່າງມີປະສິດທິພາບ. ອົງການ ແມກ ໄດ້ເລີ່ມເຮັດວຽກຢູ່ສາລະວັນ ໃນປີ 1997 ແລະໄດ້ສຸມໃສ່ 5 ຕົວເມືອງ.

MINES ADVISORY GROUP
MAG
HUMANITARIAN MINE ACTION

# ແຂວງສາລະວັນ

ໜ່ວຍງານ ອກລ ໄດ້ປະຕິບັດງານໃນເມືອງສະໝ້ວຍ, ຕະໂອ້ຍ ແລະສາລະວັນ. ວຽກງານໂຄສະນາສຶກສາຊາວບ້ານໄດ້ຂະຫຍາຍອອກໄປສູ່ ເຫຼົ່າງາມ ແລະຄົງເຊໂດນ ໃນເດືອນກັນຍາໄດ້ມີການໂອນພະນັກງານຂອງ ແມກ ໃຫ້ແກ່ ອກລ ຊຶ່ງນີ້ກໍ່ເປັນສ່ວນນຶ່ງຂອງຂະບວນການສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ. ພະນັກງານໄດ້ເພີ້ມຂື້ນຈາກ 72 ຄົນໃນເດືອນມັງກອນ 1999 ເຖິງ 121 ຄົນໃນເດືອນທັນວາ.

ອົງການ ແມກ ໄດ້ຮ່ວມມືກັບ ອກລ ໃນການໃຫ້ການຊ່ວຍເຫຼືອດ້ານເຕັກນິກກ່ຽວກັບການເກັບກູ້ ແລະທຳລາຍລະເບີດ. ການໃຊ້ຈ່າຍກັບສາກົນ ແລະພາຍໃນແຂວງສາລະວັນແມ່ນລັດຖະບານອັງກິດເປັນຜູ້ຮັບຜິດຊອບ.

ໃນປີ 1999 ໄດ້ເກັບກູ້ລະເບີດ 15.628 ໜ່ວຍ ແລະຖາກຖາງດິນສຳລັບກະສິກຳ ແລະການນຳໃຊ້ອື່ນໆໄດ້ 45 ເຮັກຕາ. ຊຸມຊົນໃນແຂວງໄດ້ສະແດງຄວາມຕັ້ງໃຈວ່າການເກັບກູ້ລະເບີດເພື່ອໃຫ້ມີດິນສຳລັບການປູກຝັງນັ້ນເປັນບູລິມະສິດສູງດັ່ງນັ້ນຈະສືບຕໍ່ວຽກງານດັ່ງກ່າວຕະຫຼອດປີ 2000. ໃນປີ 1999 ໜ່ວຍງານໂຄສະນາສຶກສາຊຸມຊົນໄດ້ຢ້ຽມຢາມ 89 ບ້ານເພື່ອຈຸດປະສົງສະໜອງຄວາມຮູ້ເພື່ອຫຼຸດຜ່ອນຄວາມສ່ຽງ

## ຄູ່ຮ່ວມປະຕິບັດງານໃນສະຫວັນນະເຂດ

ອົງການຄົນພິການສາກົນ (HI) ເປັນອົງການສາກົນນຶ່ງສຳຄັນທີ່ບໍ່ສັງກັດລັດ ມີສຳນັກງານໃຫຍ່ຕັ້ງຢູ່ປະເທດ ແບນຈຽມ. ແລະເຮັດວຽກດ້ານເກັບກູ້ທຳລາຍລະເບີດ ອົງການນີ້ໄດ້ສະໜັບສະໜູນ ອກລ ມາແຕ່ປີ 1996. HI ໄດ້ດຳເນີນການສຳຫຼວດລະດັບຊາດກ່ຽວກັບຜົນກະທົບຂອງລູກລະເບີດທີ່ບໍ່ທັນແຕກ ທີ່ມີຕໍ່ສັງຄົມເສດຖະກິດ. ປັດຈຸບັນແມ່ນສະຫະພັນຢູໂຣບເປັນຜູ້ໃຫ້ທຶນແກ່ HI ເພື່ອໃຫ້ການປຶກສາດ້ານວິຊາການ ແລະເພື່ອສະໜອງອຸປະກອນບາງອັນໃຫ້ແກ່ແຂວງສະຫວັນນະເຂດ.

HANDICAP INTERNATIONAL


Jim Holmes

## ແຂວງສະຫວັນນະເຂດ

ຫຼາຍໆໝູ່ບ້ານໃນເຂດເຊໂປນ ໄດ້ສືບຕໍ່ລາຍງານການພົບພໍ້ລູກລະເບີດທີ່ບໍ່ທັນແຕກທີ່ຕົກຄ້າງຈາກການຖິ້ມລະເບີດ ແລະການຕໍ່ສູ້ຢູ່ສະໜາມຮົບ, ພ້ອມດຽວກັນນັ້ນເມືອງອື່ນໆກໍ່ໄດ້ລາຍງານການພົບເຫັນລູກລະເບີດທີ່ສ່ວນຫຼາຍແມ່ນລູກລະເບີດ ບ້ອມບີ ຊຶ່ງມັກຈະພົບເຫັນຢູ່ເຂດປ່າໄມ້ ແລະທົ່ງໄຮ່ໃນເຂດພູ. ອກລ ໄດ້ຮັບການສະໜັບສະໜູນຈາກ HI ປະເທດແບນຈຽມ ໄດ້ສືບຕໍ່ປະຕິບັດແຜນງານປະສົມປະສານເພື່ອກຳຈັດ ແລະຫຼຸດຜ່ອນຄວາມສ່ຽງໃນເມືອງຕ່າງໆເຫຼົ່ານັ້ນຕະຫຼອດປີ 1999. ໜ່ວຍງານໄດ້ເກັບກູ້ລູກລະເບີດທີ່ບໍ່ທັນແຕກ 14.312 ລູກ ແລະໄດ້ບຸກເບີກດິນ 78 ເຮັກຕາ. ໜ່ວຍໂຄສະນາສຶກສາຊຸມຊົນໄດ້ລົງໄປເຖິງ 111 ໝູ່ບ້ານ. ກິດຈະກຳເກັບກູ້ທຳລາຍລວມທັງໜ່ວຍເຄື່ອນທີ່, ໜ່ວຍສຳຫຼວດ ແລະໂຄສະນາສຶກສາຊຸມຊົນໄດ້ມີຂຶ້ນໃນ 3 ເມືອງເຊັ່ນ ເຊໂປນ, ນອງ ແລະພິນ. ພ້ອມກັນນັ້ນກໍ່ມີກິດຈະກຳຂ້ອນຂ້າງຈຳກັດໃນເມືອງວິລະບູລີ ແລະອາດສະພັງທອງ.

ຈຳນວນພະນັກງານໄດ້ເພີ້ມຂຶ້ນຈາກ 120 ຄົນໃນເດືອນມັງກອນເຖິງ 148 ຄົນໃນເດືອນທັນວາ ປີ 1999 ແລະໜ່ວຍງານໄດ້ຮັບການສະໜັບສະໜູນຈາກທີ່ປຶກສາ 5 ຄົນ. ການໃຊ້ຈ່າຍກັບພະນັກງານລາວໃນປີນັ້ນໄດ້ມາຈາກເງິນຂອງລັດຖະບານ ລັກຊຳເບີກ ໂດຍຜ່ານກອງທຶນພິເສດແຫ່ງຊາດ ແລະ ສະຫະພັນຢູໂຣບ ໄດ້ສະໜອງທຶນໂດຍກົງໃຫ້ແກ່ HI

## ຈຳປາສັກ

ໃນປີ 1999 ໜ່ວຍງານ ອກລ ໄດ້ດຳເນີນງານຢູ່ເມືອງປາກຊ່ອງ ແລະບາຈຽງ ໂດຍມີໜ່ວຍງານສຸກເສີນເຄື່ອນທີ່ປະຕິບັດການຢູ່ທຸກແຫ່ງທົ່ວພາຍໃນແຂວງ, ໜ່ວຍງານໄດ້ເກັບກູ້ລະເບີດ 13,981 ໜ່ວຍ, ແລະບຸກເບີກເນື້ອທີ່ 56 ເຮັກຕາຂອງເນື້ອທີ່ດິນໃນບ້ານ ຊຶ່ງສ່ວນໃຫຍ່ແມ່ນເພື່ອສ້າງໂຮງຮຽນ, ພ້ອມກັນນັ້ນກໍ່ໄດ້ດຳເນີນວຽກງານສຶກສາຊຸມຊົນ 56 ຄັ້ງ.

ຈຳນວນພະນັກງານລາວໄດ້ເພີ້ມຂຶ້ນຈາກ 69 ຄົນໃນເດືອນມັງກອນເຖິງ 74 ຄົນໃນເດືອນທັນວາ. ໜ່ວຍງານທີ່ໄດ້ຮັບການສະໜັບສະໜູນຈາກທີ່ປຶກສາວິຊາການ 4 ຄົນກ່ຽວກັບການເກັບກູ້ ແລະທຳລາຍລະເບີດມາຈາກກອງທັບປະເທດແບນຈຽມ. ການຊ່ວຍເຫຼືອດັ່ງກ່າວນີ້ຖືວ່າເປັນການຊ່ວຍເຫຼືອປະເພດບໍ່ແມ່ນເງິນຂອງລັດຖະບານແບນຈຽມ. ຄ່າໃຊ້ຈ່າຍສຳລັບພະນັກງານລາວ (ເກັບກູ້ ແລະທຳລາຍລະເບີດ, ນັກສຳຫຼວດ ...) ມາຈາກທ່ອງເງິນທີ່ບໍ່ໄດ້ກຳນົດການໃຊ້ສະເພາະຂອງກອງທຶນພິເສດ.

ການສະໜັບສະໜູນດ້ານວິຊາການຈາກທະຫານແບນຈຽມໄດ້ເພີ້ມຂຶ້ນໃນປີ 1999 ນອກນັ້ນແລ້ວປະເທດແບນຈຽມຍັງໃຫ້ການສະໜັບສະໜູນດ້ານອຸບປະກອນພາກສະໜາມອີກດ້ວຍ.

## ຄູ່ຮ່ວມປະຕິບັດງານໃນແຂວງຈຳປາສັກ

ລັດຖະບານແບນຈຽມ ໄດ້ສະໜອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນໃນຮູບການມອບພະນັກງານທີ່ມີຄວາມສາມາດສູງດ້ານເກັບກູ້ທຳລາຍລູກລະເບີດທີ່ບໍ່ທັນແຕກ ເພື່ອສະໜັບສະໜູນວຽກງານໂຄງການ ອກລ ໃນແຂວງຈຳປາສັກ

ຜູ້ຊ່ຽວຊານເກັບກູ້ທຳລາຍລະເບີດໄດ້ເປັນທີ່ປຶກສາວິຊາການ ແລະໄດ້ຊ່ວຍອົບຮົມໜ່ວຍງານພ້ອມທັງໃຫ້ການສະໜັບສະໜູນການປະສານງານພາຍໃນແຂວງ.ຈຸດສຸມຂອງວຽກງານແມ່ນບຸກເບີກສະຖານທີ່ເພື່ອສ້າງເດີນໂຮງຮຽນ ແລະເພື່ອສະໜອງດິນໃຫ້ແກ່ການຜະລິດກະສິກຳໃຫ້ໄດ້ຫຼາຍກວ່າເກົ່າພາຍໃນແຂວງ.





Thierry Renvaud/UNDP

## ຄູ່ຮ່ວມປະຕິບັດງານໃນແຂວງ ຫົວພັນ ແລະແຂວງຫຼວງພະບາງ

Gerbera ແມ່ນບໍລິສັດການຄ້າຕັ້ງຢູ່ເຢຍລະມັນ. ໂດຍຜ່ານສັນຍາລະຫວ່າງສອງຝ່າຍກັບລັດຖະບານ ສປປລາວ ລັດຖະບານສາທາລະນະລັດສະຫະພັນເຢຍລະມັນ ຈຶ່ງໄດ້ມີສັນຍາກັບບໍລິສັດ Gerbera ໃນຕອນທ້າຍຂອງປີ 1996 ເພື່ອໃຫ້ການສະໜັບສະໜູນຂອງ ອກລ ທາງດ້ານເກັບກູ້ທຳລາຍລະເບີດ ແລະໂຄສະນາສຶກສາຊຸມຊົນໃນແຂວງຫົວພັນ. ນັບແຕ່ເດືອນເມສາ 1998 ບໍລິສັດ Gerbera ໄດ້ຮ່ວມມືພັດທະນາຄວາມສາມາດໃນການເກັບກູ້ທຳລາຍລະເບີດໃນແຂວງຫຼວງພະບາງ.

### ຫົວພັນ

ໜ່ວຍງານ ອກລ ໂດຍໄດ້ຮັບການສະໜັບສະໜູນຈາກທີ່ປຶກສາວິຊາການຂອງອົງການເກເບີຣາ (Gerbera) ໄດ້ດຳເນີນວຽກງານຢູ່ 3 ເມືອງໃນແຂວງຫົວພັນ ຊຶ່ງມີທັງໝົດ 6 ເມືອງ. 3 ເມືອງນັ້ນມີ ຊຳເໜືອ, ຫົວເມືອງ ແລະວຽງໄຊ. ໃນປີ 1999 ໜ່ວຍງານໄດ້ເກັບກູ້ລູກລະເບີດບໍ່ທັນແຕກ 6,998 ລູກ ແລະໄດ້ບຸກເບີກດິນ 101 ເຮັກຕາ ໃນນັ້ນ 76% ແມ່ນດິນເພື່ອທຳການກະສິກຳ. ໜ່ວຍງານໂຄສະນາສຶກສາໄດ້ຢ້ຽມຢາມ 55 ບ້ານ.

ຄ່າໃຊ້ຈ່າຍເພື່ອອົງການ Gerbera ແມ່ນມາຈາກລັດຖະບານເຢຍລະມັນ. ຄ່າໃຊ້ຈ່າຍສຳລັບພະນັກງານລາວໄດ້ມາຈາກທ່ອງເງິນທີ່ບໍ່ໄດ້ກຳນົດການໃຊ້ສະເພາະຂອງກອງທຶນພິເສດ.

ໃນເດືອນກໍລະກົດ 1999 ໄດ້ມີການໂອນພະນັກງານລາວຂອງອົງການ Gerbera ໃຫ້ແກ່ ອກລ ຊຶ່ງແມ່ນສ່ວນນຶ່ງຂອງຄວາມພະຍາຍາມສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງລະດັບຊາດກໍ່ຄືປະຕິບັດຕາມຂັ້ນຕອນຂອງການເປັນເຈົ້າຂອງໂຄງການ. ຈຳນວນພະນັກງານໄດ້ຢູ່ໃນລະດັບເກົ່າຄື 94 ຄົນຕະຫຼອດປີ 1999.

### ຫຼວງພະບາງ

ວຽກງານເກັບກູ້ ແລະໂຄສະນາສຶກສາຊຸມຊົນໄດ້ດຳເນີນຢູ່ເມືອງນ້ຳບາກໃນປີ 1999. ໜ່ວຍງານໄດ້ເກັບກູ້ລູກລະເບີດ 2,318 ລູກ ແລະບຸກເບີກດິນ 71 ເຮັກຕາ ໃນນັ້ນ 66% ແມ່ນດິນກະສິກຳ. ໜ່ວຍງານໂຄສະນາສຶກສາຊຸມຊົນໄດ້ຢ້ຽມຢາມ 73 ບ້ານນີ້ເພື່ອໃຫ້ການສຶກສາດ້ານຫຼຸດຜ່ອນຄວາມສ່ຽງ ແລະໃນປີດຽວກັນນັ້ນໄດ້ມີການສ້າງໜ່ວຍງານໂຄສະນາສຶກສາໜ່ວຍທີສອງຂຶ້ນພາຍໃນແຂວງ. ລະດັບພະນັກງານໃນແຂວງໄດ້ເພີ້ມຂຶ້ນຈາກ 41 ໃນເດືອນມັງກອນ 1999 ເປັນ 51 ຄົນໃນເດືອນທັນວາ.

ໄດ້ມີການວາງແຜນລະອຽດເພື່ອຈະຂະຫຍາຍກິດຈະກຳຕ່າງໆໄປຫາເມືອງນ້ຳບາກ ແລະງອຍພາຍໃນປີ 2000. ຄ່າອຸປະກອນ ແລະຄ່າດຳເນີນວຽກງານຂອງໜ່ວຍງານເກັບກູ້ແມ່ນໄດ້ຮັບການສະໜັບສະໜູນຈາກອົງການ Gerbera ຊຶ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານເຢຍລະມັນ. ຄ່າໃຊ້ຈ່າຍສຳລັບໜ່ວຍງານລາວມາຈາກທ່ອງເງິນທີ່ບໍ່ໄດ້ກຳນົດການໃຊ້ສະເພາະຂອງກອງທຶນພິເສດ.














ການປະຕິບັດງານ
ຢູ່ພາກສະໜາມ








ລະວັງລະເບີດ!
Danger! uxo!







# ວຽກງານເກັບກູ້

ໜ່ວຍງານ **ເກັບກູ້ເຄື່ອນທີ່** ໄດ້ປະຕິບັດງານຢູ່ນຳບ້ານເພື່ອເກັບກູ້ລູກລະເບີດທີ່ບໍ່ທັນແຕກຢູ່ຕາມໜ້າດິນ ຊຶ່ງປົກກະຕິແລ້ວແມ່ນໜ່ວຍງານສຳຫຼວດ ແລະ ໂຄສະນາສຶກສາຊຸມຊົນຂອງ ອກລ ເປັນຜູ້ລາຍງານການພົບເຫັນ. ຫຼາຍກວ່ານຶ່ງສ່ວນສີ່ຂອງຈຳນວນບ້ານໃນລາວມີລະເບີດບໍ່ທັນແຕກຕົກຄ້າງຢູ່ ດັ່ງນັ້ນນີ້ຈຶ່ງແມ່ນກິດຈະກຳສຳຄັນນຶ່ງເພື່ອຫຼຸດຜ່ອນຄວາມສ່ຽງ.

ການປະຕິບັດວຽກງານໃນປີ 1999 ເຮັດໃຫ້ໜ່ວຍງານເຄື່ອນທີ່ສາມາດເກັບກູ້ລູກລະເບີດ 71,939 ໜ່ວຍ ຊຶ່ງແມ່ນ 81% ຂອງຈຳນວນລູກລະເບີດທັງໝົດທີ່ເກັບໃນປີ 1999. ການໄປປະຕິບັດວຽກຂອງໜ່ວຍງານໄດ້ສ້າງຜົນປະໂຫຍດເພີ່ມເຕີມໃຫ້ຊາວບ້ານ ຍ້ອນມັນໄດ້ຊ່ວຍໃຫ້ຊຸມຊົນຮູ້ເຖິງພາລະບົດບາດຂອງໜ່ວຍງານເກັບກູ້ເຄື່ອນທີ່ອີກຕື່ມ ຊຸມຊົນຮູ້ວ່າຄວນພົວພັນຄືແນວໃດ. ດັ່ງນັ້ນຖ້າຫາກໜ່ວຍງານເຄື່ອນທີ່ໄດ້ໄປປະຕິບັດວຽກງານເກັບກູ້ທຳລາຍລະເບີດຢູ່ບ້ານໃດບ້ານນຶ່ງແລ້ວ ຊາວບ້ານນັ້ນກໍ່ມັກຈະຕິດຕໍ່ລາຍງານການພົບເຫັນລູກລະເບີດອີກຕື່ມ.

ແມ່ນຢູ່ວ່າການກັບຄືນໄປເຮັດວຽກໃນໝູ່ບ້ານເຫຼົ່ານັ້ນອີກຫຼາຍໆຄັ້ງ ເພື່ອເກັບກູ້ທຳລາຍລະເບີດເປັນເລື່ອງທີ່ຄາດຄະເນກັນໄວ້ຢູ່ແລ້ວ ແລະເປັນສິ່ງຈຳເປັນ ເຂົ້າໃຈວ່າການສັ່ງສອນຊາວບ້ານໃຫ້ "ຈື່ ແລະລາຍງານ" ການພົບເຫັນລູກລະເບີດ ຈະຊ່ວຍຍົກລະດັບປະສິດຕິພາບຂອງໜ່ວຍງານເກັບກູ້ເຄື່ອນທີ່.

ທີມງານເຄື່ອນທີ່ເປັນໜ່ວຍງານເຄື່ອນໄຫວໄປຕາມບ່ອນຕ່າງໆໃນນັ້ນມີຫົວໜ້າໜ່ວຍງານນຶ່ງຄົນ ແລະຜູ້ເກັບກູ້ລະເບີດ 4-5 ຄົນ, ແພດສະໜາມນຶ່ງຄົນ ແລະຄົນຂັບລົດນຶ່ງຄົນ. ຍ້ອນຕ້ອງໄດ້ພົບເຫັນລູກລະເບີດຫຼາຍໆປະເພດໃນສະພາບແວດລ້ອມຫຼາຍໆຢ່າງ ເຮັດໃຫ້ການປະຕິບັດໜ້າທີ່ຂອງໜ່ວຍງານນີ້ເປັນສິ່ງທ້າທາຍໃນແງ່ວິຊາການກໍ່ຄືໃນແງ່ຄວາມປອດໄພ.




ໝູ່ບ້ານທີ່ໄດ້ເຄື່ອນໄຫວຂອງໜ່ວຍງານເກັບກູ້ທຳລາຍເຄື່ອນທີ່




ໃນຕອນຕົ້ນຫົວໜ້າໜ່ວຍງານຈະໄດ້ຮັບການຕິດຕາມໃກ້ຊິດພິເສດຈາກທີ່ປຶກສາວິຊາການສາກົນ. ຫົວໜ້າໜ່ວຍງານຈະໄດ້ຜ່ານງານໃນຫຼາຍໆສະພາບເພື່ອຈະໄດ້ມີຄວາມຊຳນິຊຳນານ. ມາເຖິງຕອນນີ້ຢູ່ແຂວງຕ່າງໆສ່ວນໃຫຍ່ແລ້ວໜ່ວຍງານເຄື່ອນທີ່ນີ້ສາມາດທຳໜ້າທີ່ປະຈຳວັນໂດຍບໍ່ຕ້ອງໄດ້ຮັບການເບິ່ງແຍງໃກ້ຊິດຈາກທີ່ປຶກສາສາກົນ.

ໜ່ວຍງານຈະໝູນວຽນໜ້າວຽກ ຈາກການເຮັດວຽກແບບເຄື່ອນທີ່ເກັບກູ້ລະເບີດນຳໜ້າດິນ ແລ້ວໄປເຮັດວຽກເກັບກູ້ລະເບີດໃຕ້ໜ້າດິນ (area clearance ) ທັງນີ້ກໍ່ເພື່ອໃຫ້ໜ່ວຍງານມີຄວາມສາມາດທີ່ອຸດົມສົມບູນກ່ຽວກັບການເກັບກູ້ທຳລາຍລະເບີດ.

## ໜ່ວຍງານເກັບກູ້ລະເບີດໃຕ້ໜ້າດິນ

ໜ່ວຍງານດັ່ງກ່າວຈະເກັບກູ້ລູກລະເບີດທີ່ບໍ່ແຕກ




ເນື້ອທີ່ເກັບກູ້ໂດຍໜ່ວຍງານເກັບກູ້ທຳລາຍພາກພື້ນດິນ

ໃຕ້ໜ້າດິນ. ໜ່ວຍງານນີ້ຈະເຮັດວຽກເປັນລະບົບເພື່ອສະໜອງເນື້ອທີ່ດິນທີ່ປອດໄພໃຫ້ແກ່ການຜະລິດ. ໜ້າວຽກຂອງໜ່ວຍງານນີ້ຈະໃຊ້ເວລາຫຼາຍກວ່າໜ່ວຍງານເຄື່ອນທີ່ ແຕ່ວ່າວຽກດັ່ງກ່າວນີ້ຖືວ່າເປັນກິດຈະກຳທີ່ຮັບປະກັນຄວາມປອດໄພຢ່າງແນ່ນອນ. ໜ່ວຍງານນີ້ຈະທຳການເກັບກູ້ລະເບີດສຳລັບການສ້າງໂຮງຮຽນ,


Erik Tollefsen/NPA

ໜ່ວຍງານດັ່ງກ່າວຈະເກັບກູ້ລູກລະເບີດທີ່ບໍ່ແຕກໃຕ້ໜ້າດິນ. ໜ່ວຍງານນີ້ຈະເຮັດວຽກເປັນລະບົບເພື່ອສະໜອງເນື້ອທີ່ດິນທີ່ປອດໄພໃຫ້ແກ່ການຜະລິດ. ໜ້າວຽກຂອງໜ່ວຍງານນີ້ຈະໃຊ້ເວລາຫຼາຍ ກວ່າໜ່ວຍເຄື່ອນທີ່ ແຕ່ວ່າວຽກດັ່ງກ່າວນີ້ຖືວ່າເປັນກິດຈະກຳທີ່ຮັບປະກັນຄວາມປອດໄພຢ່າງແນ່ນອນ. ໜ່ວຍງານນີ້ຈະທຳການເກັບກູ້ລະເບີດສຳລັບການສ້າງໂຮງຮຽນ, ໂຮງໝໍ ແລະຕະຫຼາດ ແລະສະຖານທີ່ສາທາລະນະອື່ນໆ, ນອກນັ້ນແລ້ວກໍຍັງບຸກເບີກດິນເພື່ອການກະສິກຳ ແລະໂຄງການພັດທະນາຕ່າງໆ ການຕັດສິນໃຈເລືອງສະຖານທີ່ບູລິມະສິດເພື່ອທຳການເກັບກູ້ເປັນບັນຫາສຳຄັນເພື່ອຮັບປະກັນໃຫ້ສາມາດສ້າງຜົນປະໂຫຍດໃນການພັດທະນາໃຫ້ໄດ້ຫຼາຍທີ່ສຸດ. ການນຳໃຊ້ເຄື່ອງຊອກຫາລະເບີດຫຼາຍໆປະເພດ ພ້ອມທັງການແນະນຳວິທີການຖາກຖາງປ່າ ໄດ້ຊ່ວຍຍົກລະດັບການຜະລິດກໍ່ຄືຍົກລະດັບຄວາມປອດໄພ. ເຄື່ອງຊອກຫາລະເບີດດັ່ງກ່າວມັກຈະຈັບຄື້ນເສດເຫຼັກໄປພ້ອມໆກັນກັບຄື້ນລູກລະເບີດ. ດັ່ງນັ້ນໃນເຂດທີ່ມີລູກລະເບີດ ແລະເສດເຫຼັກຄ້າງເຫຼືອຢູ່ຫຼາຍ ຄວາມຄືບໜ້າໃນວຽກງານນີ້ຈຶ່ງຊັກຊ້າ. ການນຳໃຊ້ເຄື່ອງຈັບລະເບີດທີ່ເປັນຫ່ວງໃຫຍ່ (ເບິ່ງພາບຂ້າງເທິງ)ຈະຊ່ວຍຍົກລະດັບສະມັດຕະພາບງານໄດ້ຫຼາຍສົມຄວນ ສະເພາະຢ່າງຍິ່ງຖ້ານຳໃຊ້ຢູ່ເຂດທີ່ງກວ້າງບໍ່ມີພືດປົກຄຸມ ແລະບໍ່ມີເສດເຫຼັກຕົກຄ້າງຢູ່ຫຼາຍ.

24 / VII

## ສະຫຼຸບວຽກເກັບກູ້ 1999

| ແຂວງ | ບ້ານທີ່ໄດ້ຢັ້ງຢາມ | ດິນບຸກເບີກ | ເກັບກູ້ບອມບີ | ເກັບກູ້ມິນ | ລູກລະເບີດອື່ນໆ | ລູກລະເບີດເກັບກູ້ທັງໝົດ |
|---|---|---|---|---|---|---|
| ຊຽງຂວາງ | 408 | 194 | 14607 | 4 | 11453 | 26064 |
| ຫົວພັນ | 127 | 101 | 4286 | 11 | 2701 | 6998 |
| ສະຫວັນນະເຂດ | 292 | 78 | 6190 | 1446 | 6676 | 14312 |
| ສາລະວັນ | 179 | 45 | 7308 | 463 | 7857 | 15628 |
| ຈຳປາສັກ | 370 | 56 | 2858 | 76 | 11047 | 13981 |
| ເຊກອງ | 85 | 20 | 1602 | 48 | 1334 | 2984 |
| ອັດຕະປື | 78 | 10 | 1684 | 38 | 823 | 2545 |
| ຫຼວງພະບາງ | 107 | 71 | 715 | 80 | 1523 | 2318 |
| ຄຳມ່ວນ | 24 | 3 | 2605 | 10 | 1648 | 4263 |
| **ລວມທັງໝົດ** | **1,670** | **578** | **41855** | **2176** | **45062** | **89093** |

ຫ້າມຈຳໜ່າຍ

# ວຽກງານໂຄສະນາສຶກສາຊຸມຊົນ

ແຜນກິດຈະກຳໂຄສະນາສຶກສາຊຸມຊົນ (ຄສຊ) ໄດ້ດຳເນີນຢູ່ 742 ບ້ານໃນປີຜ່ານມາ ຊຶ່ງມີຜູ້ມາຮັບຟັງຫຼາຍກວ່າ 170.000 ຄົນ. ຄສຊ ເປັນວຽກປະສົມປະສານເຂົ້າກັບວຽກງານສຳຫຼວດ ແລະເກັບກູ້ທຳລາຍ: ໜ່ວຍງານ ຄສຊ ອາດຈະເກັບກຳຂໍ້ມູນຂ່າວສານສຳຄັນກ່ຽວກັບລະດັບການມີ ແລະຈຸດລະເບີດຕົກຄ້າງ.

ໜ່ວຍງານນີ້ດຳເນີນຫຼາຍໆກິດຈະກຳໃນແຕ່ລະບ້ານເຊັ່ນ ຈັດຕັ້ງຫຼິ້ນເກມ; ຈັດຫາວັດສະດຸການສຶກສາສຳລັບສິດສອນໃນຫ້ອງຮຽນ; ຈັດຕັ້ງກຸ່ມສົນທະນາສຳລັບຜູ້ໃຫຍ່ ແລະຈັດການສະແດງລະຄອນເພງ ແລະລະຄອນຕຸກກະຕາໃນເວລາກາງຄືນ.

ນອກຈາກດຳເນີນວຽກງານພາກສະໜາມທີ່ຖືວ່າເປັນມາດຕະຖານວຽກງານ ຄສຊ ແລ້ວ, ໃນປີ 1999 ໄດ້ພັດທະນາແຜນງານຂ້າງລຸ່ມນີ້:

❒ ໜ່ວຍລະຄອນຕຸກກະຕາແຫ່ງຊາດໄດ້ສ້າງບົດລະຄອນກ່ຽວກັບບັນຫາລູກລະເບີດທີ່ບໍ່ທັນແຕກ ແລະໄດ້ໄປສະແດງຢູ່ແຂວງຕ່າງໆໃນພາກເໜືອ ແລະຈະໄປສະແດງຢູ່ເຂດໃຕ້ໃນປີ 2000. ພະນັກງານ ອກລ ໄດ້ສະໜອງການສະໜັບສະໜູນດ້ານເຕັກນິກ ແລະໄດ້ຮັບການສະໜັບສະໜູນທາງດ້ານການເງິນ ແລະການປະສານງານຈາກອົງການແມ່ ແລະເດັກ UNICEF.

❒ ພະນັກງານ ຄສຊ ໄດ້ໃຫ້ການສະໜັບສະໜູນດ້ານເຕັກນິກຕໍ່ການຂຽນປຶ້ມ *ຄວາມຮູ້ເພື່ອຊີວິດ* ຊຶ່ງມີຂໍ້ມູນສະເພາະກ່ຽວກັບລູກລະເບີດ. ປຶ້ມດັ່ງກ່າວນີ້ແມ່ນອົງການແມ່ ແລະເດັກຜະລິດ ແລະສະໜອງເງິນ, ມັນປະກອບດ້ວຍຂໍ້ມູນຂ່າວສານກ່ຽວກັບສຸກຂະພາບ ອານະໄມ ... ແລະໄດ້ຖືກຈຳໜ່າຍໃຫ້ຊຸມຊົນຕ່າງໆພາຍໃນປະເທດ. ໃນຂະບວນການພັດທະນາປຶ້ມນີ້ ເຮົາໄດ້ດຳເນີນການຄົ້ນຄວ້າລະດັບຄວາມຮູ້ຂອງຊຸມຊົນ ນອກນັ້ນ ສະມາຊິກໜ່ວຍງານ ຄສຊ ກໍຍັງໄດ້ເຂົ້າຮ່ວມໃນສຳມະນາເພື່ອການພັດທະນາຫຼາຍຄັ້ງ.

**ການເຄື່ອນໄຫວວຽກງານ ຄສຊ ປີ 1999**

| ແຂວງ | ບ້ານທີ່ໄດ້ຢ້ຽມຢາມ | *(ຄາດໝາຍແຜນປະຕິບັດງານ)* | ຄົນເຂົ້າຮ່ວມຮັບຟັງ |
|---|---|---|---|
| ຊຽງຂວາງ | 113 | *129* | 26.029 |
| ຫົວພັນ | 55 | *45* | 16.331 |
| ສະຫວັນນະເຂດ | 114 | *98* | 18.040 |
| ສາລະວັນ | 86 | *70* | 13.934 |
| ຈຳປາສັກ | 126 | *96* | 21.675 |
| ເຊກອງ | 59 | *38* | 11.617 |
| ອັດຕະປື | 64 | *26* | 33.559 |
| ຄຳມ່ວນ | 52 | *48* | 13.136 |
| ຫຼວງພະບາງ | 73 | *40* | 15.969 |
| **ລວມ** | **742** | ***590*** | **170.290** |

❒ ໄດ້ທຳການທົບທວນຄືນຍຸດທະສາດ ຄສຊ ໃນນັ້ນໄດ້ນຳໃຊ້ຄວາມຄິດຄວາມເຫັນຂອງຫົວໜ້າໜ່ວຍງານໃນທົ່ວປະເທດ ວຽກນີ້ໄດ້ຮັບການຊ່ວຍເຫຼືອຈາກອົງການແມ່ ແລະເດັກ. ໄດ້ຈັດການສຳມະນາໜ່ວຍງານເຕັກນິກທີ່ເຮັດວຽກ ຄສຊ ຂຶ້ນໃນເດືອນກໍລະກົດ ແລະໄດ້ຈັດກອງປະຊຸມອີກສອງຄັ້ງສຳລັບຫົວໜ້າໜ່ວຍງານໂດຍບໍລິສັດ ຄອນຊອກຕຽມ (Consortium) ເປັນຜູ້ຮ່ວມຈັດ.

❒ ກິດຈະກຳດ້ານໂຄສະນາສຶກສາອື່ນໆ ລວມມີວຽກຂະຫຍາຍແຜນການສຶກສາໃນລະບົບ ຊຶ່ງແມ່ນກະຊວງສຶກສາເປັນຜູ້ປະຕິບັດ. ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການບໍ່ສັງກັດລັດ ຄອນຊອກຕຽມ ແລະໄດ້ຮັບທຶນຈາກອົງການແມ່ ແລະເດັກ. ແຜນການນີ້ໄດ້ນຳໄປປະຕິບັດໃນຫ້າປີຜ່ານມາ ຢູ່ຊຽງຂວາງ ແລະຫົວພັນ ແລະໄດ້ຂະຫຍາຍອອກໄປສູ່ແຂວງສາລະວັນ ແລະສະຫວັນນະເຂດໃນປີ 1999. ຫຼັກສູດກ່ຽວກັບລູກລະເບີດທີ່ມີຄູ ແລະນັກຮຽນປະຖົມເປັນເປົ້າໝາຍນີ້ໄດ້ຖືກນຳໄປສອນໃນແຜນການສອນປົກກະຕິ ຊຶ່ງໃນນັ້ນກໍມີການສຳມະນາວິຊາສິລະປະທີ່ໃຊ້ຫົວຄິດປະດິດສ້າງ ແລະການຝຶກອົບຮົມ ການສະແດງລະຄອນຕຸກກະຕາໃຫ້ນັກຮຽນ.

## ຄູ່ຮ່ວມປະຕິບັດງານດ້ານໂຄສະນາສຶກສາ

ອົງການແມ່ ແລະເດັກ UNICEF ແມ່ນອົງການຕົ້ນຕໍທີ່ໄດ້ປະກອບທຶນໃຫ້ແກ່ກິດຈະກຳສ້າງຄວາມຮັບຮູ້ດ້ານລະເບີດທີ່ຍັງບໍ່ແຕກ ແລະໄດ້ຊ່ວຍ ອກລ ດ້ານວິຊາການ. UNICEFແມ່ນອົງການ ສປຊ ທີ່ມີຈຸດສຸມກ່ຽວກັບລູກມືນ ແລະການສຶກສາກ່ຽວກັບລະເບີດບໍ່ທັນແຕກໃນຂອບເຂດໂລກ. ໃນສປປລາວ UNICEF ໄດ້ເຮັດວຽກກັບສື່ມວນຊົນລະດັບຊາດ ແລະແຂວງ, ກະຊວງຖະແຫຼງຂ່າວ ແລະວັດທະນາທຳ ລະຄອນຕຸກກະຕາແຫ່ງຊາດ ແລະອົງການບໍ່ສັງກັດລັດຕ່າງໆ ທັງນີ້ກໍເພື່ອສ້າງຄວາມສະດວກໃຫ້ແກ່ການສິດສອນເດັກນ້ອຍ ແລະໝູ່ບ້ານຂອງພວກເຂົາໃຫ້ຮູ້ກ່ຽວກັບລະເບີດທີ່ບໍ່ແຕກ.

❒ ອົງການແມ່ ແລະເດັກ UNICEF ໄດ້ສືບຕໍ່ໃຫ້ທຶນຊ່ວຍເຫຼືອລາຍການສຶກສາທາງວິທະຍຸດ້ານລູກລະເບີດທີ່ຍັງບໍ່ທັນແຕກໃນແຂວງຊຽງຂວາງ, ຫຼວງພະບາງ, ຈຳປາສັກ ແລະສະຫວັນນະເຂດ ກໍຄືໃນລາຍການວິທະຍຸແຫ່ງຊາດ. ຈະຈັດໃຫ້ມີການແຂ່ງຂັນປະຈຳອາທິດໃນໝູ່ບ້ານຕ່າງໆ ແລະກໍໄດ້ອັດສຽງລາຍການດັ່ງກ່າວນັ້ນເພື່ອອອກອາກາດໃຫ້ໄດ້ຟັງກັນທົ່ວແຂວງ. ລາຍການດັ່ງກ່າວນີ້ໄດ້ມີຜູ້ຟັງທີ່ສົນໃຈພິເສດ ຊາວບ້ານກໍມັກຈະຟັງລາຍການເພື່ອຢາກຮູ້ວ່າບ້ານອື່ນໆໄດ້ທຳຄະແນນດີຊ່ຳໃດ. ໃນແຕ່ລະອາທິດໄດ້ອອກອາກາດລາຍການຂ່າວໂຄສະນາສັ້ນປະມານ 2-5 ນາທີ ພ້ອມທັງມີເພງກ່ຽວກັບລູກລະເບີດບໍ່ທັນແຕກ.

ການຄົ້ນຄ້ວາດ້ານສື່ມວນຊົນກ່ຽວກັບຄວາມຮູ້ດ້ານລູກລະເບີດບໍ່ທັນແຕກຊີ້ໃຫ້ເຫັນວ່າທັງຜູ້ໃຫຍ່ ແລະເດັກນ້ອຍມັກລາຍການວິທະຍຸຫຼາຍກວ່າສື່ອື່ນໆ. ການຄົ້ນຄວ້າ ຊຶ່ງໄດ້ດຳເນີນໃນປີ 1999 ໂດຍກະຊວງຖະແຫຼງຂ່າວ ແລະວັດທະນະທຳ ແລະ UNICEF ໄດ້ຊ່ວຍປັບປຸງຍຸດທະສາດກ່ຽວກັບຄວາມຮັບຮູ້ດ້ານລູກລະເບີດອີກຕື່ມ. ເປັນທີ່ໜ້າເພິ່ງພໍໃຈທີ່ໄດ້ເຫັນຂໍ້ມູນວ່າກິດຈະກຳຂອງ ອກລ ໄດ້ຂະຫຍາຍອອກຢ່າງກວ້າງຂວາງ: ໝູ່ບ້ານສ່ວນຫຼວງຫຼາຍທີ່ໄດ້ທຳການສຳຫຼວດໄດ້ລາຍງານວ່າໜ່ວຍງານຂອງພວກເຮົາໄດ້ໄປຮອດໄປເຖິງໝູ່ບ້ານເຂົາເຈົ້າພາຍໃນ 3 ປີຜ່ານມາ.





## ການຝຶກອົບຮົມ

ໃນປີ 1999 ຄູຝຶກລາວໄດ້ຮັບຜິດຊອບສອນຊຸດອົບຮົມພື້ນຖານທັງໝົດ. ພັດທະນາຄວາມສາມາດຂອງສູນອົບຮົມແມ່ນໝາກຜົນການຊ່ວຍເຫຼືອສາມປີທີ່ບໍ່ເປັນເງິນຈາກລັດຖະບານສະຫະລັດ ຊຶ່ງການຊ່ວຍເຫຼືອນັ້ນໄດ້ຈົບລົງ ໃນເດືອນກັນຍາ. ການປະກອບສ່ວນຂອງສະຫະລັດໃນການຊ່ວຍອົບຮົມຍັງຈະສືບຕໍ່ຢູ່ໃນປີ 2000 ແລະຕໍ່ໆໄປ ໂດຍທີ່ສະຫະລັດໄດ້ໃຫ້ທຶນພັດທະນາ ແລະດຳເນີນຊຸດອົບຮົມລະດັບສູງກວ່າເກົ່າດ້ານເກັບກູ້ ແລະທຳລາຍລູກລະເບີດ ສຳລັບຫົວໜ້າໜ່ວຍງານ ແລະພະນັກງານທີ່ໄດ້ຄັດເລືອກຈຳນວນນຶ່ງ.

ດັ່ງທີ່ໄດ້ວາງແຜນໄວ້ ເຮົາໄດ້ອອກແບບ,ທົດສອບ ແລະດຳເນີນຊຸດອົບຮົມໃໝ່ກ່ຽວກັບການສຳຫຼວດໃນປີ 1999, ໂດຍໄດ້ຈັດຊຸດອົບຮົມສາມຄັ້ງ ມີຜູ້ຮຽນຈົບ 30 ຄົນ. ນັກເດີນສຳຫຼວດໄດ້ຮຽນວິຊາເດີນທາງຈາກຈຸດໜຶ່ງຫາຈຸດໜຶ່ງ, ວິຊາອ່ານແຜນທີ່, ລະບົບອ່ານເສັ້ນພິກັດ (GPS), ວິທີການເຮັດການສຳຫຼວດຂອງ ອກລ ແລະການນຳໃຊ້ແລະບຳລຸງຮັກສາລົດຈັກ. ນອກນັ້ນເຂົາເຈົ້າກໍ່ໄດ້ຜ່ານການ ອົບຮົມວິຊາແພດແລະຈຳແນກວ່າອັນໃດແມ່ນລູກລະເບີດອັນໃດບໍ່ແມ່ນ.

ໃນປີ 1999 ສູນຝຶກອົບຮົມແຫ່ງຊາດໄດ້ຍ້າຍຈາກນ້ຳຊ່ວງໄປບ້ານອີ່ໄລ ກຳແພງນະຄອນວຽງຈັນ. ຍ້ອນວ່າສ່ວນຫຼາຍຂອງຜູ້ມາຮັບການອົບຮົມມາຈາກແຂວງອື່ນ ສູນຈຶ່ງໄດ້ຈັດບ່ອນພັກພາອາໃສໄດ້ເຖິງ 54 ຄົນ ພ້ອມດ້ວຍອາຫານການກິນໃຫ້ເຂົາເຈົ້າໃນຊ່ວງເວລາອົບຮົມ.

## ການຝຶກສອນຢູ່ກັບບ່ອນເຮັດວຽກ ແລະການສ້າງຄວາມສາມາດ

ທຸກແຂວງມີການຝຶກອົບຮົມຢູ່ກັບບ່ອນເຮັດວຽກຫຼາຍສົມຄວນ. ໜຶ່ງໃນບົດບາດສຳຄັນຂອງທີ່ປຶກສາວິຊາການ ແມ່ນຕ້ອງສຸມຄວາມພະຍາຍາມຍົກລະດັບການບໍລິຫານຄຸ້ມຄອງແລະທັກສະວິຊາການໃຫ້ແກ່ຫົວໜ້າໜ່ວຍງານ. ທີ່ປຶກສາພາກສະໜາມຍັງຕ້ອງຊ່ວຍໃນການພັດທະນາຄວາມສາມາດໃຫ້ແກ່ພະນັກງານເມືອງແລະແຂວງກ່ຽວກັບວຽກການປົກຄອງ,ວຽກວາງແຜນແລະບໍລິຫານຄຸ້ມຄອງ.

ລັດຖະບານປະເທດນິວຊີແລນໄດ້ສືບຕໍ່ສະໜັບສະໜູນການພັດທະນາໂຄງການ ໂດຍມອບທີ່ປຶກສາດ້ານທະຫານສອງຄົນເພື່ອເຮັດວຽກຢູ່ກັບໜ່ວຍປະຕິບັດການແລະສຳພາລະ( logistics) ຢູ່ຫ້ອງການທີ່ວຽງຈັນ. ອົງການ UNDP ໄດ້ສືບຕໍ່ໃຫ້ການສະໜັບສະໜູນການປະສານງານລະດັບສູນກາງຢູ່ທີ່ຫ້ອງການທີ່ວຽງຈັນ.

ລະບົບຄຸ້ມຄອງການເງິນແບບໃໝ່ໄດ້ຖືກນຳເອົາມາໃຊ້ໃນຕົ້ນປີ 1999 ແລະທີ່ປຶກສາວິຊາການດ້ານການເງິນຈາກ NPA ກໍ່ໄດ້ຝຶກອົບຮົມກັບບ່ອນເຮັດວຽກໃຫ້ພະນັກງານຫ້ອງການຢູ່ວຽງຈັນ. ເມື່ອອົບຮົມສຳເລັດແລ້ວ ໜ່ວຍງານກໍ່ໄດ້ລົງໄປແຂວງເພື່ອຈັດການສຳມະນາໃຫ້ພະນັກງານຊ່ວຍດ້ານການເງິນ.ໜຶ່ງໃນຄວາມພະຍາຍາມສ້າງຄວາມສາມາດ ທີ່ໄດ້ດຳເນີນມາໃນປີ 1999 ແມ່ນໂຄງການທີ່ໄດ້ຮັບການສະໜັບສະໜູນດ້ານເງິນ ຈາກລັດຖະບານຍີ່ປຸ່ນ ຊຶ່ງຈະໄດ້ສືບຕໍ່ໄປເຖິງປີ 2001 ນັ້ນຄືໂຄງການສົ່ງອາສາສະໝັກ ສປຊ ໄປຊ່ວຍຜູ້ປະສານງານລະດັບແຂວງຢູ່ຫ້າແຂວງ ເພື່ອເຂົາເຈົ້າຈະມີຄວາມສາມາດປະຕິບັດໜ້າວຽກບໍລິຫານຄຸ້ມຄອງຕ່າງໆໄດ້.

| ຫຼັກສູດຝຶກອົບຮົມ | ຈຳນວນ | ແຜນການ | ຜູ້ສຳເລັດ |
|---|---|---|---|
| ເກັບກູ້ລະເບີດ | 4 | 4 | 127 |
| ຫົວໜ້າໜ່ວຍງານເກັບກູ້ລະເບີດ | 1 | 1 | 13 |
| ໂຄສະນາສຶກສາຊຸມຊົນ | 2 | 2 | 19 |
| ຫົວໜ້າໜ່ວຍງານ ຄສຊ | 0 | 1 | 0 |
| ແພດ | 2 | 2 | 10 |
| ແພດຍົກລະດັບ | 7 | 7 | 49 |
| ສຳຫຼວດ | 3 | 3 | 34 |
| **ລວມ** | **18** | **20** | **252** |

# ວຽກສຳຫຼວດ

ໜ່ວຍງານສຳຫຼວດເປັນໜ່ວຍເຮັດວຽກຢູ່ທີ່ຖານຂໍ້ມູນແຫ່ງຊາດກ່ຽວກັບຂ່າວສານດ້ານລູກລະເບີດບໍ່ທັນແຕກ ເຊັ່ນຂໍ້ມູນບ້ານທີ່ໄດ້ຮັບຜົນກະທົບ, ແຜນງານແລະໜ້າວຽກຕ່າງໆຂອງໜ່ວຍງານພາກສະໜາມທີ່ໄດ້ສຳເລັດໄປແລ້ວ, ແລະເກັບກຳບັນຊີລາຍງານການຖິ້ມລະເບີດ. ຂໍ້ມູນຖືກຮັກສາໄວ້ໃນລະບົບຂ່າວສານໂດຍອີງຕາມພາກພູມສາດ ອັນອານຸຍາດໃຫ້ສາມາດພິມແຜນທີ່ແລະໄດ້ສະຫຼຸບຂໍ້ມູນສະຖິຕິ ທີ່ມີລັກສະນະທົ່ວໄປ ຫຼື ສະເພາະເຈາະຈົງກໍ່ໄດ້.

ມາຮອດທ້າຍປີ 1999 ອກລ ໄດ້ຮັບເອກະສານລາຍງານປະຫວັດສາດກ່ຽວກັບປະຕິບັດການສູ້ລົບທາງອາກາດຂອງສະຫະລັດໃນເຂດອາຊີຕາເວັນອອກສຽງໃຕ້ທັງໝົດໃນລະຫວ່າງປີ 1965-1975. ຖານຂໍ້ມູນສາມາດສະໜອງຂ່າວສານທີ່ມີຄຸນປະໂຫຍດຫຼາຍ ເຊັ່ນຂໍ້ມູນກ່ຽວກັບປະເພດ, ປະລິມານລະເບີດແລະສະຖານທີ່ຖິ້ມລະເບີດ. ຈາກຂໍ້ມູນນີ້ ເຮົາສາມາດສ້າງແຜນທີ່ເຂດທີ່ອາດມີລູກລະເບີດໃນບັນດາແຂວງ,ເມືອງ ຫຼືສ້າງແຜນທີ່ສະເພາະເຂດໃດເຂດໜຶ່ງທີ່ເຮົາອາດສົນໃຈ ເຊັ່ນບ້ານໃດບ້ານໜຶ່ງ, ທົນທາງຫຼືຕາໜ່າງສາຍສົ່ງໄຟຟ້າ.

ອກລ ໄດ້ສະໜອງແຜນທີ່ຈຳນວນຫຼາຍຮ້ອຍແຜ່ນໃຫ້ແກ່ຫຼາຍໆກະຊວງ ທີ່ຕ້ອງການຢາກໄດ້ຂໍ້ມູນກ່ຽວກັບເຂດທີ່ອາດມີລູກລະເບີດບໍ່ທັນແຕກຕົກຄ້າງຢູ່ ຊຶ່ງເປັນເຂດທີ່ຈະສ້າງໂຄງການພັດທະນາສອງຝ່າຍຫຼືຫຼາຍຝ່າຍ. ນອກຈາກໄດ້ມອບເອກະສານປະຫວັດສາດໃຫ້ແລ້ວ ທາງຝ່າຍລັດຖະບານສະຫະລັດຍັງສືບຕໍ່ສະໜອງທຶນເພື່ອສະໜັບສະໜູນວຽກເຕັກນິກສະເພາະໃຫ້ໜ່ວຍງານສຳຫຼວດ ລວມໃນນີ້ມີການຊ່ວຍເຫຼືອເພື່ອຄຸ້ມຄອງຂໍ້ມູນ, ຜະລິດແຜນທີ່ແລະຈັດການຝຶກອົບຮົມໃຫ້ພະນັກງານ ອກລ.

ໃນປີ 1999 ໜ່ວຍງານໂຄສະນາສຶກສາຊຸມຊົນໄດ້ເລີ່ມຕົ້ນເກັບກຳຂ່າວສານເພື່ອຈະໄດ້ປັບປຸງຂໍ້ມູນສຳຫຼວດລະດັບໜຶ່ງ (ຂໍ້ມູນທົ່ວໄປ)ໃຫ້ທັນກັບສະພາບ. ຂໍ້ມູນການສຳຫຼວດຊຶ່ງໄດ້ພິມເຜີຍແຜ່ໃນປີ 1997 ຍັງຄົງເປັນຂໍ້ມູນພື້ນຖານໃຫ້ແກ່ການວາງແຜນວຽກງານຢູ່. ໃນປີນັ້ນ ກໍ່ໄດ້ນຳເຂົ້າໃນໂຄງການ ວຽກສຳຫຼວດລະດັບສອງ (ເຕັກນິກ). ໜ່ວຍງານສຳຫຼວດໄດ້ຢ້ຽມຢາມໝູ່ບ້ານທີ່ມີລະເບີດຕົກຄ້າງ ແລະໄດ້ບັນທຶກຂ່າວສານລະອຽດກ່ຽວກັບສະຖານທີ່ໆມີລູກລະເບີດຢູ່ຕາມໜ້າດິນ ແລະໄດ້ກຳນົດຂອບເຂດທີ່ຮູ້ວ່າມີລູກລະເບີດບໍ່ທັນແຕກຕົກຄ້າງຢູ່ໃຕ້ໜ້າດິນ. ຂໍ້ມູນໃໝ່ນີ້ຈະຊ່ວຍໃນການເຮັດວຽກຢ່າງມີປະສິດທິພາບຂອງໜ່ວຍງານເກັບກູ້ລູກລະເບີດເຄື່ອນທີ່ ແລະໜ່ວຍງານເກັບກູ້ລະເບີດໃຕ້ຜິວດິນ.

ໄດ້ມີການຮັບຮອງເອົາມາດຕະຖານແຫ່ງຊາດໃນການລາຍງານການສຳຫຼວດດ້ານວຽກງານລະເບີດລະດັບໜຶ່ງ,ສອງແລະສາມ. ຕະຫຼອດທັງປີ 1999, ໜ່ວຍງານພາກສະໜາມໄດ້ຜະລິດເອກະສານການສຳຫຼວດລະດັບສາມ (ລາຍງານສຳເລັດການເກັບກູ້) ແລະລາຍງານນີ້ໄດ້ຖືກນຳສົ່ງໄປຍັງຫ້ອງການ ອ.ກ.ລ ວຽງຈັນເພື່ອຈະໄດ້ໃຫ້ເຮັດຂໍ້ມູນດ້ານເກັບກູ້ເປັນຂໍ້ມູນຫຼ້າສຸດ ແລະເພື່ອວຽກປະມວນ.



# ການເງິນ

ໃນປີ 1999 ໄດ້ເອົາລະບົບການເງິນໃໝ່ມາໃຊ້ແທນຢ່າງຄົບຖ້ວນແລ້ວ. ອກລ ສາມາດລາຍງານການໃຊ້ຈ່າຍຢ່າງລະອຽດ ແລະສາມາດຊັ່ງຊາທຶນຊ່ວຍເຫຼືອຂອງແຕ່ລະລາຍການເຫຼືອໜ້ອຍຫຼາຍຊໍ່າໃດ, ບັນຊີທັງໝົດຂອງ ອກລ ລວມທັງບັນຊີລະດັບແຂວງໄດ້ທໍາການກວດກາໃນແຕ່ລະເດືອນ, ແລະທຶນໝູນທີ່ໄດ້ເບີກລ່ວງໜ້າຈາກກອງທຶນພິເສດ ອກລ ຜ່ານອົງການ UNDP ໄດ້ຖືກແກ້ໄຂ ແລະລາຍງານປະຈໍາໄຕມາດ.

ໃນປີນັ້ນກໍ່ໄດ້ດໍາເນີນແຜນບັນຊີ ແລະແຜນຄຸ້ມຄອງການເງິນທີ່ໄດ້ມາດຕະຖານສາກົນ. ໄດ້ຮັບເອົາ, ທົດສອບໃຊ້ລະບົບບັນຊີການເງິນ HANSA ແລະໄດ້ພົບວ່າມັນສາມາດຕອບສະໜອງຂໍ້ຮຽກຮ້ອງຂ້າງລຸ່ມໄດ້ຄື:

- ສາມາດຄຸ້ມຄອງຫຼາຍໆບັນຊີ ຂອງ ອກລ ແລະແຫຼ່ງທຶນຕ່າງໆ, ສາມາດເຊື່ອມໂຍງໄປຫາກັນໄດ້ເພື່ອຈຸດປະສົງລາຍງານ ແລະວິໃຈ, ແລະສາມາດຮັບປະກັນສະພາບໂປ່ງໃສໃນທຸກໆກິດຈະກໍາການເງິນ,
- ສາມາດຄຸ້ມຄອງບໍລິມາດການແລກປ່ຽນທຸລະກິດພ້ອມທັງສາມາດສະໜອງຂໍ້ມູນລັກສະນະວິໃຈ ແລະກາຍເປັນເຄື່ອງມືບໍລິຫານຄຸ້ມຄອງການເງິນໄດ້,
- ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ໃຫ້ທຶນ ຊຶ່ງແຕ່ລະຄົນມີຄວາມຮຽກຮ້ອງຕ້ອງການຕ່າງກັນອອກໄປ ດ້ານການລາຍງານລະອຽດ;
- ເປັນລະບົບທີ່ສາມາດເຊື່ອມໂຍງການໃຊ້ຈ່າຍແຕ່ລະລາຍການໄປຫາແຫຼ່ງທຶນ, ລະຫວ່າງສູນກາງການຈ່າຍໄປຫາກິດຈະກໍາ; ແລະວຽກພາຍໃນແຕ່ລະການເບີກຈ່າຍຈໍາເປັນຕ້ອງໃຊ້ລະຫັດງົບການຈ່າຍ;
- ສາມາດນໍາໃຊ້ການເຂົ້າບັນຊີທີ່ໃຊ້ເງິນຫຼາຍຕະກູນ; 75% ຂອງການໃຊ້ຈ່າຍແລກປ່ຽນເປັນເງິນກີບ, ແລະ 25% ເປັນເງິນໂດລາສະຫະລັດ; ແລະ
- ສາມາດນໍາໃຊ້ຮູບການແລກປ່ຽນເງິນຕາແບບອັດຕະໂນມັດ ໂດຍອີງຕາມອັດຕາແລກປ່ຽນປະຈໍາວັນ, ແລະສາມາດຄິດໄລ່ການປ່ຽນແປງຂອງອັດຕາແລກປ່ຽນແບບອັດຕະໂນມັດວ່າມີການໄດ້ການເສຍຫຼາຍໜ້ອຍຊໍ່າໃດ. ຄວາມສາມາດຄິດໄລ່ ການໄດ້ ແລະການເສຍນີ້ ມີຄວາມສໍາຄັນຫຼາຍເພາະວ່າເມື່ອກ່ອນໄດ້ມີການບັນທຶກປະລິມານໄດ້-ເສຍຈາກອັດຕາການແລກປ່ຽນເງິນຕາໂດຍອີງຕາມອັດຕາແລກປ່ຽນປະຈໍາເດືອນ.

ຕົກມາຮອດເດືອນມັງກອນ 1999 ໄດ້ໂອນຂໍ້ມູນການເງິນທີ່ມີຢູ່ໄປເຂົ້າລະບົບໃໝ່. ວິທີເຮັດວຽກຂອງ ອກລ ແມ່ນຈະທໍາການບັນທຶກເມື່ອໃດຫາກໄດ້ຮັບທຶນ ຫຼືເມື່ອໃດຫາກໄດ້ເບີກຈ່າຍ.

ໄດ້ຮັບເອົາພະນັກງານເຂົ້າຕື່ມ ແລະໄດ້ລົງທຶນໃສ່ການອົບຮົມພະນັກງານຫຼາຍສົມຄວນໃນດ້ານບັນຊີ ແລະຄຸ້ມຄອງການເງິນ ຊຶ່ງໄດ້ດໍາເນີນໄປຕະຫຼອດປີ. ໄດ້ຈັດໃຫ້ມີການອົບຮົມການນໍາໃຊ້ໂປຣແກຣມບັນຊີເປັນໄລຍະໆທັງນີ້ແມ່ນເພື່ອຮັບປະກັນໃຫ້ພະນັກງານສາມາດນໍາໃຊ້ໂປຣແກຣມນີ້ຢ່າງເຕັມທີ່ໄດ້. ໃນການອົບຮົມກໍ່ໄດ້ເນັ້ນບັນຫາວ່າເຮັດແນວໃດໜ່ວຍການເງິນຈະສາມາດໃຫ້ການສະໜັບສະໜູນວຽກງານປະຕິບັດການໄດ້ດີທີ່ສຸດ, ຊຶ່ງ 95% ຂອງວຽກງານແມ່ນດໍາເນີນຢູ່ແຂວງ.

ໃນຕອນທ້າຍຂອງປີ ໄດ້ມີບັນຫາທີ່ບໍ່ໄດ້ຄາດຄິດໄວ້ກ່ອນກ່ຽວກັບການໂອນເງິນໄປບາງແຂວງ. ທະນາຄານທ້ອງຖິ່ນບາງບ່ອນອ້າງວ່າບໍ່ມີເງິນກີບ ຫຼືບໍ່ກໍ່ບໍ່ຢາກໂອນ/ຊື້ຂາຍເງິນກີບຈໍານວນຫຼວງຫຼາຍ ຊຶ່ງເຮັດໃຫ້ທະນາຄານບໍ່ມີລາຍຮັບເປັນເງິນຕາຕ່າງປະເທດ. ຜ່ານໄລຍະນີ້ງບັນຫານີ້ກໍ່ໄດ້ຖືກແກ້ໄຂຍ້ອນໄດ້ປ່ຽນໄປຫາທະນາຄານອື່ນໆ ແລະຍ້ອນໄດ້ໃຊ້ຮູບການໂອນເງິນຜ່ານທະນາຄານເປັນເງິນໂດລາສະຫະລັດແລ້ວຈຶ່ງເບີກຈ່າຍເປັນກີບ.

ໜ່ວຍການເງິນໄດ້ສໍາເລັດໜ້າທີ່ດ້ານພະນັກງານ ແລະເງິນເດືອນ ແລະການເບີກຈ່າຍໃຫ້ພະນັກງານຕາມກໍານົດເວລາໂດຍບໍ່ມີຂໍ້ຄົງຄ້າງ. ໃນປີ 1999 ສັງເກດເຫັນວ່າມີຄວາມຄືບໜ້າຢ່າງຈະແຈ້ງໃນການເບີກຈ່າຍເງິນປະຈໍາເດືອນໃຫ້ແຂວງ ເພື່ອໄປແລ່ນວຽກ.

# ການກວດສອບບັນຊີຈາກພາຍນອກ

ໃນປີ 1999 ໄດ້ມີການກວດສອບບັນຊີຢູ່ ອກລ ສອງຄັ້ງ. ໃນລະຫວ່າງລະດູຮ້ອນບໍລິສັດ PriceWaterhouseCoopers ໄດ້ທໍາການກວດສອບບັນຊີກອງທຶນພິເສດຂອງ ອກລ ສໍາລັບປີງົບປະມານ 1998, ການກວດສອບດັ່ງກ່າວແມ່ນນອນຢູ່ໃນລະບົບກວດສອບທຸກໆກິດຈະກໍາທີ່ພົວພັນເຖິງລະບົບ UNDP. ຍົກເວັ້ນຂໍ້ສັງເກດເລັກນ້ອຍບາງອັນທີ່ພົວພັນເຖິງຂັ້ນຕອນ ແລະວິທີເຮັດວຽກແບບປົກກະຕິ, ຄະນະກວດສອບບໍ່ໄດ້ສັງເກດເຫັນຄວາມຜິດພາດໃດໆ. ເບິ່ງໃນແງ່ບໍລິຫານຄຸ້ມຄອງແລ້ວ, ການກວດສອບຄັ້ງນັ້ນບໍ່ຖືວ່າຄົບຖ້ວນ ກວ້າງຂວາງຊໍ່າກັນກັບການກວດສອບຄັ້ງທີສອງ ຊຶ່ງແມ່ນການລິເລີ່ມຂອງ ອກລ ເອງ.

PriceWaterhouseCoopers ໄດ້ກວດສອບບັນຊີຂອງ ອກລ ດ້ານຊັບສິນບັດຄົງທີ່, ກິດຈະກຳການເງິນ ແລະການບໍລິຫານຄຸ້ມຄອງການເງິນໃນເກົ້າເດືອນທຳອິດຂອງປີ 1999, ລວມທັງການໂອນສະສາງເງິນລະຫວ່າງປີ 1998-1999. ການກວດສອບໄດ້ເຮັດຢູ່ຫ້ອງການ ອກລ ວຽງຈັນ ແລະຢູ່ສາມແຂວງທີ່ໄດ້ເລືອກດ້ວຍແບບສະບັບສະຖິຕິ. ຄະນະຊີ້ນຳວຽກງານໄດ້ເຫັນພ້ອມນຳໜ້າວຽກຂອງຄະນະກວດສອບບັນຊີ ຊຶ່ງຕ້ອງສຸມໃສ່ບັນຫາການເງິນ, ການຄວບຄຸມ ແລະບໍລິຫານພາຍໃນ.
ລາຍງານສຸດທ້າຍຂອງການກວດສອບໄດ້ຍົກໃຫ້ເຫັນຂໍ້ສັງເກດ 9 ຢ່າງ ຊຶ່ງທັງໝົດການນຳ ອກລ ກໍ່ໄດ້ແກ້ໄຂເອົາໃຈໃສ່. ໃນຂໍ້ສັງເກດນັ້ນບໍ່ມີອັນໃດທີ່ພົວພັນເຖິງບັນຫາການເງິນ ແລະບໍລິສັດກວດສອບກໍ່ໄດ້ຍອມຮັບຂໍ້ອະທິບາຍດ້ານການເງິນທີ່ຝ່າຍເຮົາໄດ້ສະເໜີໄປ. ສຳລັບການຈັດຕັ້ງໃຫຍ່ໂຕເຊັ່ນ ອກລ, ຂໍ້ສັງເກດຂອງບໍລິສັດກວດສອບບັນຊີນີ້ໄດ້ຖືວ່າມີຄວາມສຳຄັນສຳລັບຂັ້ນຕອນພັດທະນາການຈັດຕັ້ງຂອງໂຄງການ, ແລະຂໍ້ສັງເກດຕ່າງໆນັ້ນບໍ່ໄດ້ຊີ້ໃຫ້ເຫັນວ່າມີການນຳໃຊ້ອຸບປະກອນ ຫຼືທຶນໄປໃນທາງບໍ່ຖືກຕ້ອງແຕ່ຢ່າງໃດ.
ຂະບວນການກວດສອບນີ້ໄດ້ຖືກຕິດຕາມຕໍ່ມາດ້ວຍການປະຕິບັດກົນໄກສຳຫຼວດກວດກາພາຍໃນ ຊຶ່ງໃນນີ້ໄດ້ສຸມໃສ່ການປັບປຸງລະບົບການສະໜັບສະໜູນການລຳລຽງສຳພາລະ (logistic) ແລະການຄຸ້ມຄອງຍານພາຫະນະ ຊຶ່ງພວກເຮົາກໍ່ໄດ້ປັບປຸງມາແລ້ວດ້ວຍການຈັດແຈງການຈັດຕັ້ງພາຍໃນ, ຊຶ່ງໃນນີ້ເຮົາມີແຜນເພື່ອປະຕິບັດໂຄງການທີ່ປຶກສາວິຊາການໃໝ່ ຊຶ່ງຈະກວມເອົາບັນຫາການອົບຮົມດ້ານການສະໜອງ, ຈັດຊື້ ແລະການບຳລຸງຮັກສາ.

## ວຽກງານບໍລິຫານ ແລະ ຄຸ້ມຄອງພະນັກງານ

ຕົກມາເຖິງຕອນທ້າຍຂອງປີ ມີເກືອບ 1.000 ຄົນທີ່ມີສ່ວນຮ່ວມໂດຍກົງກັບປະຕິບັດການແຜນການຂອງ ອກລ. ໂຄງການມີພະນັກງານລາວຫຼາຍກວ່າ 750 ຄົນ ທີ່ກິນເງິນເດືອນໂດຍກົງກັບໂຄງການ, ແລະຄູ່ຮ່ວມປະຕິບັດງານກໍ່ໄດ້ຮັບເອົາພະນັກງານລາວປະມານ 200 ຄົນ ແລະທີ່ປຶກສາວິຊາການສາກົນ 23 ຄົນ ທີ່ເຮັດວຽກຢູ່ແຂວງ.
ຫຼາຍກວ່າ 95% ຂອງຈຳນວນແຮງງານລາວແມ່ນເຮັດວຽກພາກສະໜາມ ຊຶ່ງຕັ້ງຢູ່ເຂດຫ່າງໄກຂອງແຂວງ. ເຖິງແມ່ນວ່າການປະຕິບັດງານພາກສະໜາມມີຄວາມຫຍຸ້ງຍາກໃຕ້ເງື່ອນໄຂບໍ່ສະດວກ, ກຳລັງແຮງງານຂອງ ອກລ ກໍ່ຍັງຢູ່ໃນສະພາບສະໝໍ່າສະເໝີຢູ່. ອັດຕາສະແດງຄວາມບໍ່ດີໃຈກັບວຽກງານແມ່ນຕໍ່າ, ພຽງແຕ່ 15 ຄົນໄດ້ອອກຈາກໂຄງການໃນນີ້ງປີ.
ນອກຈາກໄດ້ຮັບເອົາພະນັກງານໃໝ່ພາກສະໜາມຫຼາຍ ກວ່າ 200 ຄົນໃນປີ 1999 ຊຶ່ງໄດ້ຮັບການອົບຮົມແລະຈັດເຂົ້າວຽກແລ້ວ, ອກລ ກໍ່ຍັງຕ້ອງຮັບຜິດຊອບຮັບເອົາພະນັກງານໃໝ່ຫຼາຍກວ່າ 100 ຄົນ ຊຶ່ງເມື່ອກ່ອນເຮັດວຽກໃຫ້ອົງການ ແມກ ຢູ່ແຂວງສາລະວັນ ແລະ 90 ຄົນອີກ ຊຶ່ງເມື່ອກ່ອນເຄີຍເຮັດວຽກໃຫ້ ເກເບີຣາ ຢູ່ຫົວພັນ.ໄດ້ມີການກະກຽມຮັບເອົາພະນັກງານລາວອີກຕື່ມໃນຕົ້ນປີ 2000 ຊຶ່ງເມື່ອກ່ອນເຂົາເຫຼົ່ານັ້ນເຮັດວຽກໃຫ້ ແມກ ແຂວງຊຽງຂວາງ.
ຈຳນວນພະນັກງານ ອກລ ຢູ່ຫ້ອງການວຽງຈັນ ແລະຢູ່ສູນຝຶກອົບຮົມແມ່ນມີຈຳນວນເທົ່າເດີມບໍ່ປ່ຽນແປງຕະຫຼອດປີ, ໃນນັ້ນກໍ່ມີພະນັກງານລາວ 43 ຄົນ ແລະທີ່ປຶກສາວິຊາການ 5 ຄົນ. ຕຳແໜ່ງສຳຄັນຈຳນວນນຶ່ງຢູ່ຫ້ອງການໃຫຍ່ວຽງຈັນ ແລະຢູ່ໜ່ວຍງານສະໜອງວັດຖຸ ແລະ ຈັດຊື້ຍັງຄົງເປົ່າຫວ່າງຢູ່, ດັ່ງນັ້ນການຊອກເອົາຄົນທີ່ມີຄວາມສາມາດເຂົ້າມາເຮັດວຽກໃນຕຳແໜ່ງເຫຼົ່ານີ້ຍັງເປັນບັນຫາຢູ່.
ຕົກເຖິງຕອນທ້າຍຂອງປີໄດ້ຮັບເອົາອາສາສະໝັກ ສປຊ 5 ຄົນ ເພື່ອຊ່ວຍວຽກໂຄງການຢູ່ແຂວງ. ພາຍຫຼັງທີ່ໄດ້ຮຽນພາສາ ແລະໄດ້ຮັບການແນະນຳວຽກແລ້ວອາສາສະໝັກດັ່ງກ່າວກໍ່ໄດ້ໄປປະຈຳຢູ່ແຂວງໃນເດືອນທັນວາ. ໜ້າທີ່ຂອງເຂົາເຈົ້າແມ່ນຊ່ວຍເຫຼືອຜູ້ປະສານງານລະດັບແຂວງໃນວຽກງານປະຈຳວັນ ອກລ.
ໂຄງການໄດ້ຈັດກອງປະຊຸມກຸ່ມເຮັດວຽກວິຊາການ (TWG) ຢູ່ບາງບ່ອນ ຊຶ່ງທຸກໆແຂວງໄດ້ເຂົ້າຮ່ວມ. ກອງປະຊຸມທີ່ສຸມໃສ່ບັນຫາປະຕິບັດການມີຜູ້ປະສານງານແຂວງ ແລະທີ່ປຶກສາເຕັກນິກອາວຸໂສລະດັບແຂວງເຂົ້າຮ່ວມ, ແຕ່ກອງປະຊຸມກຸ່ມເຮັດວຽກວິຊາການນັ້ນແມ່ນຜູ້ປະສານງານແຂວງ ແລະຜູ້ຊ່ວຍວຽກການເງິນເຂົ້າຮ່ວມ. ຈຸດປະສົງຕົ້ນຕໍຂອງກອງປະຊຸມ TWG ນີ້ແມ່ນເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະຄວາມຮູ້, ເພື່ອສົ່ງເສີມໃຫ້ມີການສົນທະນາກັນລະຫວ່າງພາກສ່ວນຕ່າງໆໃນໂຄງການ, ເພື່ອແຈ້ງໃຫ້ພະນັກງານແຂວງຮູ້ກ່ຽວກັບການພັດທະນາຂອງໂຄງການກໍ່ຄືຂັ້ນຕອນ ແລະລະບຽບການ ແລະເພື່ອຮັບປະກັນໃຫ້ມີປະຕິບັດການ ອກລ ທີ່ເປັນມາດຕະຖານທົ່ວທັງປະເທດ.




## ວຽກງານຈັດຊື້ ແລະ ສະໜອງວັດຖຸ

ໃນເມື່ອມີການຂະຫຍາຍໂຄງການຢ່າງໄວວາ ແລະ ໃນເມື່ອມີຈຸດສຸມໃສ່ໜ້າວຽກປະຕິບັດການ ນັບແຕ່ຕອນຕົ້ນ, ມັນຈຶ່ງຮຽກຮ້ອງໃຫ້ຂະແໜງຈັດຫາ+ລຳລຽງສຳພາລະຕ້ອງສາມາດຕອບສະໜອງວຽກໃຫ້ທັນການ. ເຖິງແມ່ນວ່າຈະປະສົບກັບສິ່ງທ້າທາຍ ຕ່າງໆ; ອກລ ກໍ່ສາມາດຜ່ານຜ່າໄດ້ດ້ວຍກຳລັງແຮງງານເກືອບຮອດ 1,000 ຄົນ ແລະມີຫ້ອງການ ແລະຖານປະຕິບັດການຢູ່ 9 ແຂວງ. ການຂຶ້ນບັນຊີສາງທັງໝົດໃນຕອນທ້າຍຂອງປີ ຊີ້ໃຫ້ເຫັນວ່າວັດສະດຸທີ່ມີຕີກເປັນເງິນຫຼາຍກວ່າ $3 ລ້ານ, ແລະຄ່າການເສື່ອມຄຸນມີຫຼາຍກວ່າ $2 ລ້ານ. ໃນປີ 1999 ໄດ້ມີການມອບ ຫຼືຊື້ອຸປະກອນໃໝ່ຫຼາຍສົມຄວນ, ສະເພາະຢ່າງຍິ່ງຍານພາຫະນະ, ວິທະຍຸ, ເຄື່ອງຈັບລະເບີດ ແລະອຸປະກອນສຳຫຼວດ.

ລັດຖະບານສະຫະລັດອະເມລິກາຍັງສືບຕໍ່ເປັນຜູ້ຊ່ວຍເຫຼືອລາຍໃຫຍ່ໂດຍໄດ້ສະໜອງຍານພາຫານະ, ວິທະຍຸ, ເຄື່ອງຈັບຄົ້ນຊອກຫາລະເບີດ ແລະອຸປະກອນການສິດສອນພ້ອມທັງໃຫ້ການຊ່ວຍເຫຼືອດ້ານບູລະນະສ້ອມແປງຍານພາຫານະ. ລັດຖະບານ ນິວຊີແລນ ກໍ່ໄດ້ຊ່ວຍທຶນໃຫ້ແກ່ສາງລວມ ຊຶ່ງຈະອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານພາລາທິການໃນການມີວັດສະດຸອຸປະກອນໃນລະດັບພຽງພໍ ແລະສະໜອງໃຫ້ແກ່ບັນດາແຂວງຕາມທີ່ມີຄວາມຕ້ອງການ.

ໄດ້ຮັບຮູ້ວ່າວຽກງານຮັບປະກັນປະສິດຕິພາບໃນການກະກຽມ, ຈັດຊື້, ສະໜອງ ແລະບຳລຸງຮັກສາເປັນວຽກທີ່ເຕັມໄປດ້ວຍຄວາມທ້າທາຍ. ໃນການບໍລິຫານຄຸ້ມຄອງ ຄວນຈະເຮັດແນວໃດເພື່ອປັບປຸງລະດັບການບໍລິການນັ້ນ, ອັນນຶ່ງໃນນັ້ນແມ່ນເຮົາໄດ້ຮັບຮູ້ວ່າ ການມີມາດຕະຖານອຸບປະກອນ ທີ່ໃຊ້ໃນທົ່ວໂຄງການ ຈະຊ່ວຍຍົກລະດັບຄວາມສາມາດດ້ານການສະໜັບສະໜູນວຽກງານພາກ ສະໜາມໄດ້. ນອກນັ້ນກໍ່ເຫັນວ່າຄວນປັບປຸງບາງຢ່າງຕື່ມດັ່ງລຸ່ມນີ້:

- ❒ ປັບປຸງລະບົບສະໜອງ, ເກັບມ້ຽນ ແລະແຈກຢາຍ;
- ❒ ປະຕິບັດລະບົບຄຸ້ມຄອງ, ບຳລຸງຮັກສາ ແລະສ້ອມແປງຍານພາຫານະ;
- ❒ ປັບປຸງຂັ້ນຕອນຈັດຊື້ໃຫ້ງ່າຍດາຍຮັບປະກັນປະສິດທິຜົນສູງ ແລະພ້ອມກັນຮັບປະກັນສະພາບໂປ່ງໃສດ້ານການເງິນ;
- ❒ ລິເລີ່ມໃຫ້ມີການອົບຮົມພາຍໃນ ແລະສິ່ງອຳນວຍຄວາມສະດວກກ່ຽວກັບການບຳລຸງຮັກສາ;
- ❒ ປັບປຸງລະບົບຄວບຄຸມ ແລະເກັບມ້ຽນວັດສະດຸສິ່ງຂອງ; ແລະ
- ❒ ເພີ່ມທະວີລະດັບພະນັກງານ.

### ຊັບສົມບັດຄົງທີ່

ໃນປີ 1999 ໄດ້ປະຕິບັດຢ່າງເປັນລະບົບທາງການວຽກຄຸ້ມຄອງຊັບສົມບັດຄົງທີ່, ໄດ້ສ້າງຕັ້ງຖານຂໍ້ມູນຊັບສົມບັດ ແລະໄດ້ໂອນເອົາຂໍ້ມູນຊັບສົມບັດເຂົ້າໃນຖານຂໍ້ມູນສຳເລັດແລ້ວ 90% ມາຮອດຕອນທ້າຍຂອງປີ. ນີ້ບໍ່ແມ່ນການບັນທຶກຂໍ້ມູນຊັບສົມບັດແບບງ່າຍດາຍເທົ່ານັ້ນ ແຕ່ເປັນແຫຼ່ງຂໍ້ມູນຕົ້ນຕໍທີ່ເຊື່ອມຕໍ່ໄປຫາໃບຄິດໄລ່ການຫຼຸ້ຍຫ້ຽນຂອງຊັບສົມບັດນຳດ້ວຍ. ໄດ້ມີການອອກແບບຕົວແບບຈຳນວນນຶ່ງສຳລັບກຸ່ມ ແລະປະເພດຊັບສົມບັດ ແລະໃນແຕ່ລະເດືອນໄດ້ຄິດໄລ່ຄ່າການຫຼຸ້ຍຫ້ຽນ ແລະຄຸນຄ່າຊັບສົມບັດຄົງທີ່ ຊຶ່ງແມ່ນພາກນຶ່ງຂອງບົດລາຍງານການເງິນ.

# ການລະດົມການຊ່ວຍເຫຼືອ

ອກລ ຍັງຄົງຢູ່ໃນຖານະຕ້ອງອີງອາໃສການສະໜັບສະໜູນຈາກສາກົນດ້ານທຶນ, ແລະດັ່ງດຽວກັບໂຄງການເກັບກູ້ລະເບີດສ່ວນຫຼາຍ ອກລ ຈະຕ້ອງອາໃສທຶນດັ່ງກ່າວໄປອີກລະຍະນຶ່ງ. ອກລ ແມ່ນສ່ວນນຶ່ງຂອງວຽກງານພັດທະນາໃນປະເທດ, ບໍ່ແມ່ນເປັນພຽງແຕ່ປະຕິບັດການສຸກເສີນພາຍຫຼັງມີສະພາບສົງຄາມເທົ່ານັ້ນ. ດັ່ງນັ້ນມັນຈຳເປັນຕ້ອງປ່ຽນຈາກຖານະຂາດຄວາມຮັບປະກັນຍ້ອນມີແຕ່ແຫຼ່ງທຶນສຸກເສີນລະຍະສັ້ນ ແລະກ້າວໄປຫາການມີທຶນລະຍະຍາວຫຼາຍໆປີ.

ພວກເຮົາຮູ້ດີວ່າລະດັບການມີລູກລະເບີດບໍ່ທັນແຕກຕົກຄ້າງຢູ່ນັ້ນແມ່ນສູງ ແລະວຽກເກັບກູ້ແມ່ນຍາວນານ; ພວກເຮົາກໍ່ຮູ້ດີວ່າສະພາບດັ່ງກ່າວໄດ້ສ້າງຜົນກະທົບທາງລົບໃຫ້ແກ່ຄວາມພະຍາຍາມລວມໃນການພັດທະນາປະເທດ. ດັ່ງນັ້ນພວກເຮົາຈຶ່ງສ້າງໂຄງປະຕິບັດການ, ຄຸ້ມຄອງບໍລິຫານ ແລະການເງິນເພື່ອຮອງຮັບ ແລະສ້າງກົນໄກຮັບເອົາທຶນຊ່ວຍເຫຼືອສຳລັບສ້າງໂຄງການຍືນຍົງ ແລະມີຄວາມຮັບຜິດຊອບໃນກອງທຶນພິເສດແຫ່ງຊາດຂອງພວກເຮົາ. ບົດຮຽນຈາກປະເທດອື່ນໆຊີ້ໃຫ້ເຫັນວ່າຖ້າບໍ່ມີກົນໄກແຫ່ງຊາດຄືແນວນັ້ນ ມັນຈະມີສະພາບຊໍ້າຊ້ອນ ແລະການໃຊ້ຈ່າຍຫຼາຍ, ນອກນັ້ນກໍ່ຈະມີບັນຫາດ້ານການປະສານສົມທົບບໍ່ໜ້ອຍ.

ມາດຽວນີ້ໄດ້ມີການສຸມໃສ່ວຽກກອງທຶນພິເສດ. ຍ້ອນວ່າທຶນເລີ້ມຕົ້ນຈາກ UNDP ໄດ້ຖືກນຳໃຊ້ໝົດແລ້ວໃນປີ 1999. ຢ່າງໃດກໍ່ຕາມດັ່ງທີ່ຈະເຫັນຢູ່ໜ້າ *"ການຜິດດ່ຽງດ້ານທຶນ"* , ທ່ານຈະເຫັນວ່າເລື່ອງທຶນໂດຍກົງຈາກຜູ້ຊ່ວຍເຫຼືອທີ່ມາໃຊ້ກັບສາກົນນັ້ນແມ່ນບໍ່ມີບັນຫາເວົ້າໂດຍທົ່ວໄປ, ແຕ່ທຶນສຳລັບໃຊ້ກັບພະນັກງານລາວ, (ນັກເກັບກູ້ທຳລາຍ, ຄູຝຶກ, ນັກສຳຫຼວດ, ...) ກໍ່ຄືທຶນໄຊ້ໝູນວຽນນັ້ນແມ່ນມີອັນຫຼຸດຜ່ອນ. ຕົກມາຮອດປີ 2000 ພະນັກງານລາວທັງໝົດຈະຮັບເງິນເດືອນຈາກ ອກລ, ດັ່ງນັ້ນກອງທຶນພິເສດຈະຕ້ອງສາມາດຮັບຄ່າໃຊ້ຈ່າຍການດຳເນີນວຽກງານຂອງໂຄງການ.

ເພື່ອສາມາດກຳກັບຮອບໝູນທຶນລະຍະຍາວໄດ້ ມັນມີຄວາມຈຳເປັນຕ້ອງຊີ້ໃຫ້ເຫັນເຖິງຄວາມຄືບໜ້າຂອງກອງທຶນພິເສດ ແລະຕ້ອງສ້າງຄວາມໝັ້ນໃຈວ່າກອງທຶນນັ້ນມີຄວາມຮັບຜິດຊອບ ແລະໄດ້ຮັບຄວາມເຊື່ອຖື. ຕໍ່ບັນຫານີ້ພວກເຮົາໄດ້ສຸມຄວາມພະຍາຍາມຫຼາຍສົມຄວນໃນການອອກແບບ ແລະນຳໃຊ້ມາດຕະການຊຶ່ງໃນກະໂຕຂອງມັນສາມາດກວດສອບບັນຊີ ແລະຮັບປະກັນຄວາມໂປ່ງໃສ, ພ້ອມທັງຕ້ອງສະແດງໃຫ້ບຸກຄົນພາຍໃນ ແລະຕ່າງປະເທດຮູ້ເຖິງຄຸນຄ່າຂອງວຽກງານພວກເຮົາ. ໄດ້ມີການກວດສອບບັນຊີຈາກພາຍນອກທີ່ມີມາດຕະຖານສາກົນ ແລະຜົນຂອງການກວດສອບດັ່ງກ່າວໃຜໆກໍ່ສາມາດສຶກສາໄດ້. ເຖິງແມ່ນວ່າການພັດທະນາຂອງ ອກລ ໄດ້ດຳເນີນມາຢ່າງເປີດເຜີຍ ແລະດ້ວຍຄວາມຮັບຜິດຊອບສູງກໍ່ຕາມ, ການລະດົມຊັບພະຍາກອນຫຼັງໆມານີ້ໄດ້ພົບກັບບາງປັດໃຈພາຍນອກຈຳນວນນຶ່ງ ແລະເກີດມີຄວາມເຂົ້າໃຈບໍ່ຖືກຕ້ອງ ຊຶ່ງໃນນັ້ນລວມທັງຄວາມເຂົ້າໃຈຜິດພາດວ່າໂຄງການເກັບກູ້ລະເບີດທັງຫຼາຍໃນອາຊີອາຄະເນແມ່ນລ້ວນແລ້ວແຕ່ມີການສໍ້ໂກງບໍ່ໂປ່ງໃສ; ຄິດວ່າກອງທຶນພິເສດນັ້ນແພງສິ້ນເປືອງໂພດ; ແລະຄວາມຄາດຫວັງຂອງພາຍນອກທີ່ວ່າການຕັດສິນບັນຫາຄວນເປັນແບບດຽວກັນກັບວິທີການຂອງປະເທດທີ່ໃຫ້ທຶນຊ່ວຍເຫຼືອ. ທັງໝົດເຫຼົ່ານີ້ໄດ້ພົບເຫັນຢູ່ບາງບົດລາຍງານຂ່າວໃນນິຕິຍະສານສາກົນບາງສະບັບ.

ເມື່ອຮັບຮູ້ປັດໃຈຕ່າງໆເຫຼົ່ານີ້ແລ້ວ, ອກລ ມີພາລະສຳຄັນຕ້ອງສືບຕໍ່ ອັນນຶ່ງໃນນັ້ນກໍ່ຄືຕ້ອງສື່ສານທຳຄວາມເຂົ້າໃຈກັບພາຍນອກໃຫ້ມີປະສິດຕິຜົນກ່ອນເກົ່າ ເພື່ອລຶບລ້າງຄວາມເຂົ້າໃຈຜິດພາດ ແລະການເບິ່ງບັນຫາທີ່ບໍ່ຖືກຕ້ອງເຫຼົ່ານັ້ນ, ແລະພວກເຮົາຕ້ອງປັບປຸງການລາຍງານຂ່າວຂອງເຮົາໃຫ້ດີກວ່າເກົ່າ. ມາຮອດດຽວນີ້ໂຄງການເຮົາໄດ້ພະຍາຍາມສຸມໃສ່ວຽກສ້າງ ແລະປັບປຸງການຈັດຕັ້ງ; ການສື່ສານກັບພາຍນອກຍັງບໍ່ທັນມີປະສິດຕິພາບສູງ ດັ່ງນັ້ນຈະຕ້ອງປັບປຸງຂົງເຂດນີ້.

ເພື່ອຕອບສະໜອງວຽກງານພັດທະນາທົ່ວໆໄປ ໂຄງການພວກເຮົາຍັງໄດ້ລິເລີ້ມວຽກງານຈຳນວນນຶ່ງເພື່ອຄົ້ນຄວ້າຄວາມເປັນໄປໄດ້ທີ່ຈະຮຽກຮ້ອງ "ຄ່າທົດແທນ" ຈາກການບໍລິການເກັບກູ້ລະເບີດ ຊຶ່ງກໍ່ແມ່ນການສ້າງລາຍຮັບມາຖົມຊູໃຫ້ແກ່ການເຮັດວຽກເພື່ອມະນຸດສະທຳ ແລະການພັດທະນາຂອງໂຄງການ ຊຶ່ງຢູ່ບ່ອນນີ້ເປົ້າໝາຍຂອງມັນແມ່ນຊຸມຊົນທີ່ບໍ່ມີແຫຼ່ງຊ່ວຍເຫຼືອອື່ນໆ.

ອກລ ຮູ້ວ່າພາລະໃນອານາຄົດຍັງມີຫຼວງຫຼາຍ. ພ້ອມໆກັນກັບຄວາມຮູ້ສຶກຮູ້ບຸນຄຸນທີ່ໄດ້ຮັບການສະໜັບສະໜູນອັນລໍ້າຄ່າມາເຖິງປັດຈຸບັນ, ອກລ ໃຫ້ຄຳໝັ້ນວ່າຈະປັບປຸງວຽກສື່ສານສ້າງຄວາມເຂົ້າໃຈກັບຜູ້ໃຫ້ທຶນຕ່າງໆທັງນີ້ກໍ່ເພື່ອຮັບປະກັນວ່າຄວາມເປັນຫ່ວງໃດໆກໍ່ຄືວຽກງານການນຳພາຈະໄດ້ຮັບມາພິຈາລະນາໃຫ້ມີປະສິດຕິຜົນກວ່າເກົ່າໃນອານາຄົດ. ພວກເຮົາຫວັງວ່າຜູ້ໃຫ້ທຶນທັງຫຼາຍຈະເພີ່ມທະວີການປະກອບສ່ວນຂອງພວກເພີ່ນເຂົ້າໃນກອງທຶນພິເສດ ເພື່ອເຮັດໃຫ້ ອກລ ສາມາດເຄື່ອນໄຫວຕາມພາລະໜ້າທີ່ນັບມື້ເພີ່ມທະວີ.

# ທຶນທີ່ຍັງຂາດ

## ການສະໜັບສະໜູນພະນັກງານລາວ

ໃນລາຍການໆສະໜັບສະໜູນພະນັກງານລາວນີ້ ມັນແມ່ນຮ່ວງເງິນສຳລັບຈ່າຍເງິນເດືອນ ແລະຄ່າປະຕິບັດວຽກງານ* ຂອງພະນັກງານລາວ. ທຶນເພື່ອໃຊ້ຈ່າຍໃນຂອດນີ້ມາຈາກການສົມທົບສາກົນເຂົ້າໃນກອງທຶນພິເສດ, ໃນນັ້ນກໍ່ມີທຶນຈາກ UNICEF ໃຫ້ແກ່ພາກສ່ວນ ໂຄສະນາສຶກສາຊຸມຊົນ. ຢູ່ໃນນີ້ລວມທັງຄ່າໃຊ້ຈ່າຍໃຫ້ທີ່ປຶກສາ ສາກົນທີ່ເຮັດວຽກຢູ່ຫ້ອງການ ອກລ ວຽງຈັນ 6 ຄົນ ແລະຄ່າໃຊ້ຈ່າຍຂອງສູນຝຶກອົບຮົມສຳລັບປີ 2001.
ການປະກອບທຶນທີ່ບໍ່ເຈາະຈົງຂົງເຂດການນຳໃຊ້ຈະສະດວກດີກວ່າ ແລະເຮັດໃຫ້ການຄຸ້ມຄອງນຳໃຊ້ເງິນມີປະສິດຕິຜົນຫຼາຍກວ່າ. ເຖິງຢ່າງໃດກໍ່ຕາມ ການປະກອບສົມທົບທຶນສາມາດເປັນປະເພດກຳນົດການນຳໃຊ້ສະເພາະກໍ່ໄດ້ ດັ່ງທີ່ຜູ້ໃຫ້ທຶນຈຳນວນນຶ່ງໄດ້ສົມທົບເພື່ອນຳໃຊ້ສະເພາະໃນບາງແຂວງ, ຫຼືໃຊ້ສຳລັບພະນັກງານ ຫຼືບາງກິດຈະກຳ.

*ແຍກປະເພດການໃຊ້ຈ່າຍເງິນສຳລັບພະນັກງານລາວມີດັ່ງນີ້: 50% ສຳລັບພະນັກງານ (ເງິນເດືອນນັກເກັບກູ້, ນັກສຳຫຼວດ, ພະນັກງານ ຄສຊ, ຄູຝຶກ, ພະນັກງານການເງິນ ແລະປົກຄອງ, ຄ່າເດີນທາງ ແລະປິ່ນປົວ); 13% ສຳລັບຄ່າໃຊ້ຈ່າຍເພື່ອແລ່ນວຽກ (ນ້ຳມັນ, ບຳລຸງສ້ອມແປງພະຫານະ, ຄ່ານ້ຳໄຟ, ...). 32% ສຳລັບອຸປະກອນ (ທັງປະເພດຄົງທຶນ ແລະບໍ່ຄົງທຶນ).

**ທຶນຍັງຂາດ**

**2000** $3.100.000 ງົບປະມານ
$135.000 ທຶນຍັງຂາດ
ເພື່ອໃຊ້ຈ່າຍໃນແຂວງ

**2001** $3.500.000 ງົບປະມານ
$105.000 ຮັບ
$250.000 ມອບ
**$3.145.000 ທຶນຍັງຂາດ ເພື່ອໃຊ້ຈ່າຍໃນແຂວງຕ່າງໆ, ຫ້ອງການ ອ.ກ.ລ ວຽງຈັນ ແລະ ສູນຝຶກອົບຮົມ**




## ຄູ່ຮ່ວມປະຕິບັດງານ

ທຶນໃຊ້ໃຫ້ແກ່ຄູ່ຮ່ວມປະຕິບັດງານແມ່ນໄດ້ຜ່ານກອງທຶນພະເສດ ຫຼືບໍ່ກໍ່ແມ່ນຈຳນວນເງິນທີ່ສົ່ງໃຫ້ອົງການຈັດຕັ້ງຄູ່ຮ່ວມມືໂດຍກົງ. ທຶນປະກອບສ່ວນນີ້ໃຊ້ຈ່າຍຄ່າເງິນເດືອນ ແລະຄ່າບໍລິຫານຂອງທີ່ປຶກສາວິຊາການ, ພະນັກງານສະໜັບສະໜູນ ແລະອຸບປະກອນເຂົາເຈົ້າ. ໃນປີ 2001 ທຶນຍັງຂາດຢູ່ສຳລັບ MAG ສາລະວັນ ແລະຊຽງຂວາງ, HI ແຂວງສະຫວັນນະເຂດ; NPA ແຂວງເຊກອງ ແລະອັດຕະປື; ແລະ Gerbera ແຂວງຫົວພັນ ແລະຫຼວງພະບາງ.

**ທຶນຍັງຂາດ**

**2000** $5.900.000 ງົບປະມານ
**$165.000 ທຶນຍັງຂາດ**

**2001** $4.600.000 ງົບປະມານ
$420.000 ລາຍຮັບ
$800.000 ຄຳໝັ້ນສັນຍາ
**$3.380.000 ທຶນຍັງຂາດ**




## ຝຶກອົບຮົມ ແລະ ອຸປະກອນ.

ຜູ້ໃຫ້ທຶນໄດ້ຊ່ວຍ ອກລ ໃນຫຼາຍຂົງເຂດເຊັ່ນ ໃຫ້ການສະໜັບສະໜູນແກ່ການຝຶກອົບຮົມ, ການຈັດຫາຊັບສົມບັດຄົງທີ່, ພັດທະນາວຽກໂຄສະນາສຶກສາຊຸມຊົນ, ທີ່ປຶກສາວິຊາການທັງໃນແຂວງ ແລະສຳນັກງານທີ່ວຽງຈັນ ແລະສະໜັບສະໜູນ GIS. ການປະກອບສ່ວນແມ່ນຜ່ານກອງທຶນພິເສດ ແລະຢູ່ໃນຮູບການຊ່ວຍເຫຼືອທີ່ບໍ່ແມ່ນເງິນ.

**ທຶນຍັງຂາດ**

**2000** $85.000 (ປະມານ) ສຳລັບການກໍ່ສ້າງອາຄານໃໝ່ຢູ່ສູນຝຶກອົບຮົມ

**2001** $500.000 ສຳລັບພາຫະນະ ແລະ ອຸປະກອນ

# ລາຍຮັບ

## ກອງທຶນພິເສດ

| ແຫຼ່ງທຶນ | 1996 - 98 | 1999 | ທຶນທີ່ໄດ້ຮັບທັງໝົດ |
|---|---|---|---|
| ອົດສະເຕຣຍ | 1.038.443 | 0 | 1.038.443 |
| ເບນຢຽມ | 394.737 | 0 | 394.737 |
| ຄານາດາ | 182.482 | 135.762 | 318.244 |
| ເດນມາກ | 400.000 | 2.739.833 | 3.139.833 |
| ຟິນແລນ | 290.135 | 0 | 290.135 |
| ຍີ່ປຸ່ນ | 0 | 242.924 | 242.924 |
| ລຸກແຊມເບີກ | 34.747 | 440.000 | 474.747 |
| ເນເທີແລນ | 800.000 | 0 | 800.000 |
| ນິວຊີແລນ | 517.888 | 90.036 | 607.924 |
| ນໍເວ | 1.688.358 | 380.228 | 2.068.586 |
| ສະວີເດນ | 394.176 | 0 | 394.176 |
| ອັງກິດ | 138.020 | 0 | 138.020 |
| ສະຫະລັດອະເມລິກາ | 850.000 | 360.000 | 1.210.000 |
| ການຊ່ວຍເຫຼືອເອກະເທດ | 773 | 7 | 780 |
| ດອກເບ້ຍໃນບັນຊີ ກອງທຶນພິເສດ | 391.640 | 0 | 391.640 |
| **ລວມທັງໝົດຂອງກອງທຶນ** | **7.121.399** | **4.388.790** | **11.510.189** |

## ທຶນອື່ນໆ

| | | | |
|---|---|---|---|
| UNDP | 2.120.000 | 0 | 2.120.000 |
| ອົງການ ແມນໂນນາຍ | 0 | 25.000 | 25.000 |
| **ລວມ** | **2.120.000** | **25.000** | **2.145.000** |
| **ການປະກອບສ່ວນທັງໝົດ** | **9.241.399** | **4.413.790** | **13.655.189** |

# ລາຍລະອຽດການໃຊ້ຈ່າຍປີ 1999

| | | |
|---|---|---|
| **ການປະຕິບັດງານ ອ.ກ.ລ** | | |
| ໃຊ້ຈ່າຍໃຫ້ພະນັກງານ | 1.288.109 | |
| ໃຊ້ຈ່າຍການປະຕິບັດງານ | 179.767 | |
| ການໃຊ້ຈ່າຍປະຕິບັດງານພິເສດ | 52.205 | |
| ອຸປະກອນບໍ່ຄົງທຶນ | 51.984 | |
| ອຸປະກອນຄົງທຶນ | 118.863 | |
| ລວມ | | 1.690.928 |
| **ທຶນສົ່ງໃຫ້ຄູ່ຮ່ວມປະຕິບັດງານ** | | |
| MAG | 800.000 | |
| WVA | 115.598 | |
| NPA | 30.000 | |
| ລວມ | | 945.598 |
| **ການສະໜັບສະໜູນຂອງ ສປຊ** | | |
| UNDP 3% ມູນຄ່າການສະໜັບສະໜູນ | 76.499 | |
| ລວມ | | 76.499 |
| **ລວມຄ່າໃຊ້ຈ່າຍທັງໝົດ** | | **2.713.025** |

24 / VII

# ດູນບັນຊີ

## ທຶນ

ຫ້າມຈຳໜ່າຍ

| | | |
|---|---|---|
| ກອງທຶນພິເສດ | 11.510.189 | |
| ທຶນ UNDP ເພື່ອເລີ່ມຕົ້ນ | 400.000 | |
| ການສະໜັບສະໜູນຕົ້ນຕໍ UNDP | 1.720.000 | |
| ອົງການແມນໂນນາຍ | 25.000 | |
| ທຶນໝູນວຽນ ອ.ກ.ລ | 85.720 | |
| UNICEF | | |
| ລວມທຶນທັງໝົດທີ່ມີ | | 13.740.909 |
| **ການໃຊ້ຈ່າຍ** | | |
| ກອງທຶນພິເສດ | 7.777.163 | |
| ທຶນເລີ່ມຕົ້ນ UNDP | 400.000 | |
| ທຶນສະໜັບສະໜູນຕົ້ນຕໍ UNDP | 1.712.677 | |
| ອົງການແມນໂນນາຍ | 12.325 | |
| ທຶນໝູນວຽນ ອ.ກ.ລ | 61.591 | |
| UNICEF | | |
| ລວມຄ່າໃຊ້ຈ່າຍທັງໝົດ | | 9.963.756 |
| ດູນໂອນມາປີ **2000** | | **3.777.153** |

# ລາຍລະອຽດ ການໃຊ້ຈ່າຍ ບໍລິຫານ

| | ທີ່ປຶກສາ | ພະນັກງານລາວ |
|---|---|---|
| **ຈ່າຍໃຫ້ພະນັກງານ** | | |
| ເງິນເດືອນ | 265.043 | 821.395 |
| DSA | | 15.440 |
| ຄ່າເດີນທາງ | 2.121 | 17.785 |
| ຄ່າປິ່ນປົວ | | 1.729 |
| ເສຍພາສີ | | 164.596 |
| **ລວມຄ່າໃຊ້ຈ່າຍໃຫ້ພ/ງ** | | **1.288.109** |
| **ຄ່າບໍລິຫານແລ່ນວຽກ** | | |
| ນ້ຳມັນ | | 48.418 |
| ນ້ຳ/ໄຟ | | 2.708 |
| ໂທລະສັບ/ແຟັກ | | 7.103 |
| ອາໄລ່ຍານພາຫະນະ | | 9.849 |
| ການສ້ອມແປງ ແລະ ບຳລຸງຮັກສາພາຫະນະ | | 9.108 |
| ຢາງລົດ | | 9.093 |
| ຄ່າເຊົ່າຫ້ອງການ | | 1.795 |
| ສ້ອມແປງ ແລະ ຕິດຕັ້ງອຸປະກອນຫ້ອງການ | | 43.040 |
| ການສ້ອມແປງອຸປະກອນຫ້ອງການ | | 7.506 |
| ການສ້ອມແປງອຸປະກອນສະໜາມ | | 4.147 |
| ຄວາມປອດໄພ/ສາງດິນລະເບີດ | | 3.864 |
| ປີ້ເຮືອໂດຍສານ | | 434 |
| ປະກັນໄພ | | 1.516 |
| ຄ່າຂົນສົ່ງ ແລະ ໄປສະນີ | | 2.494 |
| ພາສີເກັບກູ້ | | 2.786 |
| ຄ່າພິມ | | 14.927 |
| ຄ່າຂົນສົ່ງ | | -3.421 |
| ເຄື່ອງໃຊ້ຫ້ອງການ | | 10.553 |
| ເງິນໃຊ້ຈ່າຍຍ່ອຍ | | 3,847 |
| **ລວມຄ່າໃຊ້ຈ່າຍບໍລິຫານ** | | **179.767** |
| **ຄ່າໃຊ້ຈ່າຍບໍລິຫານພິເສດ** | | |
| ສຳມະນາ ແລະ ຝຶກອົບຮົມ | | 1.554 |
| ຜະລິດລາຍການວິທະຍຸໂທລະພາບ | | 364 |
| ແຜນທີ່/ພິມແຜນທີ່ | | 149 |
| ໂຄສະນາ ແລະ ວາງສະແດງ | | 1.760 |
| ສະເໜີວຽກງານໂດຍຫຍໍ້ | | 2.320 |
| ຄ່າເຮັດບົດລາຍງານ | | 5.773 |
| ອອກໃບອະນຸຍາດ | | 5.975 |
| ກວດກາບັນຊີ | | 5.830 |
| ຄ່າທຳນຽມທະນາຄານ | | 1.311 |
| ຝຶກອົບຮົມ | | 9.999 |
| ກອງປະຊຸມຄະນະກຳມະການຊີ້ນຳ | | 1.861 |
| ເດີນທາງໄປຕ່າງປະເທດ/ຜູ້ແທນ/ກອງປະຊຸມ | | 2.058 |
| ຄ່າໃຊ້ຈ່າຍຕ່າງໆ | | 2.034 |
| ຄ່າຢູ່ກິນພັກເຊົາສູນຝຶກ | | 11.217 |
| **ລວມຄ່າໃຊ້ຈ່າຍບໍລິຫານພິເສດ** | | **52.205** |
| **ອຸປະກອນຄົງທີ່** | | |
| ພາຫະນະ | | 2.000 |
| ເຄື່ອງຈັກໃຊ້ໃນຫ້ອງການ | | 291 |
| ເຄື່ອງເຟີນີເຈີໃຊ້ໃນຫ້ອງການ | | 5.130 |
| ເຄື່ອງຈັກຫ້ອງການ | | 15.426 |
| ເຄື່ອງສື່ສານ | | 1.109 |
| ອຸປະກອນເກັບກູ້ທຳລາຍ | | 8.888 |
| ເຄື່ອງມືເກັບກູ້ທຳລາຍ | | 1.455 |
| ອຸປະກອນສະແດງ ຄສຊ | | 16.214 |
| ອຸປະກອນ ຄສຊ ພາກສະໜາມ | | 1.206 |
| ຄ່າໃຊ້ຈ່າຍຕ່າງໆ | | 266 |
| **ລວມອຸປະກອນຄົງທີ່** | | **51.985** |
| **ອຸປະກອນບໍ່ຄົງທີ່** | | |
| ເຄື່ອງໃຊ້ຫ້ອງການ | | 7.090 |
| ເຄື່ອງໃຊ້ການແພດສຳລັບພ/ງ | | 27.506 |
| ເຄື່ອງໃຊ້ໃນວຽກງານ ຄສຊ | | 22.512 |
| ວັດຖຸລະເບີດ | | 56.674 |
| ເຄື່ອງໃຊ້ເພື່ອເກັບກູ້ທຳລາຍ | | 5.081 |
| **ລວມອຸປະກອນບໍ່ຄົງທີ່** | | **118.863** |
| **ລວມຄ່າໃຊ້ຈ່າຍບໍລິຫານທັງໝົດ** | | **1.690.929** |

# ຊັບສິນບັດຄົງທີ່

| ໝວດ | ລາຄາຈັດຊື້/ ມູນຄ່າ | ເບື້ອງຕົ້ນ ຫຼຸ້ຍຫ້ຽນ | ຫຼຸ້ຍຫ້ຽນ ການຄິດໄລ່ ມູນຄ່າ | ຫຼຸ້ຍຫ້ຽນ | ປະຈຸບັນ ມູນຄ່າຊັບສິນ | ຊັບສິນຍັງເຫຼືອ ມູນຄ່າ |
|---|---|---|---|---|---|---|
| ລົດໃຫຍ່ | 1.428.117 | 42.000 | 1.386.117 | 495.428 | 890.689 | - |
| ລົດຈັກ | 106.358 | - | 106.358 | 31.121 | 75.237 | - |
| ອຸປະກອນສື່ສານ. | 389.882 | 150 | 389.732 | 140.670 | 249.062 | - |
| ອຸປະກອນສະໜາມ | 1.102.478 | 1.000 | 1.101.478 | 428.632 | 671.389 | 1.457 |
| ອຸປະກອນຫ້ອງການ | 281.209 | 2.150 | 279.059 | 153.974 | 119.144 | 5.941 |
| ລວມ | **3.308.044** | **45.300** | **3.262.744** | **1.249.825** | **2.005.521** | **7.398** |

## ການເກັບກູ້ສິ່ງທີ່ສ່ຽງຕໍ່ຊີວິດ




ເນື້ອໃນເພງ ແລະລະຄອນຕຸກກະຕາ ຂອງວຽກງານໂຄສະນາສຶກສາຊຸມຊົນຂອງ ອກລ ຈຳນວນນຶ່ງທີ່ເຕືອນໄພອັນຕະລາຍທີ່ເກີດຂຶ້ນໄດ້ ຍ້ອນຫຼົງວ່າລູກບ້ອມບີ້ແມ່ນໝາກຕູມ. ວັດສະດຸທີ່ເລັງໃສ່ເດັກນ້ອຍມັກຈະເນັ້ນບັນຫານີ້ດັ່ງທີ່ເຫັນຢູ່ໃນເນື້ອໃນບົດລະຄອນຕຸກກະຕາຂ້າງລຸ່ມ. ລູກລະເບີດ BLU 24 ແມ່ນນຶ່ງໃນຈຳນວນລູກລະເບີດຫຼາຍແນວທີ່ເອີ້ນວ່າ "ບ້ອມບີ້" ໃນພາສາລາວ ຊຶ່ງຮູບຂອງມັນຢູ່ກ້ຳຂວາ. ມັນກົມມົນອອກສີເຫຼືອງໆ ຂະໜາດດຽວກັບໝາກຕູມເຊັ່ນພາບເບື້ອງຊ້າຍ.




<u>ນ້ອຍ</u>: ຊື່ຂ້ອຍແມ່ນນ້ອຍ. ໂທ້ ຕາເວັນເກືອບຕົກດິນແລ້ວ. ບ່າງົວຂ້ອຍປ່ອຍໄປກິນຫຍ້າມື້ເຊົ້ານີ້ຊິຍ່າງໄປຮອດໃສນໍ ? ຂ້ອຍຊິຊວນກີໄປຊອກເອົາງົວນຳຂ້ອຍກ່ອນ. ພໍ່ແມ່ຂ້ອຍຊິໃຈຮ້າຍຖ້າບໍ່ເຫັນງົວເມືອບ້ານ.

(ເອີ້ນຂຶ້ນ)...ກີ, ເຈົ້າຢູ່ເຮືອນຫັ້ນຫວ່າ ?

<u>ກີ</u>: ເອີ, ຂ້ອຍຢູ່ນີ້, ມີຫຍັງວ່າ ?
<u>ນ້ອຍ:</u> ໄປຊອກເອົາງົວເທາະ, ມັນຊິມືດແລ້ວໄດ
<u>ກີ</u>: ເອີ, ດີຄືກັນ. ຖ້າບຶດນຶ່ງ, ຂ້ອຍໄປເອົາກັນຖຸນກ່ອນ. ນ້ອຍ, ເຈົ້າລອງຂຶ້ນຕົ້ນໄມ້ເບິ່ງດູວ່າງົວມັນຢູ່ໃສ.

<u>ນອ້ຍ</u>: ຕົກລົງ.

<u>ກີ</u>: ເຫັນບໍ່ ?

<u>ນ້ອຍ</u>: ເອີ, ຢູ່ທີ່ງເບື້ອງນັ້ນພຸ້ນ.

<u>ກີ</u>: ບໍ່ແມ່ນພຸ້ນບໍເຂົາວ່າມີໝາກຕູມ.

### ການສະແດງລະຄອນຕຸກກະຕາ



<u>ນ້ອຍ</u>: ກີເຫີຍ! ມັນບໍ່ແມ່ນຍາມໝາກຕູມສຸກໄດ໋. ຢ່າໄປຈັບໄປບາຍມັນໄດ. ຂ້ອຍຢ້ານວ່າແມ່ນລູກ "ບ້ອມບີ້" ພວກໂຄສະນາສຶກສາຊຸມຊົນທີ່ໄດ້ມາໂຮງຮຽນເຮົາໄດ້ເລົ່າວ່າຢູ່ບ້ານເຮົາຍັງມີລູກ "ບ້ອມບີ້" ຕົກຄ້າງຢູ່ຫຼາຍໄດ໋, ແລະມັນເບິ່ງຊິ່ງຄືແມ່ນໝາກຕູມໄດ້.

<u>ກີ</u>: ຕອນໃດ.

<u>ນ້ອຍ</u>: ມື້ເຈົ້າຂາດໂຮງຮຽນຫັ້ນ. ເຂົາເຈົ້າວ່າລູກ "ບ້ອມບີ້" ມີອັນຕະລາຍຫຼາຍແທ້ໆໄດ໋.

<u>ກີ</u>: ບໍ່ນ່ຳ ບໍ່ແມ່ນລູກບ້ອມບີ້ດອກ. ຂ້ອຍຊິລອງຍິງມັນເບິ່ງ !

...ບູ້ມ...

<u>ນ້ອຍ</u>: ໂອ່ຍ, ຂ້ອຍເຕືອນເຈົ້າແລ້ວນ່ຳແລ້ວເຈົ້າກໍ່ບໍ່ຟັງ. ຕາຍເລືອດໄຫຼຫຼາຍແທ້. ຂ້ອຍຊິອຸ້ມເຈົ້າໄປເຮືອນ.

..ຄ່ອຍໆໂຊມໝູ່ອອກໄປ...

# ທຶນດູນດ່ຽງ

## ກອງທຶນພິເສດ

| ປະເທດ | ການຊ່ວຍເຫຼືອທີ່ໄດ້ຮັບ | ໃຊ້ຈ່າຍ 19951998 | ໃຊ້ຈ່າຍ 1999 | ມອບ 2000 | ການຊ່ວຍເຫຼືອ ຈຸດປະສົງ |
|---|---|---|---|---|---|
| ອິດສະເຕເຣຍ | 669.270 | 418.704 | 230.557 | 20.009 | ບໍ່ໄດ້ກຳນົດການໃຊ້ |
| ອິດສະເຕເຣຍ | 369.173 | 250.107 | 119.066 | 0 | ແຂວງຄຳມ່ວນ |
| ເບນຢຽມ | 394.737 | 394.737 | 0 | 0 | ແຂວງສະຫວັນນະເຂດ |
| ຄານາດາ | 135.762 | 0 | 0 | 135.762 | ບໍ່ໄດ້ກຳນົດການໃຊ້ |
| ຄານາດາ | 182.482 | 162.454 | 20.028 | 0 | ຄສຊ |
| ເດນມາກ | 3.139.833 | 1.190.831 | 824.443 | 1.124.559 | ແຂວງຊຽງຂວາງ |
| ຟິນແລນ | 290.135 | 84.135 | 206.000 | 0 | ບໍ່ໄດ້ກກຳນົດການໃຊ້ |
| ລັກແຊມເບີກ | 254.747 | 34.747 | 37.257 | 182.743 | ບໍ່ໄດ້ກຳນົດການໃຊ້ |
| ລັກແຊມເບີກ | 220.000 | 0 | 140.798 | 79.202 | ແຂວງສະຫວັນນະເຂດ |
| ເນເທີແລນ | 800.000 | 300.000 | 360.500 | 139.500 | ບໍ່ໄດ້ກຳນົດການໃຊ້ |
| ນິວຊີແລນ | 323.758 | 140.108 | 108.805 | 74.845 | ບໍ່ໄດ້ກຳນົດການໃຊ້ |
| ນິວຊີແລນ | 284.166 | 158.553 | 73.219 | 52.394 | ຈ່າຍໃຫ້ຊ່ຽວຊານນິວຊີແລນ |
| ນໍເວ | 1.712.586 | 1.082.358 | 450.789 | 179.439 | ບໍ່ໄດ້ກຳນົດການໃຊ້ |
| ນໍເວ | 356.000 | 301.000 | 55.000 | 0 | ແຂວງເຊກອງ ແລະ ອັດຕະປື |
| ສະວີເດນ | 394.176 | 394.176 | 0 | 0 | ວຽກງານສຳຫຼວດ |
| ອັງກິດ | 138.020 | 138.020 | 0 | 0 | ທີ່ປຶກສາວິຊາການ |
| ສະຫະລັດອະເມລິກາ | 100.000 | 100.000 | 0 | 0 | ແຂວງຊຽງຂວາງ |
| ສະຫະລັດອະເມລິກາ | 360.000 | 0 | 0 | 360.000 | ຈັດຊື້ລົດບັນທຸກ |
| ສະຫະລັດອະເມລິກາ | 750.000 | 0 | 0 | 750.000 | ຝຶກອົບຮົມ |
| ຍີ່ປຸ່ນ | 242.924 | 0 | 0 | 242.924 | ບໍ່ໄດ້ກຳນົດການໃຊ້ |
| ການຊ່ວຍເຫຼືອເອກະເທດ | 780 | 773 | 0 | 7 | ບໍ່ໄດ້ກຳນົດການໃຊ້ |
| ດອກເບ້ຍບັນຊີ ກອງທຶນພິເສດ | 391.640 | 0 | 0 | 391.640 | ບໍ່ໄດ້ກຳນົດການໃຊ້ |
| ລວມກອງທຶນພິເສດ | **11.510.189** | **5.150.703** | **2.626.460** | **3.733.026** | |

## ກອງທຶນອື່ນໆ

| | | | | | |
|---|---|---|---|---|---|
| ສປຊ | 2.120.000 | 2.100.028 | 12.649 | 7.323 | ບໍ່ໄດ້ກຳນົດການໃຊ້ |
| ອົງການແມນໂນນາຍ | 25.000 | 0 | 12.325 | 12.675 | ແຂວງຫົວພັນ |
| ທຶນໝູນວຽນ ອ.ກ.ລ | 85.720 | 0 | 61.591 | 24.129 | ບໍ່ໄດ້ກຳນົດການໃຊ້ |
| ຢູນິເຊັບ | 0 | 0 | 0 | 0 | ຄສຊ |
| **ລວມກອງທຶນອື່ນໆ** | **2.230.720** | **2.100.028** | **86.565** | **44.127** | |
| ດູນດ່ຽງ | **13.740.909** | **7.250.731** | **2.713.025** | **3.777.153** | |

# ການຊ່ວຍເຫຼືອເປັນວັດຖຸ

| ແຫຼ່ງປະກອບສ່ວນ | 1996 98 | 1999 | ປະເພດການຊ່ວຍເຫຼືອ |
|---|---|---|---|
| **ລັດຖະບານ ສປປ ລາວ** | 98.500 | 78.700 | ຫ້ອງການ ແລະ ສິ່ງອໍານວຍຄວາມສະດວກ |
| **ສະຫະພັນເອີຣົບ**<br>ມອບໃຫ້ແມັກໂດຍກົງ | 1.252.000 | 0 | ການປະຕິບັດງານຢູ່ແຂວງສາລະວັນ |
| **DFID ອັງກິດ**<br>ມອບໃຫ້ແມັກໂດຍກົງ | 301.994 | 1.420.118 | ການປະຕິບັດງານຢູ່ແຂວງສາລະວັນ |
| **ເຢຍລະມັນ** | 2.876.877 | 1.000.000 | ການປະຕິບັດງານຢູ່ແຂວງຫຼວງພະບາງ ແລະ ທົ່ວພັນ |
| ມອບໃຫ້ເກເບຣາໂດຍກົງ<br>**ເຢຍລະມັນ** | 179.786 | 0 | ສະໜັບສະໜູນໂຄງການ |
| **ອົດສະຕຣາລີ**<br>ມອບໃຫ້ຢູນິເຊັບໂດຍກົງ | 304.970 | 40.000 | ສະໜັບສະໜູນວຽກງານ ຄສຊ |
| **ສະຫະພັນເອີຣົບ**<br>ມອບໃຫ້ HI ໂດຍກົງ | 215.093 | 925.175 | ການປະຕິບັດງານຢູ່ແຂວງສະຫວັນນະເຂດ ແລະ ຊ່ຽວຊານທີ່ປຶກສາ |
| **ນໍເວ**<br>ມອບໃຫ້ NPA ໂດຍກົງ | 914.700 | 800.000 | ທີ່ປຶກສາຢູ່ແຂວງເຊກອງ ແລະ ອັດຕະປື |
| **ສະຫະລັດອະເມລິກາ** | 6.489.781 | 2.500.000 | ຝຶກອົບຮົມ ແລະ ອຸປະກອນ |
| **ເບນຢຽມ**<br>ມອບໃຫ້ຊ່ຽວຊານເບນຢຽມໂດຍກົງ | 300.000 | 300.000 | ທີ່ປຶກສາຢູ່ແຂວງຈໍາປາສັກ |
| **ຊີດາ, ໂອດາ, ຊິດເຊ**<br>ມອບໃຫ້ແມັກໂດຍກົງ | 2.220.079 | 0 | ການປະຕິບັດງານຢູ່ແຂວງຊຽງຂວາງ |
| **ອົງການແຮນດິແຄັບສາກົນ**<br>ວຽກງານສໍາຫຼວດຂັ້ນ 1 | 213.690 | 0 | ຄົ້ນຄ້ວາຜົນກະທົບຕໍ່ເສດຖະກິດ ສັງຄົມ |
| **ອົດສະຕຣາລີ**<br>ມອບໂດຍກົງໃຫ້ອົງການສຸພານິມິດອົດສະຕຣາລີ | 0 | 165.577 | ທີ່ປຶກສາຢູ່ແຂວງຄໍາມ່ວນ |
| ລວມທັງໝົດ | **15.367.470** | **7.229.570** | |



ຮູບເທິງ: ເດັກນ້ອຍຊາຍຜູ້ນີ້ນັ່ງຢູ່ນຳຄອບຄົວລາວຢູ່ເຊກອງ, ລາວອະທິບາຍຮູບພາບໂຄສະນາ ອກລ, ຊີ້ໃສ່ຮູບລະເບີດບ້ອມບີ້ທີ່ໄດ້ປິດຊີວິດນ້ອງຊາຍລາວ. ຮູບລຸ່ມ: ຊາຍຜູ້ນີ້ບອກວ່າລູກບ້ອມບີ້ ທີ່ພົບເຫັນໃນບ້ານລາວມີແນວໃດແດ່ເພື່ອລາວຈະໄດ້ແກະເອົາໝື້ໄປລະເບີດເອົາປາ. ຮູບກາງ: ເອົາລູກລະເບີດມານຳໃຊ້ຫຼາຍແນວ. ບາງຄັ້ງລະເບີດບໍ່ມີໄພອັນຕະລາຍແຕ່ບາງຄັ້ງກໍ່ມີ. ໜ່ວຍງານເກັບກູ້ໄດ້ພົບວ່າລູກລະເບີດນີ້ຍັງມີແກັບຢູ່ແຕ່ປານນັ້ນກໍ່ບໍ່ແຕກ ເຖິງແມ່ນວ່າຊາຍຜູ້ນີ້ໄດ້ໃຊ້ເປັນໝ້າຖັ່ງຕີເຫຼັກມາຫຼາຍປີແລ້ວ. ລຸ່ມຂວາ: ເດັກນ້ອຍຍິງຜູ້ນີ້ກຳລັງຫິ້ວເອົານ້ຳໄປໃຊ້. ສັງເກດດີໆແລ້ວສາມາດອ່ານຂໍ້ແນະນຳເພື່ອຄວາມປອດໄພກ່ຽວກັບລູກໄຟ. ຮູບທັງໝົດນີ້ຊີ້ໃຫ້ເຫັນເຖິງຄວາມທ້າທາຍທີ່ວຽກສຶກສາຊຸມຊົນກຳລັງປະເຊີນຢູ່. ເຫດຜົນທີ່ປະຊາຊົນນຳໃຊ້ລະເບີດເຫຼົ່ານີ້ ເຖິງແມ່ນວ່າຈະມີໄພອັນຕະລາຍກໍ່ຍ້ອນເຫດຜົນເສດຖະກິດບັງຄັບ.ພາບໂດຍ Jim Holmes/UNICEF.







# ເອກະສານແນບທ້າຍ 1: ແຜນທີ່ : ລະດັບຜົນກະທົບ ແລະ ການປະຕິບັດງານ ໃນບັນດາແຂວງ



ເອກະສານແນບທ້າຍ 2

# ໂຄງການແຫ່ງຊາດ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ** ເປັນອົງກອນລັດຖະບານລາວຮັບຜິດຊອບປະຕິບັດໂຄງການ ອ ກ ລ

**ຄະນະກຳມະການຊີ້ນຳ ອກລ** ແມ່ນອົງກອນສ້າງນະໂຍບາຍ ແລະ ຕັດສິນບັນຫາຂອງ ອກລ. ຄະນະໃຫ້ການແນະນຳ ແລະຕິດຕໍ່ໂຄງການ. ສະມາຊິກຄະນະມີລັດຖະມົນຕີ ກ/ຊ ແຮງງານ ແລະສະຫວັດດີການສັງຄົມ, ຕາງໜ້າ ກ/ຊ ຕ່າງປະທດ, ປ້ອງກັນຊາດ, ແລະ ຕາງໜ້າ UNDP ແລະ UNICEF

**ສຳນັກງານໃຫຍ່ວຽງຈັນ** ເຮັດວຽກວາງແຜນຕໍ່ເນື່ອງ, ເຮັດລາຍງານ, ວຽກປົກຄອງການເງິນ ແລະສະໜັບສະໜູນດ້ານສຳພາລະແກ່ໂຄງການ. ມັນແມ່ນຈຸດພົວພັນແຫ່ງຊາດສຳລັບກະຊວງຕ່າງໆ, ຜູ້ໃຫ້ທຶນ, ອົງການຈັດຕັ້ງສາກົນ ແລະນັກຂ່າວ. ສຳນັກງານໃຫຍ່ວຽງຈັນລວມມີທັງສູນຝຶກອົບຮົມແຫ່ງຊາດປະກອບດ້ວຍພ/ງ ລາວສະໜັບສະໜູນໂດຍທີ່ປຶກສາວິຊາການສາກົນ 7 ຄົນ.

**ຫ້ອງການແຂວງ** - ມີໜ້າທີ່ກຳນົດໜ້າວຽກຕ່າງໆ ແລະບູລິມະສິດດ້ານໂຄສະນາສຶກສາຊຸມຊົນ, ສຳຫຼວດ ແລະປະຕິບັດການເກັບກູ້. ຢູ່ຫ້ອງການແຂວງ 9 ແຂວງມີຜູ້ປະສານງານ ອກລ, ເຂົາຈະປະສານທຸກໆກິດຈະກຳພົວພັນເຖິງວຽກລູກລະເບີດບໍ່ທັນແຕກພາຍໃນແຂວງຕົນເອງ. ຫ້ອງການນີ້ຢູ່ໃຕ້ພະແນກແຮງງານ ແລະສະຫວັດດີການແຂວງ.

**ຄູ່ຮ່ວມປະຕິບັດງານ**

ເຮັດວຽກຮ່ວມກັບ ອກລ ເປັນທີ່ປຶກສາວິຊາການສາກົນເພື່ອສ້າງຄວາມສາມາດໃຫ້ແກ່ຄູ່ຮ່ວມງານ ລາວ ໃນ ພາກ ສະໜາມ.ໃນນັ້ນກໍ່ມີຂະແໜງການສ້າງຄວາມຊຳນານເຕັກນິກດ້ານທຳລາຍລະເບີດ,ໂຄສະນາສຶກສາຊຸມຊົນ, ສຳຫຼວດ ແລະບໍລິຫານຄຸ້ມຄອງ.

# ຈຳນວນພະນັກງານ ທີ່ປະຕິບັດງານນຳໂຄງການເກັບກູ້ລະເບີດແຫ່ງ ສ ປ ປ ລາວ, ພາຫະນະ ແລະ ອຸປະກອນ.

## Number of Personnel Working with UXO LAO, Vehicles and equipments 1999.

| ແຂວງ / Provinces | ຈ/ນ ພະນັກງານທັງ / Staff Total: ລວມ Total | ອກລ UXO | ຄຮງ IP | ພ/ງ ຂັ້ນແຂວງ / Prov.HO Staff: ລວມ Total | ອກລ UXO | ຄຮງ IP | ພ/ງ ຂັ້ນເມືອງ / District Staff: ລວມ Total | ອກລ UXO | ຄຮງ IP | ຈ/ນ ໜ່ວຍງານ / No.of Teams: No. Dem.Teams | No.Sur.Teams | No.CA Teams | ຫົວໜ້າໜ່ວຍ / Team Leader: ລວມ Total | ອກລ UXO | ຄຮງ IP | ຫົວໜ້າໝວດ / Section Leader: ລວມ Total | ອກລ UXO | ຄຮງ IP | ພ/ງ ເກັບກູ້ / Deminers: ລວມ Total | ອກລ UXO | ຄຮງ IP |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ຫ້ອງການ ອ.ກ.ລ ວຽງຈັນ(ລວມທັງສູນຝຶກ) | 53 | 53 | | | | | | | | | | | | | | | | | | | |
| ຊຽງຂວາງ | 182 | 1 | 181 | 1 | 1 | 0 | 0 | 0 | 0 | 11 | 1 | 5 | 16 | 0 | 16 | 17 | 0 | 17 | 77 | 0 | 77 |
| ຫົວພັນ | 97 | 94 | 3 | 4 | 3 | 1 | 0 | 0 | 0 | 6 | 1 | 1 | 7 | 7 | 0 | 10 | 10 | 0 | 51 | 51 | 0 |
| ສະຫວັນນະເຂດ | 156 | 148 | 8 | 4 | 4 | 0 | 4 | 4 | 0 | 2 | 2 | 3 | 2 | 2 | 0 | 9 | 9 | 0 | 82 | 82 | 0 |
| ສາລະວັນ | 121 | 121 | 0 | 5 | 5 | 0 | 0 | 0 | 0 | 3 | 2 | 2 | 3 | 3 | 0 | 9 | 9 | 0 | 45 | 45 | 0 |
| ຈຳປາສັກ | 74 | 74 | 0 | 5 | 5 | 0 | 0 | 0 | 0 | 3 | 2 | 2 | 3 | 3 | 0 | 5 | 5 | 0 | 25 | 25 | 0 |
| ເຊກອງ | 89 | 87 | 2 | 7 | 7 | 0 | 0 | 0 | 0 | 4 | 2 | 2 | 4 | 4 | 0 | 7 | 7 | 0 | 36 | 36 | 0 |
| ຄຳມ່ວນ | 62 | 53 | 9 | 6 | 3 | 3 | 1 | 1 | 0 | 3 | 1 | 2 | 3 | 3 | 0 | 4 | 4 | 0 | 18 | 18 | 0 |
| ອັດຕະປື | 88 | 86 | 2 | 5 | 5 | 0 | 2 | 2 | 0 | 3 | 2 | 1 | 3 | 3 | 0 | 9 | 9 | 0 | 44 | 44 | 0 |
| ຫຼວງພະບາງ | 54 | 51 | 3 | 3 | 3 | 0 | 1 | 1 | 0 | 3 | 1 | 2 | 3 | 3 | 0 | 0 | 0 | 0 | 22 | 22 | 0 |
| **ລວມທັງໝົດ** | **976** | **768** | **208** | **40** | **36** | **4** | **8** | **8** | **0** | **38** | **14** | **20** | **44** | **28** | **16** | **70** | **53** | **17** | **400** | **323** | **77** |

| ແຂວງ / Provinces | ພ/ງ ສຳຫຼວດ / Surveyors: ລວມ Total | ອກລ UXO | ຄຮງ IP | ພ/ງ ແພດ / Medics: ລວມ Total | ອກລ UXO | ຄຮງ IP | ທພນ.ໂຄສະນາ / CA TLD: ລວມ Total | ອກລ UXO | ຄຮງ IP | ພ/ງ ໂຄສະນາ / CA: ລວມ Total | ອກລ UXO | ຄຮງ IP | ແປພາສາ / Translators: ລວມ Total | ອກລ UXO | ຄຮງ IP | ພ/ງ ຂັບລົດ / Drivers: ລວມ Total | ອກລ UXO | ຄຮງ IP | ພ/ງ ຍາມ / Guards: ລວມ Total | ອກລ UXO | ຄຮງ IP | ພ/ງ ອານາໄມ / Cleaners: ລວມ Total | ອກລ UXO | ຄຮງ IP |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ຫ້ອງການ ອ.ກ.ລ ວຽງຈັນ(ລວມທັງສູນຝຶກ) | | | | | | | | | | | | | | | | | | | | | | | | |
| ຊຽງຂວາງ | 2 | 0 | 2 | 11 | 0 | 11 | 5 | 0 | 5 | 16 | 0 | 16 | 3 | 0 | 3 | 19 | 0 | 19 | 9 | 0 | 9 | 6 | 0 | 6 |
| ຫົວພັນ | 4 | 4 | 0 | 6 | 6 | 0 | 1 | 1 | 0 | 6 | 6 | 0 | 2 | 0 | 2 | 6 | 6 | 0 | 0 | 0 | 0 | 0 | 0 | 0 |
| ສະຫວັນນະເຂດ | 4 | 4 | 0 | 10 | 10 | 0 | 3 | 3 | 0 | 14 | 14 | 0 | 5 | 0 | 5 | 16 | 13 | 3 | 2 | 2 | 0 | 1 | 1 | 0 |
| ສາລະວັນ | 4 | 4 | 0 | 9 | 9 | 0 | 3 | 3 | 0 | 7 | 7 | 0 | 4 | 4 | 0 | 15 | 15 | 0 | 10 | 10 | 0 | 7 | 7 | 0 |
| ຈຳປາສັກ | 4 | 4 | 0 | 5 | 5 | 0 | 2 | 2 | 0 | 10 | 10 | 0 | 3 | 3 | 0 | 8 | 8 | 0 | 3 | 3 | 0 | 1 | 1 | 0 |
| ເຊກອງ | 4 | 4 | 0 | 7 | 7 | 0 | 2 | 2 | 0 | 10 | 10 | 0 | 2 | 0 | 2 | 9 | 9 | 0 | 1 | 1 | 0 | 0 | 0 | 0 |
| ຄຳມ່ວນ | 2 | 2 | 0 | 2 | 2 | 0 | 2 | 2 | 0 | 10 | 10 | 0 | 2 | 0 | 2 | 5 | 5 | 0 | 7 | 3 | 4 | 0 | 0 | 0 |
| ອັດຕະປື | 4 | 4 | 0 | 5 | 5 | 0 | 1 | 1 | 0 | 5 | 5 | 0 | 2 | 0 | 2 | 7 | 7 | 0 | 1 | 1 | 0 | 0 | 0 | 0 |
| ຫຼວງພະບາງ | 2 | 2 | 0 | 3 | 3 | 0 | 2 | 2 | 0 | 12 | 12 | 0 | 3 | 0 | 3 | 3 | 3 | 0 | 0 | 0 | 0 | 0 | 0 | 0 |
| **ລວມທັງໝົດ** | **30** | **28** | **2** | **58** | **47** | **11** | **21** | **16** | **5** | **90** | **74** | **16** | **26** | **7** | **19** | **88** | **66** | **22** | **33** | **20** | **13** | **15** | **9** | **6** |

| ແຂວງ / Provinces | ຊ່ຽວຊານ / TA | ພາຫະນະ/Vehicles – Motorcycles: ລວມ Total | ອກລ UXO | ຄຮງ IP | Other Vehicles: ລວມ Total | ອກລ UXO | ຄຮງ IP | ວິທະຍຸສື່ສານ / Radio: Total | HF | VHF | ເຄື່ອງກວດລະເບີດ / Mine Detectors | ອົງການ / TA Agency | ວັນເລີ້ມຕົ້ນປະຕິບັດງານ / Started Date | ເນື້ອທີ່ເກັບກູ້,ເຮັກຕາ / Land cleared, Hectures |
|---|---|---|---|---|---|---|---|---|---|---|---|---|---|---|
| ຫ້ອງການ ອ.ກ.ລ ວຽງຈັນ(ລວມທັງສູນຝຶກ) | 5 | 3 | 3 | | 5 | 5 | | 32 | 2 | 30 | | | | |
| ຊຽງຂວາງ | 1 | 11 | 1 | 10 | 20 | 1 | 19 | 85 | 5 | 80 | 100 | MAG | 01.Oct.94 | 11.6200 |
| ຫົວພັນ | 2 | 6 | 6 | 0 | 8 | 1 | 7 | 28 | 4 | 24 | 47 | Gerbera | 15.Nov.96 | 6.5800 |
| ສະຫວັນນະເຂດ | 5 | 7 | 6 | 1 | 19 | 13 | 6 | 43 | 9 | 34 | 125 | Handicap | 01.Apr.97 | 6.7864 |
| ສາລະວັນ | 3 | 8 | 2 | 6 | 18 | 1 | 17 | 65 | 4 | 61 | 64 | MAG | 01.Jul.97 | 1.9100 |
| ຈຳປາສັກ | 4 | 4 | 3 | 1 | 10 | 8 | 2 | 17 | 7 | 10 | 22 | Belgium | 22.Sep.97 | 2.2833 |
| ເຊກອງ | 2 | 3 | 3 | 0 | 11 | 9 | 2 | 17 | 7 | 10 | 51 | NPA | 01.Oct.97 | 0.7033 |
| ຄຳມ່ວນ | 2 | 6 | 3 | 3 | 10 | 6 | 4 | 18 | 8 | 10 | 26 | World Vision | 01.Jan.99* | 0.7245 |
| ອັດຕະປື | 2 | 3 | 3 | 0 | 9 | 9 | 0 | 23 | 7 | 16 | 52 | NPA | 01.Oct.97 | 1.0275 |
| ຫຼວງພະບາງ | 2 | 2 | 2 | 0 | 6 | 2 | 4 | 16 | 6 | 10 | 26 | Gerbera | 22.Apr.98 | 0.9985 |
| **ລວມທັງໝົດ** | **28** | **53** | **32** | **21** | **116** | **55** | **61** | **344** | **59** | **285** | **513** | | | **32.6335** |

**Chief of Operations Section**

Notes: * Community Awareness Started 09.Feb.98

UXO - UXO LAO;

IP - Implementing partner.

ໝາຍເຫດ: * ວຽກງານໂຄສະນາສຶກສາຊຸມຊົນ ໄດ້ເລີ້ມຕົ້ນໃນ ວັນທີ 09/02/1998

ອກລ -ອົງການເກັບກູ້ລະເບີດແຫ່ງ ສ.ປ.ປ ລາວ;

ຄຮງ -ຄູ່ຮ່ວມງານ.

*Issued By OPS (UXO LAO)*

*As at 31 December 1999*

ເອກະສານແນບທ້າຍ 3



Jim Holmes/UNICEF

## ບັນດາປະເທດທີ່ໃຫ້ການຊ່ວຍເຫຼືອແກ່ໂຄງການໃນປະຈຸບັນ

- ອົດສະຕາລີ
- ເບນຢ້ຽມ
- ການາດາ
- ເດນມາກ
- ສະຫະພາບ ຢູໂຣບ
- ຟິນແລນ
- ເຢຍລະມັນ
- ຍີ່ປຸ່ນ
- ສ ປ ປ ລາວ
- ລຸກຊຳເບີກ
- ເນເທີແລນ
- ນິວຊີແລນ
- ນໍເວ
- ອັງກິດ
- ສະຫະລັດ ອະເມລິກາ
- ສ ປ ຊ
- ຢູນີເຊັບ
- ອາສາສະໝັກ ສປຊ

# ຄວາມຮູ້ກ່ຽວກັບ ອ.ກ.ລ

ອ.ກ.ລ ພວກເຮົາເປັນອົງການລະດັບຊາດ ທີ່ມີຖານະນິຕິບຸກຄົນຮັບຜິດຊອບທຸກວຽກງານໂຄສະນາສຶກສາຊຸມຊົນ ແລະ ເກັບກູ້ທຳລາຍລະເບີດບໍ່ທັນແຕກທີ່ຍັງຕົກຄ້າງຢູ່ ສ ປ ປ ລາວ ສ້າງຕັ້ງຂຶ້ນໂດຍດຳລັດຂອງນາຍົກລັດຖະມົນຕີໃນປີ 1996 ປະຈຸບັນພວກເຮົາໄດ້ນຳໃຊ້ແຮງງານລາວເຂົ້າເຮັດວຽກເກັບກູ້ທຳລາຍລະເບີດ, ສຳຫຼວດເກັບກຳຂໍ້ມູນ, ໂຄສະນາສຶກສາຊຸມຊົນ ແລະ ຄູຝຶກລວມທັງໝົດຫຼາຍກ່ວາ 1000 ຄົນ, ຢູ່ໃນ 9 ແຂວງ ທີ່ໄດ້ຮັບອະນຸມັດໃຫ້ເກັບກູ້ທຳລາຍລະເບີດ. ໂດຍໄດ້ຮັບການສະໜັບສະໜູນຈາກກອງທຶນພິເສດ ເພື່ອການເກັບກູ້ລະເບີດທີ່ບໍ່ທັນແຕກຢູ່ ສປປ ລາວ, ອ.ກ.ລ ຈະສືບຕໍ່ຝຶກອົບຮົມກໍ່ສ້າງພະນັກງານລາວໄປອີກເປັນທົດສະວັດ, ໃນດ້ານການສຳຫຼວດເກັບກຳຂໍ້ມູນ, ໂຄສະນາສຶກສາຊຸມຊົນ ແລະ ເກັບກູ້ທຳລາຍລະເບີດຢູ່ບັນດາທ້ອງຖິ່ນທີ່ຍັງມີລູກລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ຢ່າງໜັກໜ່ວງ. ການຫຼຸດຜ່ອນຄວາມສ່ຽງໄພຈາກລູກລະເບີດທີ່ບໍ່ທັນແຕກເປັນວຽກງານທີ່ຈຳເປັນຕ້ອງໄດ້ເຮັດຢ່າງຍາວນານ ແລະ ກໍ່ເປັນວຽກງານໜຶ່ງທີ່ຮຽກຮ້ອງຕ້ອງການການຊ່ວຍເຫຼືອຢ່າງຍາວນານ ແລະ ຕໍ່ເນື່ອງຈາກສາກົນ.

ບ່ອນຕິດຕໍ່ກັບພວກເຮົາ: ຜູ້ອຳນວຍການ ອ.ກ.ລ
ຕູ້ ປ ນ 345, ວຽງຈັນ ສ ປ ປ ລາວ
*ໂທລະສັບ:* (+85621) 414896/415767
*ໂທລະສານ:* (+85621) 415766
*ອີເມວ:* uxolao@laotel.com

Web site
www.uxolao.org

# ບົດສະຫຼຸບ ປີ 1999

ຕ້ອງການລາຍລະອຽດເພີ່ມເຕີມກະລຸນາເບິ່ງ website: http://www.uxolao.org, ຫຼື ພົວພັນ:
ຜູ້ອຳນວຍການ, ອ.ກ.ລ ຕູ້ ປ ນ 345, ວຽງຈັນ, ສ ປ ປ ລາວ
ອີເມວ: uxolao@laotel.com ໂທລະສັບ: (+856-21)414896, 415767 ໂທລະສານ (+856-21)415766



ບັນດາອົງການຄູ່ຮ່ວມປະຕິບັດງານຂອງ ອ.ກ.ລ

MAG — MINES ADVISORY GROUP — HUMANITARIAN MINE ACTION
GERBERA DEMINING
HANDICAP INTERNATIONAL
NORWEGIAN PEOPLES AID
CHAMPASSAK
World Vision Australia
undp
unice